

ແປ ແລະຮຽບຮຽງໂດຍ: ຮຸລ ສົມໄພ ວິໄລສັກ

2009

# ຄຳນຳ

ປື້ມປະຫວັດສາດອາລະຍະທຳໂລກ ຍຸກປັດຈຸບັນ – ຍຸກຟື້ນຟູສິລະປະວິທະຍາການ (Renaissance) ສະບັບນີ້, ເກືອບຮ້ອຍເປີເຊັນແມ່ນໄດ້ແປ ແລະຮຽບຮຽງມາຈາກປື້ມປະຫວັດສາດອາລະຍະທຳໂລກ ( World History and Civilization) ເຊິ່ງຂຽນໂດຍ: ຮອງສາດສະດາຈານ ບັນທະນາ ກະປິນການ ຈະນະ, ພ.ສ. 2538 ສະບັບພາສາໄທ. ພ້ອມນັ້ນ, ຂໍ້ມູນອີກສ່ວນໜ້ອຍທີ່ສຸດແມ່ນເອົາມາຈາກ ປື້ມ ປະຫວັດສາດໂລກ ຊັ້ນມັດທະຍົມປາຍ, ກະຊວງສຶກສາທິການຂອງລາວ.

ປື້ມສະບັບນີ້, ຮຽບຮຽງຂຶ້ນມາເພື່ອຮັບໃຊ້ໃຫ້ແກ່ການຮຽນ – ການສອນຢູ່ພາກວິຊາພາສາລາວ – ສື່ສານມວນຊົນໂດຍສະເພາະ ແມ່ນພາກວິຊາສື່ສານມວນຊົນປີທີ 2 ຕາມໂຄງການຫຼັກສູດການຮຽນ – ການສອນຂອງພາກວິຊາ ເພື່ອໃຫ້ນັກສຶກສາໄດ້ຮັບຄວາມຮູ້ດ້ານປະຫວັດສາດ, ສິລະປະວິທະຍາການ, ປັດຊະຍາ, ອາລະຍະທຳຂອງບັນດາ ນານາ ອະລັນຍະປະເທດຢູ່ໃນໂລກ ທີ່ມີການປ່ຽນແປງໂຄງສ້າງທາງສັງຄົມຂອງປະເທດ ແລະໄດ້ກາຍມາເປັນປະເທດທີ່ຈະເລີນ ແລ້ວໃນປັດຈຸບັນ. ສະນັ້ນ, ການຮຽນຮູ້ເຫດການປະຫວັດສາດຂອງປະເທດໃນໂລກນີ້, ມັນເປັນການນຳເອົາຄວາມຮູ້ມາພັດ ທະນາທັກສະຂອງຕົນເອງ ເພື່ອໃຫ້ເກີດປະໂຫຍດໃນອາຊີບຂອງຕົນຢ່າງຊອບທຳ.

ຜົນສຳເລັດຂອງປື້ມສະບັບນີ້, ໄດ້ຮັບການຊ່ວຍເຫຼືອດ້ານການພິມຄອມພິວເຕີ, ຈັດໜ້າແລະສແກນພາບ ຈົນກາຍເປັນປື້ມທີ່ສົມບູນ ໂດຍ: ຟ້າມກວັກຟຸ່ງ ນັກສຶກສາຫວຽດນາມປີທີ 5 ຊຸດທີ VIII ປີການສຶກສາ 2007 – 2008 ແລະບຸຍຊວນຕູນັກສຶກສາປີ 2 ສື່ສານມວນຊົນ. ດັ່ງນັ້ນຈຶ່ງຂໍຂອບໃຈຢ່າງຍິ່ງ ມາຍັງທ່ານຜູ້ໃຫ້ການຊ່ວຍເຫຼືອການພິມ ແລະຈັດທຳປື້ມຕົ້ນສະບັບຄັ້ງນີ້ດ້ວຍ.

ທີ່ພາກວິຊາ ພ.ລ.ສ

2009

| ຄຳນຳ | ສາລະບານ | ໜ້າ |
|---|---|---|

## ບົດທີ 1

## ສະພາບປະຫວັດສາດ ອາລະຍະທຳໂລກແຕ່ລະຍຸກ ໂດຍສັງເຂບ


1 ຈຸດມຸ່ງໝາຍຂອງວິຊາປະຫວັດສາດອາລະຍະທຳໂລກ 1

2 ປະໂຫຍດຂອງການຮຽນຮູ້ປະຫວັດສາດອາລະຍະທຳໂລກ 1

3 ຄວາມແຕກຕ່າງລະຫວ່າງປະຫວັດສາດ, ອາລະຍະທຳແລະວັດທະນະທຳ. 2

4 ອາລະຍະທຳສະໄໝກ່ອນປະຫວັດສາດ 3

5 ມະນຸດກ່ອນສະໄໝປະຫວັດສາດ 5

6 ອາລະຍະທຳສະໄໝປະຫວັດສາດ 7


## ບົດທີ 2

## ອາລະຍະທຳໂລກປັດຈຸບັນ – ຍຸກຢູໂຣບຟື້ນຟູ ສິລະປະວິທະຍາການ


1 ຄວາມໝາຍຂອງຄຳວ່າຟື້ນຟູ 8

2 ຄວາມໝາຍຂອງຄຳວ່າ ມະນຸດນິຍົມ 9

3 ສາເຫດທີສະໄໝຟື້ນຟູສິລະປະວິທະຍາການກຳເນີດໃນອີຕາລີ 9

4 ຂະບວນການຟື້ນຟູສິລະປະວິທະຍາການ 10

5 ນັກຂຽນມະນຸດນິຍົມ 11

6 ສາຖາປັດຕະຍະກຳ ແລະສິລະປະກຳໃນຍຸກຟື້ນຟູສິລະປະວິທະຍາການ 13

7 ປັດຊະຍາການເມືອງ ຍຸກຟື້ນຟູໃນ ອີຕາລີ 15

8 ດ້ານວິທະຍາສາດ 16

9 ດ້ານສະລິລະວິທະຍາ ແລະການແພດ 16

10 ດ້ານດົນຕີ 16


## ບົດທີ 3

## ສະໄໝລັດແຫ່ງຊາດ


1 ລາຊາທິປະໄຕສະໄໝໃໝ່ໃນປະເທດສະເປນ 17

2 ສະເປນໃນສະໄໝຂອງຈັກກະພັດ ຊາຣັດທີຫ້າ ແລະພະເຈົ້າ ຟີລິບທີສອງ 17

3 ລັດທິພານິດຊາດນິຍົມ 18

4 ສົງຄາມກູ້ເອກະລາດ ຮໍລັນດາ ແລະກອງທັບເຮືອ ອາມາດາ. 19

5 ລາຊາທິປະໄຕສະໄໝ ຝຣັ່ງ 19

6 ລັດທິພານິດນິຍົມ ແລະ ໂຄແບ 20

7 ສົງຄາມໃນສະໄໝພະເຈົ້າຫລຸຍທີສິບສີ່ 21
8 ສົງຄາມສືບລາຊະສົມບັດ ສະເປນ 22
9 ສົງຄາມ ເຈັດປີ 22


## ບົດທີ 4

## ການປະຕິຮູບສາສະໜາ ແລະການກຳເນີດ ນິກາຍ ໂປເຕັດສແຕນ


1 ສາເຫດແຫ່ງການປະຕິຮູບສາສະໜາ 23
2 ນັກປະຕິຮູບສາສະໜາ ມາຕິນລູເທີ (ຄ.ສ 1483 - 1546) 24
3 ນິກາຍໂປເຕັດສແຕັນທີສຳຄັນ 25
4 ກະແສຕໍ່ຕ້ານການປະຕິຮູບສາສະໜາ(ຄ.ສ 1534 - 1598) 26
5 ຜົນດີ ແລະຜົນຮ້າຍຂອງການປະຕິຮູບສາສະໜາ 26


## ບົດທີ 5

## ຍຸກແຫ່ງການຄົ້ນພົບແຜ່ນດິນໃໝ່ ແລະການ ຂະຫຍາຍຕົວຂອງ ຢູໂຣບ ໃນສະຕະວັດ XV – XVII


1 ການສະແຫວງຫາອານານິຄົມໃນໂລກໃໝ່ຂອງປອກຕຸຍການ ໃນອັບຟຣິກກາແລະອິນເດຍ 27
2 ການສະແຫວງຫາອານານິຄົມໃນໂລກໃໝ່ຂອງ ສເປນ ແລະປອກຕຸຍການ 28
3 ຜົນຂອງການຄົ້ນພົບທະວີບອາເມຣິກາ 29
4 ການສຳຫຼວດເສັ້ນທາງເດີນເຮືອທາງເໜືອ 30
5 ການສຳຫຼວດຕັ້ງຖິ່ນຖານໃນທະວີບອັບຟຣິກກາ 30
6 ການສຳຫຼວດ ແລະຕັ້ງຖິ່ນຖານໃນທະວີບອົອດສຕເຣເລຍ 30


## ບົດທີ 6

## ການປະຕິວັດທາງພູມປັນຍາໃນສະຕະວັດທີ XVII – XVIII


1 ນັກປະຕິວັດທາງພູມປັນຍາໃນສະຕະວັດທີ XVII 31
2 ຍຸກແຫ່ງຄວາມຮູ້ແຈ້ງ (The Enlightenment) 33
3 ປັດຊະຍາເອກຍຸກແຫ່ງຄວາມຮູ້ແຈ້ງໃນສະຕະວັດທີ XVIII 34
4 ລັດທິສາສະໜາຍຸກແຫ່ງຄວາມຮູ້ແຈ້ງ (Enlightenment) 34


## ບົດທີ 7

## ການປະຕິວັດໃນອັງກິດ, ອາເມຣິກາ ແລະຝຣັ່ງ


I ການປະຕິວັດໃນອັງກິດ 35
1 ລາຊະການພະເຈົ້າ ຊາຣັດທີໜຶ່ງ 35
2 ລາຊະການພະເຈົ້າຊາຣັດທີສອງ 37

3 ການປະຕິວັດທີປະສົບຜົນສຳເລັດ (the glorious Revolution) 37

**II ການປະຕິວັດກອບກູ້ອິສະຫຼະພາບອາເມຣິກາ (The American Revolution)** 38

1 ສາເຫດ 38

2 ພຶດຕິກຳທີ່ກໍ່ໃຫ້ເກີດການປະຕິວັດ 38

3 ປາກົດການໃບຊາທີ່ ບອດສຕັນ (Boston Tea Party) 39

4 ການສູນເສຍອານານິຍົມໃນອາເມຣິກາເໜືອ ຂອງອັງກິດ. 40

**III ການປະຕິວັດ ຝຣັ່ງ 1789 ( The French Revolution)** 41

1 ເຫດຜົນຂອງການປະຕິວັດ 41

2 ໄລຍະຕົ້ນຂອງການປະຕິວັດ 42

3 ຜົນສຳເລັດຂອງການປະຕິວັດໃນໄລຍະຕົ້ນ ( 1789 - 1791) 42

4 ຜົນສຳເລັດຂອງການປະຕິວັດໄລຍະສອງ 44

5 ການປະຕິວັດໄລຍະທີສາມ ( 1795 - 1799) 44

1 2 3 4 5 6 7 8 9

# ປະຫວັດສາດອາລະຍະທຳໂລກ

# (World History and Civilization)

## ບົດທີ1

## ສະພາບປະຫວັດສາດອາລະຍະທຳໂລກ ແຕ່ລະຍຸກໂດຍສັງເຂບ

### 1. ຈຸດມຸ່ງໝາຍຂອງວິຊາປະຫວັດສາດອາລະຍະທຳໂລກ

ວິຊາປະຫວັດສາດອາລະຍະທຳໂລກແມ່ນ ວິທະຍາສາດສັງຄົມຂະແໜງໜຶ່ງທີ່ສະໜອງຄວາມຮູ້ກ່ຽວກັບຄວາມເປັນມາ, ຄວາມຈະເລີນຮຸ່ງເຮືອງກ້າວໜ້າ, ~~ຄວາມສຸດໂຊມ~~, ການປ່ຽນແປງຂອງສັງຄົມຕະຫລອດເຖິງການຟື້ນຟູທີ່ເດັ່ນຊັດທີ່ເກີດຂຶ້ນຢູ່ໃນບັນດາປະເທດຕ່າງໆໃນໂລກ ເຊິ່ງນັບແຕ່ສະໄໝກ່ອນປະຫວັດສາດຈົນມາເຖິງສະໄໝປັດຈຸບັນ.

ປະຫວັດສາດອາລະຍະທຳໂລກ ແມ່ນການເລົ່າເຖິງເລື່ອງຫລືເຫດການສຳຄັນຕ່າງໆທີ່ມະນຸດໃນສະໄໝກ່ອນສ້າງໄວ້ ແລະຮວມທັງຄວາມສຳເລັດແລະຄວາມຫລົ້ມຫລຽວຕະຫລອດເຖິງສິ່ງທີ່ມະນຸດບູຮານປະດິດ ສ້າງຂຶ້ນໃນດ້ານສິລະປະປະຕິມາກຳ, ວິຈິດຕະກຳ, ການເມືອງ, ການປົກຄອງ, ສົງຄາມ, ສາສະໜາ, ປັດຊະຍາ, ວິທະຍາສາດ, ອຸດສາຫະກຳແລະສິ່ງຫລືປະກົດການຢ່າງອື່ນໆ.

ສະນັ້ນ,ການສຶກສາຮຽນຮູ້ບັນດາເຫດການຕ່າງໆ ທີ່ເກີດຂຶ້ນໃນບົນໂລກໃນສະໄໝປະຫວັດສາດ, ສະໄໝທີ່ມວນມະນຸດຊາດຍັງບໍ່ທັນຮູ້ຈັກປະດິດໜັງສືຂຽນ ຫລືບັນທຶກຈົດກ່າຍເລື່ອງຕ່າງໆ ໄວ້ເປັນລາຍລັກອັກສອນນັ້ນຈຶ່ງເອີ້ນວ່າ: "ສະໄໝກ່ອນປະຫວັດສາດ." ສ່ວນວ່າ,ສະໄໝທີ່ມວນມະນຸດຮູ້ຈັກຂີດຂຽນໜັງສື, ຮູ້ບັນທຶກເຫດການທີ່ເກີດຂຶ້ນໄວ້ເປັນຫລັກຖານດ້ວຍລາຍລັກອັກສອນແລ້ວນັ້ນຈຶ່ງເອີ້ນວ່າ"ສະໄໝປະຫວັດສາດ "ສະໄໝປະຫວັດສາດເຊິ່ງມີມາໄດ້ປະມານ 5000 ປີກ່ອນຄຣິດຕະການມາແລ້ວ.ເຫດການຕ່າງໆໃນສະໄໝນີ້ຮຽກວ່າ: (ເຫດການໃນສະໄໝປະຫວັດສາດ) ເອີ້ນຕາມພາສາອັງກິດວ່າ: "The Age of Recorded History"

### 2. ປະໂຫຍດຂອງການຮຽນຮູ້ປະຫວັດສາດອາລະຍະທຳໂລກ

ການຮຽນຮູ້ວິຊາປະຫວັດສາດອາລະຍະທຳໂລກ ຈຶ່ງໄດ້ປະໂຫຍດຫລາຍຢ່າງທາງດ້ານສັງຄົມສາດ, ວິທະຍາສາດ, ການປົກຄອງແລະອື່ນໆ. ພ້ອມນັ້ນຊ່ວຍໃຫ້ຄົນເຮົາໄດ້ຮັບຮູ້ປະສົບການຈາກໂລກເຊັ່ນ

- ຊ່ວຍໃຫ້ຄົນເຮົາຮັບຮູ້ແລະເຂົ້າໃຈ ເຖິງເຫດການທີ່ເປັນມາຢູ່ໃນໂລກທີ່ກວ້າງໄກຈາກຕົວເຮົາ, ເມື່ອມີຄວາມຈຳເປັນປະເຊີນກັບບັນຫາເຮົາກໍຫາວິທີແກ້ໄຂ ໂດຍອາໄສປະສົບການໃນອະດີດເຂົ້າຊ່ວຍເພື່ອໃຫ້ບັງເກີດຜົນຕໍ່ອະນາຄົດ.

_ ເຮົາສາມາດນຳເອົາເຫດການ, ເລື່ອງສຳຄັນຕ່າງໆຫລືລາຍລະອຽດມາຮວມກັນເພື່ອອະທິບາຍຄວາມເປັນມາໃນສິ່ງຕ່າງໆໄດ້ດີເຊັ່ນ ການປ່ຽນແປງຂອງທຳມະຊາດເຊິ່ງເປັນສີມື,ສະຕິປັນຍາຂອງມະນຸດ,ການກໍ່ສ້າງຕະຫລອດເຖິງສິ່ງມະຫັດສະຈັນອື່ນໆ ໃນໂລກເຊິ່ງມັນມີຄວາມເປັນມາແນວໃດເຊັ່ນຈາກທ້ອງທະເລສາບກາຍມາເປັນຕົວເມືອງໃຫຍ່ແລະທັນສະໄໝ,ຈາກຫີນກ້ອນທຳມະດາເປັນມະຕິມາກຳຫລືສິ່ງກໍ່ສ້າງທີ່ມະຫີມາຫລືເປັນທໍ່ພະສາດລາຊະວັງ ແລະກາຍເປັນສິ່ງມະຫັດສະຈັນອື່ນໆຂອງໂລກນັບທັງສິ່ງທີ່ສູນຫາຍໄປແລ້ວ ແລະທັງທີ່ຍັງຢູ່ໃນປັດຈຸບັນອີກດ້ວຍ.

_ ຊ່ວຍໃຫ້ຜູ້ຮຽນຮູ້ເກີດຄວາມສຸກ,ຄວາມເພີດເພີ່ນກັບຄວາມຫຼັງ(Back round Infomation)ເຮົາສາມາດສຶກສາເລື່ອງຕ່າງໆໂດຍຮອບໂຕ. ພ້ອມນັ້ນ, ວິຊານີ້ຍັງເປັນວິຊາທີ່ກ່ຽວພັນກັບທຸກສາຂາວິຊາທັງທຳມະຊາດແລະສັງຄົມ. ດັ່ງນັ້ນ,ການຮຽນຮູ້ຫລືການສຶກສາວິຊາອື່ນໆ ຈຶ່ງມີຄວາມຈຳເປັນທີ່ສຸດໃນການສຶກສາປະຫວັດຄວາມເປັນມາ.

_ ເມື່ອເຮົາໄດ້ຮຽນວິຊາປະຫວັດສາດອາລະຍະທຳໂລກເຮົາຮູ້ສຶກວ່າປຽບດັ່ງເຮົາໄດໄປເຫັນ, ໄດ້ສຳຜັດເຫດການ,ສະຖານທີ່ສິ່ງຕ່າງໆ ເພາະວ່າເຮົາບໍ່ອາດສາມາດໄປເຫັນເຫດການສະຖານທີ່ຕ່າງໆຂອງໂລກໄດ້ໝົດຫລືບໍ່ມີໂອກາດສຳຜັດແມ່ນແຕ່ໜ້ອຍດຽວກໍ່ຕາມແຕ່ສິ່ງນັ້ນມັນກໍຈະມາຢູ່ໃນໃນຄວາມຄິດຄວາມຮູ້ຂອງເຮົາ ໂດຍຜ່ານການຮຽນ ແລະຈົດຈຳໄວ້ໃນສະໝອງຕະຫລອດໄປ.

## 3. ຄວາມແຕກຕ່າງລະຫວ່າງປະຫວັດສາດ, ອາລະຍະທຳແລະວັດທະນະທຳ.

### *3.1 ປະຫວັດສາດ(History).*

ປະຫວັດສາດແມ່ນເຫດການ, ແມ່ນເລື່ອງສຳຄັນຕ່າງໆ, ການເມືອງ,ການປົກຄອງ, ເສດຖະກິດ, ການທະຫານ,ການຕໍ່ສູ້ຕ້ານການຮຸກຮານຂອງຕ່າງຊາດ, ການຮຽກຮ້ອງເອກະລາດ... ທີ່ເກີດຂຶ້ນຢູ່ປະເທດໃດໜຶ່ງຂອງໂລກຢູ່ໃນຊ່ວງໄລຍະເວລາໃດໜຶ່ງຫລື ລະບອບໃດໜຶ່ງເຊິ່ງເອີ້ນຊື່ຕາມຍຸກສະໄໝເຊັ່ນປະຫວັດສາດ ສະໄໝບູຮານ, ປະຫວັດສາດສະໄໝກາງດັ່ງນີ້ເປັນຕົ້ນ.

### *3.2 ອາລະຍະທຳ*

ອາລະຍະທຳແມ່ນຄຳທີ່ມາຈາກພາສາລາຕິນວ່າ: "Civilis" ເຊິ່ງມີຄວາມໝາຍວ່າສະພາບທີ່ພົ້ນຈາກຄວາມປ່າເຖື່ອນ (Barbarianism) ຫລືເອີ້ນວ່າສະພາບທີ່ມີຄວາມຮຸ່ງເຮືອງແລ້ວ. ຖ້າຂະຫຍາຍຄວາມໃຫ້ກວ້າງກວ່ານີ້, ອາລະຍະທຳຍັງມີຄວາມໝາຍເຖິງວັດທະນະທຳທີ່ມີຄວາມສະຫລັບຊັບຊ້ອນ (Complexity) ແລະມີລັກສະນະເດັ່ນເປັນຂອງຕົວເອງ.

ອາລະຍະທຳມີສ່ວນປະກອບຢູ່ໃນຕົວ 2 ຢ່າງຄືລັກສະນະຂອງອົງການ (Organization) ແລະລັກສະນະຂອງຄວາມເປັນຊ່ຽວຊານສະເພາະຢ່າງ (Specialization) ເຊັ່ນມະນຸດສະໄໝບູຮານອາໄສຢູ່ຕາມຖ້ຳ, ປ່າດົງແລະພາກັນເຄື່ອນຍ້າຍໄປເລື້ອຍໆ. ຈຸດປະສົງຕົ້ນຕໍແມ່ນການຊອກຫາອາຫານ, ຢາປົວພະຍາດ, ເຄື່ອງນຸ່ງຮົ່ມແລະທີ່ຢູ່ອາໄສເພື່ອເອົາຕົວລອດ. ເມື່ອມະນຸດມີວິວັດການຜ່ານເວລາຍາວນານເຂົ້າມາຮ່ວມກັນມີການແບ່ງໜ້າທີ່ຕາມຄວາມຮູ້ຄວາມສາມາດເຊັ່ນ ບາງຄົນເປັນນາຍຊ່າງ,ເປັນແພດໝໍ, ເປັນຜູ້ປ້ອງກັນ, ເປັນຊ່າງຕຳຫໍ ແລະອື່ນໆ ກໍເກີດຄວາມຊ່ຽວຊານສະເພາະໜ້າວຽກຂຶ້ນກັບຕົວບຸກຄົນແລ້ວຈຶ່ງເກີດມີອົງການ

ລັດຖະບານເພື່ອບໍລິການກິດຈະການສ່ວນລວມທັງໝົດໄປຕາມກົດໝາຍ ເຊິ່ງມີລັກສະນະຄວາມຊ່ຽວຊານສະເພາະ ຂະແໜງການວຽກ.

ຈາກບັນຫານີ້ ເຮົາຈຶ່ງພິຈາລະນາວ່າອາລະຍະທຳໃດ (ປະເທດໃດ) ຈະເລີນຫລືອາລະຍະທຳໃດບໍ່ທັນຈະເລີນ, ເຮົາສາມາດເບິ່ງໄດ້ຈາກຄວາມສະຫລັບສັບຊ້ອນຂອງປະມວນກົດໝາຍຂອງລະບົບບໍລິຫານງານໃນປະເທດທີ່ສັບຊ້ອນກວ່າອີກອາລະຍະທຳໜຶ່ງ ແລ້ວເຮົາກໍຈະຮູ້ວ່າອາລະຍະທຳໃດສູງກວ່າກັນ.

### 3.3 *ວັດທະນະທຳ (Culture)*

ວັດທະນະທຳແມ່ນຄວາມຈະເລີນທາງດ້ານຈິດໃຈ, ຄວາມຄິດ, ຄວາມຮູ້ສຶກຂອງຄວາມເປັນມະນຸດກຸ່ມໜຶ່ງຫລືຊາດໜຶ່ງທີ່ຢູ່ໃນສະໄໝໃດໜຶ່ງອັນເປັນລັກສະນະປະຈຳຊາດໂດຍສະເພາະເຊິ່ງກວມເຖິງລັກສະນະສັງຄົມ, ເສດຖະກິດ, ແນວຄວາມຄິດ, ສາສະໜາ, ປັດຊະຍາ, ສິລະປະເຊິ່ງເປັນແບບແຜນດຽວກັບມະນຸດ ໃນຊາດໃດໜຶ່ງ.

ສະຫລຸບໄດ້ວ່າວັດທະນະທຳຄືສິ່ງວັດຖຸແລະຈິດໃຈທີ່ມວນມະນຸດປະດິດສ້າງປຸງແຕ່ງ ແລະນັບຖືມັນຈາກສະພາບປະຫວັດສາດ, ທຳມະຊາດຈົນເປັນທີ່ຍອມຮັບຈາກສັງຄົມ. ໂດຍປົກກະຕິແລ້ວ,ວັດທະນະທຳຈະບໍ່ມີຄຳວ່າວັດທະນະທຳຂອງໃຜຫລືຂອງຊາດໃດດີກວ່າກັນ ເພາະແຕ່ລະຊາດລ້ວນແຕ່ສ້າງວັດທະນະທຳຊ່ວຍການດຳລົງຊີວິດໃຫ້ເໝາະກັບສະພາບແວດລ້ອມນັ້ນໆ.

## 4. ອາລະຍະທຳສະໄໝກ່ອນປະຫວັດສາດ

ການແບ່ງສະໄໝທາງວັດທະນະທຳໃນຍຸກນີ້ ອາດແບ່ງອອກເປັນ 4 ສະໄໝຄື:

### 4.1 *ສະໄໝຫີນເກົ່າ (Old Stone Age)*

ສະໄໝຫີນເກົ່າແບ່ງອອກເປັນ 3 ໄລຍະຄື:ສະໄໝຫີນເກົ່າຕອນຕົ້ນ, ສະໄໝຫີນເກົ່າຕອນກາງ ແລະສະໄໝຫີນເກົ່າສະໄໝຕອນປາຍ.ມະນຸດສະໄໝນີ້ ຮູ້ຈັກເຮັດເຄື່ອງໃຊ້ດ້ວຍຫີນຢ່າງງ່າຍດາຍ. ເມື່ອດົນໄປກໍສາມາດແກ້ໄຂເຄື່ອງມືຫີນໃຫ້ສອດຄ່ອງກັບສະພາບແວດລ້ອມໃຫ້ດີຂຶ້ນ ໂດຍສະເພາະເຄື່ອງມືຫີນຂອງມະນຸດແຖບຢູໂຣບທີ່ໄດ້ປະດິດຄິດຄົ້ນຂຶ້ນມາຈາກຫີນໄຟ, ກະດູກສັດ,ເຂົາສັດ, ງາຊ້າງເປັນຕົ້ນຫລັກຖານນີ້ ເຊິ່ງໄດ້ ຄົ້ນພົບຫລາຍຢູ່ພາກຕາເວັນຕົກແລະພາກກາງຂອງທະວີບຢູໂຣບ.

ການດຳລົງຊີວິດຂອງມະນຸດສະໄໝຫີນແມ່ນອາໄສຢູ່ຖ້ຳແລະຢູ່ຮ່ວມກັນເປັນໝູ່ປະມານ 30 ຫາ 300 ຄົນ.ຮູ້ຈັກໃຊ້ໄຟເພື່ອປຸງແຕ່ງອາຫານ, ໃຊ້ໄຟໃຫ້ແສງສະຫວ່າງແລະຄວາມອົບອຸ່ນ; ແຕ່ຍັງບໍ່ທັນຮູ້ຈັກແຕ່ງອາຫານໃຫ້ແຊບ. ອຸປະກອນການຫຸງຕົ້ມເປັນຕົ້ນໝໍ້ແລະໄຫຍັງບໍ່ທັນມີ, ມີແຕ່ຊາມທີ່ເຮັດດ້ວຍດິນດິບ. ມະນຸດສະໄໝນີ້ເລີ່ມມີຄວາມເຄົາລົບບູຊາຕໍ່ອຳນາດເລິກລັບຫລືສິ່ງສັກສິດເພື່ອໃຫ້ຊ່ວຍຄຸ້ມຄອງໂດຍການປະດິດພິທີ ກຳຂຶ້ນດ້ວຍລົມມຸດຕ່າງໆ ສະແດງວ່າເມື່ອມີບັນຫາ, ມີຄວາມປາຖະໜາ ເມື່ອສຳເລັດໃນສິ່ງນັ້ນແລ້ວ, ພວກເຮົາກໍຈະມີພິທີກຳເຊິ່ງເອີ້ນວ່າ "ລັດທິການເຊື່ອໃນອຳນາດເໜືອທຳມະຊາດ" (Supernaturalism) ເມື່ອ ການເວລາຜ່ານໄປຈຶ່ງມີການຍອມຮັບ ແລະນັບຖືດວງອາທິດ.

### 4.2 *ສະໄໝຫີນໃໝ່(New Stone Age)*

ສະໄໝຫີນໃໝ່ລວມທັງສະໄໝຫີນເກົ່າຕອນປາຍທີ່ມີຢູ່ໃນທະວີບຢູໂຣບ.ວັດທະນະທຳສະໄໝນີ້ລວມມີ4ແບບຄື:

- ແບບແອນຊີລຽນ ໃນປະເທດຝຣັ່ງແລະສະເປນ(Azilian)
- ແບບທາດເດີນັ້ຊັນ ໃນປະເທດອັງກິດແລະເຢຍຣະມັນ(Tarder noison)
- ແບບແມັກລີໂມຊຽນ ໃນປະເທດໂປໂລຍແລະຣັດເຊຍ(Magle mosean)
- ແບບເອທີໂບນ ໃນເດັນມາກ(Ertebolle)

ວັດທະນະທຳທັງ 4 ແບບນີ້ ມີຮູບຮ່າງເປັນຫີນທີ່ຂູດຂັດຈົນບາງແລະລຽບງາມ. ພ້ອມນັ້ນ, ມະນຸດຮູ້ຈັກເອົາຕົ້ນໄມ້ມາເຮັດເປັນເຮືອແຄນູ, ເຮັດທະນູ,ລູກສອນເພື່ອລ່າສັດ. ເລີ່ມມີການລ້ຽງໝາ. ມີການປູກພືດ, ຂະຫຍາຍພັນພືດເປັນຄັ້ງທຳອິດ ເຊິ່ງປາກົດຂຶ້ນຢູ່ທາງຕອນເໜືອຂອງເມໂສໂປຕາເມເມື່ອປະມານໝື່ນປີມາແລ້ວ (ປັດຈຸບັນແມ່ນຢູ່ປະເທດອີຣັກ) ແລະແຖບອາເມຣິກາກາງ.

ມະນຸດສະໄໝນີ້ຮູ້ຈັກອາໄສຢູ່ເຮືອນ,ຢູ່ຮ່ວມກັນເປັນກຸ່ມໃຫຍ່ນັບແຕ່ພັນຄົນຂຶ້ນໄປ,ຮູ້ເອົາດິນແລະຫີນມາເຮັດເປັນພາຊະນະແຕ່ງກິນ, ເຮັດທີ່ຢູ່ອາໄສ, ຮູ້ຈັກເຮັດວັດຖຸປ້ອງກັນຕົວຈາກຫີນ, ຮູ້ເຮັດສາງເຂົ້າຕັ້ງແຕ່ 5000 ປີກ່ອນ ຄ.ສ.ມາແລ້ວ. ສະໄໝນີ້, ມະນຸດມີສັດລ້ຽງແມ່ນແກະ, ແບ້ ແລະງົວ ເພື່ອລ້ຽງໄວ້ເປັນອາຫານ, ຮູ້ຈັກເອົາໜັງສັດມາເຮັດເປັນເຄື່ອງນຸ່ງຖື. ເວົ້າງ່າຍໆວ່າ ມະນຸດສາມາດເຂົ້າເຖິງທຳມະຊາດໄດ້ດີຂຶ້ນ. ນອກນີ້ ຍັງຮູ້ຈັກສ້າງເຮືອໄວ້ໃຊ້ຄົມມະນາຄົມທາງນ້ຳປະມານ 5000 ປີ ກ່ອນ ຄ.ສ ມາແລ້ວ.

ມະນຸດສະໄໝນີ້ ມີການກະສິກຳແລ້ວ. ສະນັ້ນ, ເຂົາເຈົ້າຈຶ່ງມີການເຊື່ອຖືສິ່ງສັກສິດ ເພື່ອໃຫ້ເກີດຄວາມສົມບູນຕໍ່ຕົນເອງ. ເປັນຕົ້ນການກໍ່ສ້າງແທ່ງຫີນທີ່ໃຫຍ່ສູງ ເພື່ອບູຊາພະອາທິດຄືດັ່ງທີ່ໄດ້ຄົ້ນພົບນຫຼັກຖານຢູ່ທົ່ວໄປໃນຢູໂຣບ, ອັບຟຣິກາເໜືອ ແລະອາຊີເປັນຕົ້ນ.

ຕົວຢ່າງ: ຢູ່ປະເທດຝຣັ່ງ ມະນຸດບູຮານເອົາກ້ອນຫີນມະຫຶມາ ມາຕັ້ງລຽນຊ້ອນກັນເປັນເປັນແຖວຍາວ ເຊິ່ງມີປະມານ 2700 ກ້ອນ. ສ່ວນຢູ່ປະເທດອັງກິດກໍມີແທ່ງຫີນເປັນຮູບບ້ວງກົມ ແລະມີຄານທັບຢູ່ເຖິງມີເສັ້ນຜ່າໃຈກາງຂະໜາດ 15 ແມັດ. ມະນຸດສະໄໝນີ້ມີການເຊື່ອຖືເທວະດາ, ເທວະດາເປັນຜູ້ໃຫ້ກຳເນີດມະນຸດ. ດັ່ງນັ້ນ, ພວກເຂົາເຈົ້າຈຶ່ງມີການບູຊາເທວະດາດ້ວຍ ແກະ ຫລື ແບ້. ເພື່ອຜົນປະໂຫຍດໃນຊີວິດ.

### 4.3 ສະໄໝທອງສຳລິດ( Bronze Age )

ສະໄໝທອງສຳລິດ, ມະນຸດຮູ້ຈັກນຳເອົາໂລຫະມາປະດິດເປັນເຄື່ອງມື, ອຸປະກອນຮັບໃຊ້ໃນການຄົງຊີບ. ໂລຫະທຳອິດທີ່ມະນຸດຄົ້ນພົບກ່ອນໝູ່ຢູ່ໃນໂລກແມ່ນໂລຫະທອງແດງ ເມື່ອປະມານ 4000ປີ - 3000 ປີ ກ່ອນ ຄ.ສ. ໂດຍແມ່ນມະນຸດຢູ່ເຂດອາຊີຕາເວັນຕົກ ແລະ ເອຢິບໄດ້ນຳໃຊ້ກ່ອນໝູ່. ເມື່ອເວລາຕໍ່ມາ, ວິທະຍາການຈະເລີນກ້າວໜ້າຂຶ້ນມາມະນຸດກໍ່ຮູ້ຈັກເອົາໂລຫະຫລາຍຢ່າງມາປະສົມເຂົ້າກັນໃຫ້ມີຄຸນະພາບ. ດັ່ງນັ້ນ ຈຶ່ງເອີ້ນສະໄໝນີ້ວ່າ "ສະໄໝທອງສຳລິດ" ຫລືເອີ້ນວ່າ ຍຸກທອງສຳລິດ, ພ້ອມນັ້ນວັດທະນະທຳທາງວັດຖຸຕ່າງໆ ກໍຈະເລີນເຕີບໂຕຮຸ່ງເຮືອງມາເປັນກ້າວໆ.

### 4.4 ສະໄໝເຫລັກ ( Iron Age)

ຍຸກເຫລັກ,ມະນຸດເລີ່ມຮູ້ຈັກໃຊ້ເຫລັກເປັນເຄື່ອງມື,ເຄື່ອງໃຊ້ຢູ່ແຖບລຸ່ມແມ່ນ້ຳໄທກຣິດແລະຢູຟເຣຕິດເມື່ອປະມານ 1200ປີ ກ່ອນ ຄ.ສ. ໃນແຕ່ລະຍຸກສະໄໝກໍມີແບບແຜນຂອງການປະດິດຄິດຄົ້ນເປັນລຳດັບ

ມາເຊັ່ນ ການເຮັດພາຫະນະເຄື່ອງໃຊ້, ຮູ້ຈັກປັບປຸງດ້ານກະສິກຳ, ຫັດຖະກຳ, ການແລກປ່ຽນ, ການປູກພືດ ແລະການລ້ຽງສັດ ຕະຫລອດເຖິງການສ້າງເມືອງ. ແຕ່ລະຢ່າງທີ່ເກີດຂຶ້ນມີແນວທາງແຫ່ງຄວາມຄິດຂອງຕົນເອງເປັນຕົວຢ່າງ ແລະຄ່ອຍໆຈະເກີດຂຶ້ນ ໂດຍດັດແປງແກ້ໄຂຕາມລັກສະນະຂອງມະນຸດ ທີ່ມີຄວາມຄິດ ແລະຄວາມຈຳ. ສິ່ງເກົ່າແກ່ທັງຫລາຍ ເມື່ອໝົດອາຍຸແລ້ວກໍຜ່ານພົ້ນໄປ ແລະສິ່ງໃໝ່ຂອງສະໄໝຕໍ່ມາກໍປາກົດຂຶ້ນ ເຊິ່ງມີຊື່ເອີ້ນ ແລະຂອບເຂດຕາມກຳນົດແຫ່ງຄວາມນິຍົມ.

ສະນັ້ນ, ໃນຍຸດນີ້ຄວາມຕ້ອງການແຮງງານສູງຂຶ້ນ ໂດຍສະເພາະແມ່ນແຮງງານຜູ້ຊາຍ ເຊິ່ງສະແດງໃຫ້ເຫັນເຖິງຈຸດກຳເນີດຂອງລະບອບບິດາສິດທິລາດຄື ສະມາຊິກໃນສັງຄົມເຊື່ອຖືສາຍພັນພໍ່ເປັນຫລັກ. ສັງຄົມມີການຂູດຮີດ, ທຳອິດແມ່ນການຂູດຮີດທາງເພດ ກ້າວເຖິງການຂູດຮີດທາງຊົນຊັ້ນ. ສະນັ້ນ, ນັກປະຫວັດສາດຈິ່ງເອີ້ນຍຸກນີ້ວ່າ :"ຍຸກສະໄໝແຫ່ງການກຳເນີດລັດ" ຄັ້ງທຳອິດຂອງໂລກ.

## 5. ມະນຸດກ່ອນສະໄໝປະຫວັດສາດ

ນັກບູຮານຄະດີ ໄດ້ຄົ້ນພົບເຄື່ອງມືຫີນຕ່າງໆ ແຕ່ບໍ່ໄດ້ພົບກະດູກມະນຸດຢູ່ໃກ້ໆ. ເຖິງຢ່າງໃດກໍຕາມ, ນັກບູຮານຄະດີຍັງສາມາດໃຊ້ ເປັນຫລັກຖານບົ່ງບອກເຖິງການອຸບັດຂອງມະນຸດສະໄໝທຳອິດໄດ້ຢ່າງດີ ໂດຍອີງໃສ່ຊາກສິ່ງມີຊີວິດໃນອະດີດທີ່ເຫລືອຢູ່ທີ່ເອີ້ນວ່າ ຟອກຊິນ ( Fossil ) ຟອກຊິນເປັນເຄື່ອງບົ່ງບອກໃຫ້ເຫັນເຖິງວິວັດການຂອງມະນຸດວານອນ ໄປສູ່ມະນຸດປັດຈຸບັນ. ເຖິງຢ່າງໃດກໍຕາມ, ຄວາມຮູ້ໃໝ່ທີ່ມີຫລັກຖານຢືນຢັນໂດຍຜ່ານການກວດສອບທາງວິທະຍາສາດ ເປັນເຄື່ອງພິສູດທີ່ແນ່ນອນ ກວ່າເກົ່າ.

ນັກມະນຸດວິທະຍາເຊື່ອວ່າ ທະວີບອາຊີເປັນທີ່ເກີດຂອງມະນຸດສະໄໝທຳອິດ ແຕ່ປັດຈຸບັນນີ້ໄດ້ມີການຖະແຫລງໃຫ້ໂລກຮັບຮູ້ວ່າໄດ້ມີການຄົ້ນພົບກະໂຫລກຫົວ ແລະໂຄງກະດູກບາງສ່ວນຂອງບັນພະບຸລຸດແຫ່ງມະນຸດໃໝ່ອີກແລ້ວໃນ ອັບຟຣິກກາ. ກະໂຫລກຫົວນີ້ ມີເນື້ອທີ່ບັນຈຸສະໝອງໄດ້ເຖິງ 800 ລູກບາດຊັງຕີແມັດ ເຊິ່ງສັນນິຖານວ່າມີອາຍຸປະມານ 2 ລ້ານປີ. ກະດູກແຂນ, ຂາ ແລະສ່ວນຕ່າງໆ ຂອງຮ່າງກາຍມີລັກສະນະເໝືອນໂຄງກະດູກໃນປັດຈຸບັນຫລາຍທີ່ສຸດ ຕ່າງກັນແຕ່ຂະໜາດບັນຈຸມັນສະໝອງ. ເພາະມັນສະໝອງຂອງຄົນປັດຈຸບັນມີປະມານ 1450 ລູກບາດຊັງຕີແມັດ. ຊາກມະນຸດທີ່ເກົ່າແກ່ໄດ້ຄົ້ນພົບໃນໂລກຄື:

### *5.1 ມະນຸດພິເທແຄນທໂຣປຸດ ( Pithe can thropus )*

ມະນຸດເຄິ່ງວານອນທີ່ມີຊື່ສຽງຫລາຍທີ່ສຸດແມ່ນ ມະນຸດພິເທແຄນທໂຣປຸດອີເຣັກຕຸດ ຫລືເອີ້ນວ່າ ມະນຸດຊາວາ ( Java Man) ທີ່ຊາວຮອນລັນດາຄົ້ນພົບໃນ ຄ.ສ. 1891 ໃນອາຊີ ກ່ອນທີ່ມີການຄົ້ນພົບບັນພະບຸລຸດຂອງມະນຸດທີ່ເກົ່າແກ່ກວ່າໃນ ອັບຟຣິກກາ. ມະນຸດຊາວາມີກະດູກຫົວໂປອອກມາ ແລະມີສະໝອງປະມານ 900 ລູກບາດຊັງຕີແມັດ. ນອກຈາກມະນຸດຊາວາແລ້ວ ຍັງມີມະນຸດປັກກິ່ງ ມີສະໝອງປະມານ 100 – 1220 ລູກບາດຊັງຕີແມັດ. ມະນຸດທັງນີ້ມີຊີວິດຢູ່ສະໄໝຫີນເກົ່າຕອນກາງປະມານ 5 ແສນປີ.

### *5.2 ມະນຸດໄຮເດເບັນ ( Heidelberg Man )*

ມະນຸໄຮເດເບັນ ຄົ້ນພົບໃນ ຄ.ສ 1907 ແລະມະນຸດ ສະເຕັນໄຮ ຄົ້ນພົບ ຄ.ສ 1933 ໃນປະເທດເຢຍຣະມັນ. ມະນຸດສະວອນຄອມເບີຄົ້ນພົບ ຄ.ສ 1935–1937 ໃນປະເທດອັງກິດ ແລະມະນຸດຜູ້ຍິງໃນຖ້ຳ

ຟອນເຕເຊວາດ (ມະນຸດ ຟອນເຕເຊວາດ) ຄົ້ນພົບໃນ ຄ.ສ 1947 ໃນປະເທດຝຣັ່ງ. ມະນຸດພວກນີ້ມີສະໝອງປະມານ 1350 ລູກບາດຊັງຕີແມັດ ເຊິ່ງມີຊີວິດຢູ່ໃນຍຸກຫີນເກົ່າຕອນຕົ້ນທີ່ມີໄລຍະເວລາຍາວນານທີ່ສຸດ ແຕ່ນັກບູຮານຄະດີ ພົດຮູ້ສະໄໝນີ້ໜ້ອຍທີ່ສຸດ ເພາະຍັງຂາດຫລັກຖານຮ່ອງຮອຍພໍພຽງ.

*5.3 ມະນຸດນີແອນເດີທັນ ( Neanderthal Man)*

ມະນຸດພວກນີ້ ມີຊີວິດຢູ່ໃນສະໄໝທີ 3 ຂອງໄລຍະລະຫວ່າງນ້ຳແຂງລະລາຍປະມານ 150.000 ປີ. ໄດ້ມີການຂຸດຄົ້ນໂຄງກະດູກມະນຸດພວກນີ້ເຖິງ 100 ສິ້ນສ່ວນ. ກະດູກຫົວມີລັກສະນະແໜ້ນ ແລະໜາ. ໜ້າຜາກຊັນກວ່າມະນຸດປັດຈຸບັນ.

*5.4 ມະນຸດໂຄມັນຍອງ ( Cro_Magnon Man)*

ມະນຸດພວກນີ້ ຢູ່ໃນປະເທດຝຣັ່ງ, ມີຮູບຮ່າງສູງກວ່າມະນຸດຢູໂຣບສະໄໝນີ້, ໃບໜ້າກວ້າງ, ດັງໂດ່ງຍາວ, ຜິວຂາວ ເຊິ່ງມີຊີວິດຢູ່ໄລຍະທີ 4 ຂອງຍຸກນ້ຳແຂງຍຸກສຸດທ້າຍ. ເປັນມະນຸດທີ່ມີຄວາມກ້າວໜ້າ ແລະພວກໂຄມັນຍອງ ຈັດເປັນມະນຸດສຸດທ້າຍຂອງສະໄໝຫີນເກົ່າຕອນປາຍ, ມີຄວາມສະຫລາດກວ່າມະນຸດສະໄໝກ່ອນປະຫວັດສາດທີ່ກ່າວມາເຊັ່ນ ຮູ້ຈັກປະດິດເຄື່ອງມືຫີນ, ດັດແປງໃຫ້ປານີດ ແລະຮູ້ເກັບສະສົມອາຫານ, ຮູບແຕ້ມຮູບຕາມຝາຖ້ຳ.



ຮູບ 1: ມະນຸດກ່ອນສະໄໝປະຫວັດສາດ



ຮູບ 2: ເຄື່ອງມືຫີນຂອງມະນຸດກ່ອນສະໄໝປະຫວັດສາດ

## 6. ອາລະຍະທຳສະໄໝປະຫວັດສາດ

ອາລະຍະທຳສະໄໝປະຫວັດສາດ ຫລືເອີ້ນວ່າ ອາລະຍະທຳສະໄໝທີ່ມະນຸດຮູ້ຈັກຂຽນໜັງສື ເພື່ອບັນທຶກເຫດການດ້ວຍອັກສອນ. ສະໄໝປະຫວັດສາດ ປະມານ 5000 ປີ ກ່ອນ ຄຣິດຕະການມາແລ້ວ, ສະໄໝນີ້ໄດ້ເກີດອາລະຍະທຳທີ່ມີຊື່ສຽງໂດ່ງດັງຫລາຍຢ່າງ ທີ່ນັບບໍ່ຖ້ວນ ເຊິ່ງລວມທັງສິ່ງທີ່ເປັນວັດຖຸ, ສິ່ງທີເປັນຈິດໃຈ ຕະຫລອດເຖິງເຫດການຕ່າງໆ. ມາເຖິງປັດຈຸບັນນີ້, ອາລະຍະທຳໂລກທີ່ມີຊື່ສຽງບາງອັນກໍສູນເສຍໄປຕາມການເວລາ, ມີບາງສິ່ງຢ່າງກໍຍັງເຫລືອໄວ້ພໍໃຫ້ເຫັນ ແລະບາງຢ່າງກໍຍັງຮັກສາໄວ້ໃນສະພາບເດີມ ເປັນຕົ້ນແມ່ນ ທາດປີຣາມິດ ( Pyramid ) ຢູ່ເອຢິບ, ກຳແພງຍັກຢູ່ຈີນ. ພ້ອມນີ້ ຍັງມີຫລັກແນວຄິດທິດສະດີ, ປັດຊະຍາ, ສາສະໜາ, ຄວາມເຊື່ອ, ພາສາ, ອັກສອນ, ວັດທະນະທຳ ແລະສິ່ງອື່ນໆ ຫລາຍຢ່າງທີ່ນັບບໍ່ຖ້ວນ. ການແບ່ງສະໄໝຕາມປະຫວັດສາດອາດແບ່ງອອກເປັນ 4 ສະໄໝຄື:

### *6.1 ສະໄໝບູຮານ ( The Ancient Age)*

ສະໄໝບູຮານເລີ່ມແຕ່ຄວາມຈະເລີນຮຸ່ງເຮືອງຂອງເອຢິບ, ເມໂສໂປຕາເມ, ປາແລັດສະໄຕ, ເປີເຊຍ, ອິນເດຍ, ກເຣັກ, ຈີນ ແລະໂຣມ( ອີຕາລີ) ແລະໄປສິ້ນສຸດລົງ ເມື່ອຈັກກະພັດໂຣມັນຕາເວັນຕົກເສື່ອມອຳນາດ ຍ້ອນຖືກພວກອະນາລະຍັນຊົນທຳລາຍໃນ ຄ.ສ 476 ( ພວກອະນາລະຍັນຊົນ ແມ່ນພວກຄົນປ່າຫລືຄົນເຖື່ອນ, ພວກຄົນທີ່ບໍ່ທັນມີຄວາມຈະເລີນ).

ອາລະຍະທຳບູຮານຄື ຄວາມຈະເລີນຂອງເອີຢິບໃນດ້ານຕ່າງໆ ເຊັ່ນ: ສາສະໜາ, ປັດຊະຍາ, ວິທະຍາສາດ, ສິລະປະກຳສັງຄົມເປັນຕົ້ນ. ສະນັ້ນ, ອາລະຍະທຳເອຢິບ ຖືວ່າເປັນອາລະຍະທຳບູຮານເກົ່າແກ່ທີ່ສຸດຂອງໂລກ.

ອາລະຍະທຳເມໂຣໂປຕາເມ ເຊັ່ນ ການກຳເນີດລະຄອນລັດ, ການປະດິດເລກຄູນ, ເລກຫານ, ການໃຊ້ເລກຖານ 60, ການປະດິດຕາຊັ່ງ, ການກຳເນີດຕົວອັກສອນ, ເຄື່ອງໝາຍ, ການກຳເນີດກົດໝາຍ 282 ມາດຕາຂອງເຜົ່າອາໂມຣິດ. ອະລະຍະທຳການກຳເນີດລະບົບວັນນະ, ວັນນະຄະດີ, ສາສະໜາຮິນດູແລະພຸດ.

ອາລະຍະທຳຈີນບູຮານທີ່ມີຊື່ສຽງເຊັ່ນ ເຄື່ອງປັ້ນດິນເຜົາ, ປັດຊະຍາສັງຄົມ, ການເມືອງຂອງລັດທິຂົງຈື້ ເລົ່າຈື້, ເມັ່ງຈື້, ຈິນຊີຮ່ອງເຕ້ ແລະຜູ້ອື່ນໆ, ສິລະປະປະຕິມາກຳ, ວິສະວະກຳ...ທີ່ມີຊື່ສຽງຈີນມາເຖິງທຸກວັນນີ້.

ຄວາມຈະເລີນຮຸ່ງເຮືອງຂອງກເຣັກເຊັ່ນ ປັດຊະຍາລະບົບການເມືອງ, ການປົກຄອງ, ຄວາມເຊື່ອຖືເທບພະເຈົ້າຫລາຍອົງ, ຄວາມຈະເລີນທາງດ້ານສະຖາປັດຕະຍະກຳ. ຄວາມຮັກທຳມະຊາດ ແລະດົນຕີ, ຈຸດພິເສດທາງນິໄສໃຈຄໍຂອງ ກເຣັກ.

ອາລະຍະທຳໂຣມັນເຊັ່ນ ຄວາມຍິ່ງໃຫຍ່ຂອງອຳນາດຈັກກະພັດໂຣມັນ, ກົດໝາຍ, ການປົກຄອງທີ່ມີປະສິດທິພາບ, ສາສະໜາຄຣິດ, ຂົວທາງ, ການກໍ່ສ້າງສາທາລະນະ, ການຜ່າຕັດແບບຊີຊາ, ພາສາລາຕິນ ແລະອື່ນໆ ຢ່າງຫລວງຫລາຍ ແລະລວມເຖິງການສົງຄາມອື່ນໆ ໃນປະເທດທີ່ກ່າວມາແລ້ວ.

### *6.2 ສະໄໝກາງ (The Middle Age)*

ສະໄໝກາງນັບແຕ່ພວກອະນາລະຍັນຊົນຮູກຮານ ແລະໄດ້ຄອບຄອງດິນແດນທີ່ເຄີຍມີອາລະຍະທຳບູຮານຮຸ່ງເຮືອງ ຖືກຢຸດສະຫງັກລົງຊົ່ວຄາວ ເຊິ່ງເອີ້ນສະໄໝນີ້ວ່າ: "ສະໄໝມືດມົນ (Dark Age) ເມື່ອຊາ

ເລີແມັງ (Chalemagne) ໄດ້ຂຶ້ນເປັນຈັກກະພັດ ຈຶ່ງເປັນການເລີ່ມຕົ້ນຄວາມສະຫວ່າງສະໄຫວຂຶ້ນມາອີກ. ສະໄໝນີ້ ມີຄວາມຈະເລີນຮຸ່ງເຮືອງຫລາຍຢ່າງ ແລະຍັງຖືວ່າເປັນຮາກຖານທີ່ສຳຄັນຂອງອາລະຍະທຳໂລກໃນຍຸກໃໝ່ ແລະປັດຈຸບັນອີກດ້ວຍ.ສະນັ້ນ, ຈຶ່ງເອີ້ນສະໄໝນີ້ວ່າ "ສະໄໝກາງ" .ພ້ອມນັ້ນສະໄໝກາງກໍໄດ້ສິ້ນສຸດລົງ ເມື່ອມີການຟື້ນຟູສິລະປະວິທະຍາການຈະເລີນຂຶ້ນມາເມື່ອ ຄ.ສ 1453.

ອາລະຍະທຳໂລກຍຸກກາງທີ່ມີຊື່ສຽງເຊັ່ນ ຄວາມຈະເລີນຮຸ່ງເຮືອງຂອງສິ່ງຕ່າງໆ ທາງວັດຖຸແລະຈິດໃຈການກຳເນີດສາດສະດາ - ນິກາຍອິດສະລາມ ແລະລວມເຖິງໂຄງສ້າງທາງສັງຄົມ, ເສດຖະກິດ ຕະຫລອດເຖິງການຮຸກຮານເຜົ່າຕ່າງໆ ຂອງພວກອະນາລະຍະຊົນ ລວມເຖິງການຟື້ນຟູສັງຄົມໃນຢູໂຣບອີກດ້ວຍ.

*6.3 **ສະໄໝໃໝ່** ( The New Age )*

ສະໄໝໃໝ່ນັບແຕ່ເລີ່ມມີ ການສຳຫລວດດິນແດນ ແລະແມ່ນ້ຳໃໝ່ແລະນັບແຕ່ໂຄລຳບັດ (Columbus) ໄດ້ຄົ້ນພົບປະເທດອາເມຣິກາໃນ ຄ.ສ 1492 ຈົນມາຮອດສົງຄາມໂລກຄັ້ງທີ I ຄ.ສ 1914 - 1918.

*6.4 **ສະໄໝປັດຈຸບັນ** ( The Present Age )*

ສະໄໝປັດຈຸບັນ ເລີ່ມແຕ່ການສິ້ນສຸດສົງຄາມໂລກຄັ້ງທີ I ຈົນຮອດສົງຄາມເຢັນ ແລະຍັງລວມທັງບັນດາເຫດການໃໝ່ທີ່ເກີດຂຶ້ນໃນຍຸກປັດຈຸບັນ ຫລືນັບແຕ່ຕົ້ນສະຕະວັດທີ XX ເປັນຕົ້ນມາ.

ປະຫວັດສາດອາລະຍະທຳໂລກ ແຕ່ລະຍຸກ, ແຕ່ລະສະໄໝ ກໍລ້ວນແຕ່ມີຄວາມສຳຄັນຕໍ່ການຮຽນຮູ້ແຕ່ຍ້ອນວ່າ ອາລະຍະທຳໂລກໃນຍຸກປັດຈຸບັນ ເປັນຍຸກທີ່ປະສານຕໍ່ຈາກສະໄໝບູຮານ, ສະໄໝກາງແລະສະໄໝໃໝ່. ພ້ອມນັ້ນ ຍຸກປັດຈຸບັນຍັງເປັນຍຸກທີ່ມີຄວາມຈະເລີນ ແລະມີເຫດການສັງຄົມຕ່າງໆ ທີ່ຍັງຢູ່ໃກ້ຕົວເຮົາກວ່າຍຸກອື່ນໆ. ດັ່ງນັ້ນ, ໃນຕຳລາສະບັບນີ້ ຈຶ່ງໄດ້ນຳສະເໜີແຕ່ປະຫວັດສາດອາລະຍະທຳໂລກໃນຍຸກປັດຈຸບັນ ແບບສັງລວມເທົ່ານັ້ນ.

# ບົດທີ 2

# ປະຫວັດສາດອາລະຍະທຳໂລກ ຍຸກປັດຈຸບັນ - ຍຸກຢູໂຣບ

# ຟື້ນຟູສິລະປະວິທະຍາການ ( Renaissance )

## 1. ຄວາມໝາຍຂອງຄຳວ່າຟື້ນຟູ

ຄຳວ່າ " ຟື້ນຟູ" ໃນພາສາຝຣັ່ງ ແປວ່າ ການເກີດໃໝ່. ຖ້າເວົ້າເຖິງອາລະຍະທຳ ໝາຍເຖິງການຮື້ຟື້ນອາລະຍະທຳ ກລາສິກ ( Classical ) ຂອງ ກເຣັກ ແລະ ໂຣມັນຂຶ້ນອີກຄັ້ງໜຶ່ງ ເພື່ອເປັນການປັບປຸງແປງແລະປັບປຸງຄວາມຄັບແຄບຂອງຄວາມຄິດຈິດໃຈໃນສະໄໝກາງໃຫ້ນຳສູ່ຄວາມຈະເລີນໃນສະໄໝໃໝ່.

(Room And The Room)

ເກືອບເຮັດໃຫ້ໂຣມກາຍ ເປັນສູນກາງຂອງການໂຈມຕີສາສະໜາໃນແງ່ຕ່າງໆ ຢູ່ທາງຕອນໃຕ້ຂອງພູເຂົາແອັນ.

ສ່ວນໄລຍະທີ 4 ເປັນຂອງເຢຍຣະມັນ ເຊິ່ງເອີ້ນວ່າ: "ການຟື້ນຟູສິລະປະວິທະຍາການທາງເໜືອ" ສຳລັບຄົນເຢຍລະມັນແລ້ວ, ຄວາມລີ້ລັບຕ່າງໆ ກະຕຸ້ນໃຫ້ເກີດຄວາມຮູ້ສຶກ ຍາກສຳຫລວດ ແລະຄົ້ນຫາຄວາມຈິງໃຫ້ໄດ້. ຖ້າທຽບໃສ່ຄົນ ອີຕາລີ, ຄົນອີຕາລີເປັນ ຄຣິດສະຕຽນ ຍອມເຊື່ອສິ່ງຕ່າງໆທີ່ພະສັ່ງສອນ. ຄົນເຢຍຣະມັນພັດບໍ່ຍອມເຊື່ອ ຈົນກວ່າຈະໄດ້ຄົ້ນຄິດເຫັນຈິງດ້ວຍຕົວເອງ. ສະນັ້ນການຟື້ນຟູໃນເຢຍຣະມັນບໍ່ໄດ້ຜະລິດສິລະປິນຫລືສະຖາປານິກອອກຫລາຍ ຄື ອີຕາລີ, ແຕ່ໄດ້ຜະລິດໃຫ້ເກີດການພິມ, ການຄົ້ນພົບທາງວິທະຍາສາດ ແລະການຈັດການເປັນຢູ່ຂອງຊາວເມືອງ.

## 5. ນັກຂຽນມະນຸດນິຍົມ

### *5.1 ນັກຂຽນມະນຸດນິຍົມໃນອີຕາລີ*

1. ຟຣານຊິດ ເພທຣາດ 1304 – 1374, ເປັນຜູ້ສ້າງບົດຊອນເນັດໄດ້ຢ່າງສົມບູນແບບ. ເພທຣາດ ເປັນນັກກະວີທີ່ໃຊ້ພາສາພື້ນເມືອງໄດ້ຢ່າງອ່ອນຊ້ອຍຈົນໄດ້ຮັບການຍົກຍ້ອງໃຫ້ເປັນນັກກະວີທາງອາລົມຈິດ.

2. ຈີໂອວັນນີ ໂບຄັດຊີໂອ 1313 – 1375 ເປັນຄົນ ຢູໂຣບຜູ້ທຳອິດທີ່ສາມາດອ່ານພາສາ ກເຣັກໄດ້ແລະຂຽນບົດວັນນະຄະດີຮ້ອຍແກ້ວໄດ້ດີທີ່ສຸດ. ຜົນງານເດັ່ນທີ່ສຸດແມ່ນ ນິຍາຍຊວນຫົວທີ່ສະແດງເຖິງບຸກຄະລິກລັກສະນະຂອງສັງຄົມລວມເຖິງ 100 ເລື່ອງ. ແຕ່ລະເລື່ອງມີຄວາມສຽບແຫລມທີ່ສຸດຂອງສັງຄົມ ແລະ ເປັນ ແບບແຜນການແຕ່ງນິຍາຍສຽດສີສັງຄົມໄລຍະຕໍ່ມາ.

### *5.2 ນັກຂຽນມະນຸດນິຍົມໃນ ຝຣັ່ງ*

1. ເຄມອງ ມາໂຣດ 1497 – 1544 ເປັນຜູ້ທຳອິດທີ່ນຳລັດທິມະນຸນິຍົມ ຈາກອີຕາລີ. ຜົນງານຕ່າງໆ ໄດ້ບັນຍາຍຄວາມຮູ້ສຶກຢ່າງກົງໄປກົງມາແບບຂອງເພດທຣາດ ແລະລັກສະນະສຳຜັດທີ່ດີເດັ່ນ.

2. ຣາເບີເລັດ 1494–1553 ເປັນນັກຂຽນທີ່ໂຈມຕີສັງຄົມໂດຍສະເພາະ ແມ່ນສະຖາບັນສາສະໜາແລະການເມືອງ. ເປັນນັກຂຽນຮ້ອຍແກ້ວທີ່ໃຊ້ພາສາພື້ນເມືອງແຫລມຄົມ.ຣາເບີເລັດເຊື່ອວ່າມະນຸດຈະແກ້ໄຂບັນຫາໄດ້ດ້ວຍສະຕິປັນຍາ. ນະວະນິຍາຍຊວນຫົວທີ່ເປັນວັນນະກຳເອກຂອງຝຣັ່ງທີ່ທ່ານແຕ່ງຂຶ້ນເປັນເລື່ອງຍັກສອງຕົວພໍ່ລູກຄອງນະຄອນແບບສະໄໝກາງເຊິ່ງສະທ້ອນໃຫ້ຜູ້ອ່ານເຫັນ ຄວາມຈິງໃນຊີວິດ ແລະເນັ້ນ ປະສົບການ ຊ່ວຍໃຫ້ຄົນສະຫລາດຂຶ້ນ.

ນອກຈາກນີ້, ກໍຍັງມີ ປີແອເດີຊອງຊາມ 1524 – 1585 ມີເຊນເດີມອງຕານ 1533 – 1592 ແລະຜູ້ອື່ນໆ ເຊິ່ງມີຜົນງານ ທີ່ຂຽນບົດກະວີຮັກ, ບົດເພງສຳລັບສູດລວມທັງ ບົດໂຄງ ສຳລັບຮ້ອງກັບດົນຕີ ສະແດງເຖິງຄວາມຮູ້ສຶກທີ່ສະຫງ່າງາມ. ພ້ອມນັ້ນ ກໍເປັນການແນະນຳໃຫ້ວ່າ ສິລະປິນແຫ່ງການດຳເນີນຊີວິດ ຄືຄວາມຮູ້ຈັກຕົນເອງ, ຍອມຮັບກົດເກນທຳມະຊາດ, ໃຊ້ເຫດຜົນເປັນເຄື່ອງຕັດສິນ. ເຄັດລັບຂອງຄວາມສຸກໃນຊີວິດຢູ່ທີ່ການສຳຫລວດ ແລະຮູ້ຈັກຕົວເອງ, ຄວາມມີໃຈກວ້າງ, ຮັກເສລີພາບ, ການສະໜັບສະໜູນການ

ສຶກສາແຜນໃໝ່ ແລະຍົກຍ້ອງຄວາມສຳຄັນຂອງຄວາມເປັນຕົນເອງນັ້ນ ຈຶ່ງຖືວ່າເປັນຍອດຂອງນັກມະນຸດນິຍົມຢ່າງແທ້ຈິງ.

### *5.3 ນັກຂຽນມະນຸດນິຍົມ ໃນສະເປນ*

1. ໄມເຄີນເດີເຊວເວັນເຕັດ 1548 – 1616 ເປັນ ນັກຂຽນທີ່ຍິ່ງໃຫຍ່ສຸດຂອງ ສະເປັນ ເຊິ່ງໄດ້ປະພັນ ນະວະນິຍາຍ ດອນຕີໂຊເຕ ເປັນນິຍາຍ ຍົວະເຍົ້າຫລອດລວງອັດສະວິນສະໄໝກາງ ໂດຍປຽບທຽບຄວາມ ແຕກຕ່າງລະຫວ່າງໂລກສອງປະເພດຄື ໂລກແຫ່ງຄວາມຝັນ ແລະໂລກແຫ່ງຄວາມຈິງ ເຊິ່ງ ທ່ານໄດ້ບັນຈຸສະແດງຄວາມແຕກຕ່າງຂອງສະໄໝກາງ ແລະສະໄໝໃໝ່ວ່າ ສະໄໝກາງມັນຫຼ້າຫລັງໄປແລ້ວ.

2. ຊວນຫລຸຍວີວ ເປັນຜູ້ສະໜັບສະໜູນການພິສູດທາງວິທະຍາສາດການສຶກສາ,ຈິດຕະວິທະຍາ ແລະ ປັດຊະຍາ. ນອກນີ້ຍັງມີ ໂລເປເດີເວກາ 1562 – 1635 ເປັນນັກປະພັນລະຄອນທີ່ມີຊື່ສຽງ ໂດຍເຂົາຄັດ ຄ້ານການແບ່ງຊົນຊັ້ນວັນນະ ແລະບົບຟືວດັກ ແລະສະໜັບສະໜູນລະບົບ ລາຊາທິປະໄຕ.

### *5.4 ນັກຂຽນມະນຸດນິຍົມໃນອັງກິດ*

1. ເຊີໂທມັດມໍ 1478 – 1535 ເປັນຜູ້ນຳຂອງກຸ່ມນັກມະນຸດນິຍົມທີ່ເຂັ້ມແຂງ, ມີຄວາມຮູ້ດີໃນພາສາລາຕິນ. ດ້ານມະນຸດນິຍົມສະແດງອອກໃນຮູບຂອງຄວາມຄິດທາງການເມືອງໃນໜັງສື Utopai ຂຽນເປັນພາສາລາຕິນທີ່ຮູ້ຈັກກັນທົ່ວໂລກ. ໜັງສືນີ້ບົ່ງບອກໃຫ້ຮູ້ວ່າເມືອງ Unity ຂອງທ່ານເປັນເມືອງໃນອຸດົມຄະຕິເຊິ່ງມີຄວາມສຸກສົມບູນ. (ທ່ານໄດ້ຈັດໃຫ້ຊັບສິນທັງໝົດໃນ ຢູໂທເປຍ ເປັນສົມບັດຂອງສັງຄົມ, ການສຶກສາເປັນຄວາມຮັບຜິດຊອບຂອງລັດ, ທຸກຄົນມີວຽກເຮັດຢຶດໝັ້ນໃນຫລັກປັດຊະຍາທີ່ເຊື່ອວ່າ ຄົນຈະສະລະຜົນປະໂຫຍດສ່ວນຕົວເພື່ອສ່ວນຮວມ.ເມືອງໃນຢູໂທເປຍ, ປະຊາຊົນມີບ້ານມີເຮືອນຢູ່ສະອາດສະບາຍ, ຖະໜົນຫົນທາງກວ້າງຂວາງ, ຜູ້ຄົນຂະຫຍັນເຮັດວຽກທຳງານມື້ລະ 6 ຊົ່ວໂມງ. ນອນວັນລະ 8 ຊົ່ວໂມງ.ນອກນັ້ນພັກຜ່ອນແລະຫາຄວາມຮູ້ ແລະບໍ່ຮຸກຮານໃຜ, ຊັບສົມບັດຂອງເມືອງແບ່ງໃຫ້ປະຊາຊົນເທົ່າກັນ.)



ຮູບ3: ເຊີໂທມັດມໍ 1478 – 1535

2. ວິນລຽມ ເຊັກສະເປຍ 1564 –1616 ເປັນນັກປະພັນອັງກິດທີ່ມີຊື່ສຽງ ແລະມີອິດທິພົນທີ່ສຸດໃນໂລກ. ບົດລະຄອນເກືອບທຸກເລື່ອງເປັນທີ່ຍົກຍ້ອງໃນບັນດານັກວັນນະຄະດີ ເຊິ່ງທ່ານໄດ້ໃຊ້ຫລັກການຄວາມສຳ

ພົນປະສານກັບລັດທິດສະດີໃນຖານະກຳຂອງ ອາລິດສໂຕເຕີນ ໂດຍເນັ້ນຄວາມສຳຄັນຂອງ " ເອກພາບທັງສາມ" ຄືເວລາ, ສະຖານທີ່ແລະເລື່ອງ. ເອກະພາບຂອງເລື່ອງໝາຍເຖິງມີເລື່ອງພຽງເລື່ອງໜຶ່ງບໍ່ມີໂຄງເລື່ອງປີກຍ່ອຍ. ເອກະພາບຂອງເວລາບໍ່ຄວນໃຊ້ເວລາເກີນ 24 ຊົ່ວໂມງ. ເອກະພາບຂອງສະຖານທີ່, ສະຖານທີ່ບໍ່ເກີນ1ແຫ່ງ.

ໃນບົດລະຄອນຂອງ ວິນລຽມມີໝາຍລົດຊາດ, ມີທັງຮ້ອຍແກ້ວ ແລະຮ້ອຍກອງ. ເນື້ອເລື່ອງອີງປະຫວັດສາດ ແລະຕຳນານ ຢູໂຣບ ເຊັ່ນ ຈູເລຍເຊຍຊາ, ແອນໂທນີ ແລະຄລຽວປາຕຣາ ມາຈາກປະຫວັດສາດໂຣມັນ. ໄທມອນຂອງ ເອທັນມາຈາກ ກເຣັກ. ຮຳແລັດຈາກ ຕຳນານເດັນມາກ. ແມັກເບັດຕຳນານສະກັອດແລນ. ໂຣເມໂອ ແລະຈູລຽດ, ພໍ່ຄ້າເມືອງ ເວນິດ ແລະ ໂອເຕັນໂລ ເລື່ອງມາຈາກ ອີຕາລີ. ລະຄອນແຕ່ລະບົດຄືແງ່ໜຶ່ງໃນຊີວິດທີ່ແທ້ຈິງຂອງມະນຸດ.

## 6. ສາຖາປັດຕະຍະກຳ ແລະສິລະປະກຳໃນຍຸກຟື້ນຟູສິລະປະວິທະຍາການ

### *6.1 ສາເຫດທີ່ພາໃຫ້ມີການສ້າງສັນສິລະປິນ ໃນຍຸກຟື້ນຟູ*

*1.* ອີຕາລີເປັນສູນກາງການຄ້າຕາເວັນອອກແລະຕາເວັນຕົກມາປະສານກັນ ຈຶ່ງເປັນເງື່ອນໄຂສະໜັບສະໜູນສິລະປະແລະວັດທະນະທຳ.

*2.* ຊາວອີຕາລີມີຄວາມປາຖະໜາຟື້ນຟູອາລະຍະທຳຄລາສິກ ເພື່ອລົບລ້າງອາລະຍະທຳຊົນເຜົ່າເຢຍລະມັນທີ່ທຳລາຍຈັກກະພັດໂຣມັນ.

*3.* ຄວາມປາຖະໜາຂອງສິລະປິນທີ່ຈະແຍກສິລະປະອອກຈາກອິດທິພົນຂອງສາສະໜາຈັກ ແລະຊັກຊວນໃຫ້ຄົນບໍ່ລົ້ງເລໃນຈິດວິນຍານ.

*4.* ສິລະປິນສະໄໝຟື້ນຟູ ຢາກສ້າງສັນງານຂອງຕົນໃຫ້ເປັນທຳມະຊາດ ຄືກັບສິລະປິນກເຣັກ ແລະໂຣມັນ.

*5.* ຄວາມຕ້ອງການກຽດຕິຄຸນຂອງສ່ວນບຸກຄົນຂອງສິລະປິນຮຸ່ນໃໝ່(ສະໄໝກາງສິລະປິນແຕ່ລະຄົນບໍ່ມີຄວາມໝາຍ). ໃນສະໄໝໃໝ່ເປັນຜະລິດຕະຜົນຂອງຄົນທົ່ວໄປ.

*6.* ອິດທິພົນຂອງລັດທິມະນຸດນິຍົມຂອງແຕ່ລະຄົນ ເຮັດໃຫ້ເກີດວຽກງານສິລະປະລັກສະນະພິເສດສະເພາະຕົວຂອງແຕ່ລະຄົນ ເພື່ອເຊີດຊູຄຸນຄ່າຂອງຕົນເອງ.

*7.* ຄວາມຄິດແກ້ໄຂປັບປຸງທິດສະດີ ແລະກົດເກນຂອງສາສະໜາຈັກ ເຮັດໃຫ້ສະຖາປານິກຄຳນຶງເຖິງຄວາມງາມທາງວັດຖຸຫຼາຍຂຶ້ນກວ່າການສ້າງໂບດວິຫານທາງສາສະໜາ.

### *6.2 ສະຖາປັດຕະຍະກຳຍຸກຕົ້ນ ແລະຍຸກປາຍໃນອັງກິດ ອີຕາລີ ແລະຝຣັ່ງ.*

ສະຖາປັດຕະຍະກຳໃນສະໄໝເລີ່ມຕົ້ນ (Early Renaissance)ໃນປະເທດອັງກິດເລີ່ມໃນສະຕະວັດ XV – XVI ແຜ່ຫລາຍໃນສະໄໝພະນາງ ເອລິດສເບດ ທີ່ນຶ່ງ ຄ.ສ 1558 – 1603 ເຊັ່ນຕຶກ Langleat ສ້າງໃນ ຄ.ສ 1567 – 1579 ໂດຍສະຖາປານິກ ຈອນແທ່ງປາດູ ຊາວອີຕາລີ, ພາຍນອກປະດັບດ້ວຍເສົາເບນ, ຍອດສຸດເປັນລະບຽງ. ຢູ່ໃນປະເທດຝຣັ່ງເລີ່ມປາຍສະຕະວັດທີ XV. ສະຖາປັດຕະຍະກຳມີຫລັງຄາແຫລມ

ແລະເປັນປ້ອມປະການ, ມີປ່ອງຢ້ຽມ ແລະໜ້າຈົ່ວປະດັບລວດລາຍແບບອີຕາລີ, ສະຖາປັດຕະຍະກຳແບບນີ້ສ່ວນຫຼາຍມີຢູ່ໃນປະເທດຝຣັ່ງ.

ສະຖາປັດຕະຍະກຳສະໄໝປາຍ ( High Renaissance)ໃນ ອີຕາລີສະໄໝຄຳຂອງສະຖາປັດຕະຍະກຳ ເລີ່ມກາງສະຕະວັດທີ XVI ມີສູນກາງຢູ່ທີ່ ກຸງໂຣມ, ມີຜູ້ອຸປະຖຳຄືອົງສັນທະປາປາ. ລັກສະນະສະປັດຕະຍະກຳຍຸກຄຳຂອງ ອີຕາລີ ຄືຄວາມແໜ້ນໜາຖາວອນ, ມີສະເໜ່ ແລະເນັ້ນຄວາມແຂງແກ່ນໝາຍກວ່າຄວາມງາມແປກຕາ.

ນັກສະຖາປານິກທີ່ສຳຄັນທີ່ສຸດໃນຍຸກນີ້ແມ່ນ ບຣາມອງເຕ 1444 – 1514 ຜູ້ສ້າງໂບດນ້ອຍຂອງວິຫານ ຊານປີຕໂຣ ອິນມອນໂຕຣີໂອ ຄ.ສ 1502, ໂບດນີ້ເປັນຮູບກົມ, ມີລະບຽງອ້ອມ, ບໍ່ລວດລາຍສັບສົນ.

ສະຖາປັດຕະຍະກຳຍຸກປາຍໃນຝຣັ່ງເລີ່ມແຕ່ ຄ.ສ 1545 – 1590. ສາຖາປັດຕະຍະກຳຍຸກນີ້ມີຄວາມແຂງແກ່ນ ໄດ້ຮັບອິດທິພົນຈາກໂຣມ ເພາະວ່າມີນັກສະຖາປານິກ ຝຣັ່ງຫລາຍຄົນເດີນທາງໄປສຶກສາຢູ່ໂຣມ. ສະຖາປັດຕະຍະກຳພະລາຊະວັງ ລູບຟ ທີ່ ກຸງປາຣີ, ປັດຈຸບັນເປັນຫໍພິພິທະພັນແຫ່ງຊາດທີ່ມີຊື່ສຽງທີ່ສຸດແຫ່ງໜຶ່ງຂອງໂລກ.



ຮູບ 4: ຫໍພິພິທະພັນ ລູບຟ ທີ່ກຸງປາຣີ

### *6.3 ປະຕິມາກຳ*

ປະຕິມາກຳໃນຍຸກນີ້ ຮຽນແບບມາຈາກປະຕິມາກຳ ຄລາສິກ, ສ້າງຕາມລັດທິນິຍົມຂອງຜູ້ອອກແບບສ້າງ ໂດຍບໍ່ໄດ້ມຸ່ງເນັ້ນໃນດ້ານສາສະໜາແຕ່ພຽງຢ່າງດຽວ. ສຳລັບຢູ່ໃນປະເທດ ອີຕາລີ ປະຕິມາກຳທີ່ສຳຄັນຄື ປະຕູດ້ານຕາເວັນອອກຂອງວິຫານທີ່ສ້າງໃນ ຄ.ສ 1425 – 1447 ໂດຍ – ລໍເຣັນໄຊຈິເບັນຕີ, ປະຕູນີ້ຮຽກກັນວ່າ (The Gate of Paradise). ປະຕິມາກຳຮູບນັກຮົບຈອມພົນ ອີຣາສໂມ ດານານີ ຢູ່ເມືອງປາດູສ້າງ ຄ.ສ 1444 ໂດຍໂດນັນເທໂດ. ຮູບນີ້ໄດ້ສະແດງສັດສ່ວນລະຫວ່າງຄົນຂີ່ມ້າທີ່ຖືກຕ້ອງຕາມຫລັກວິທະຍາສາດທີ່ສຸດແຫ່ງດຽວເຊັ່ນ ການສະແດງກ້າມເນື້ອ, ຄວາມຍ່ອນຍານຂອງໜັງ, ຂົນຫາງມ້າ ແລະເສັ້ນເລືອດໄປຂຶ້ນມາມີຄວາມຊັດເຈັນທີ່ສຸດ.

ນັກປະຕິມາກຳທີ່ມີຊື່ສຽງຍິ່ງໃຫຍ່ທີ່ສຸດຂອງໂລກໃນຍຸກຟື້ນຟູ ແມ່ນໄມເຄີນແອນເຈໂລ ບົວນາຣໍຕີ ຄ.ສ 1475 – 1564, ເປັນນັກສິລະປິນດ້ານສາຖາປັດຕະຍະກຳ, ປະຕິມາກຳ, ນັກກະວີ ແລະ ວິສະວະກຳເອກອີກດ້ວຍ.

ຢູ່ໃນຝຣັ່ງ ແມ່ນຮູບນາງພາຍນ້ຳ ທີ່ສະແດງອິດທິພົນປະຕິມາກຳ ກເຣັກບູຮານ ໂດຍຣ່ອນກູຈອງ 1510 – 1568. ປະຕິມາກຳນີ້ມີລັກສະນະປະສົມ ກເຣັກ ແລະຝຣັ່ງທີ່ສະແດງໃຫ້ເຫັນຊີວິດທີ່ກຳລັງນິຍົມໃນສະໄໝນັ້ນໃຫ້ກົມກ່ຽວກັບໃບໜ້າທີ່ຍິ້ມແຍ້ມແຈ່ມໃສ ແລະມີຊີວິດຊີວາເໝືອນຂອງແທ້.

*6.4 ຈິດຕະກຳ*

ນັກຈິດຕະກຳຂອງ ອີຕາລີ ທີ່ຍິ່ງໃຫຍ່ຜູ້ທຳອິດແມ່ນ ມາຊາຊີໂອ 1428 – 1501 ເທັກນິກທີ່ສຳຄັນທີ່ສຸດຄືປະສົມເງົາດຳຕັດກັບແສງຂາວທີ່ສ່ອງມາກະທົບກັນ ເຮັດໃຫ້ເກີດເປັນຮູບ 3 ມິຕິ ແລະສະແດງຄວາມຕື້ນຄວາມເລິກຂອງພາບຢ່າງເປັນທຳມະຊາດ ທັງເປັນແບບຢ່າງແກ່ຈິດຕະກອນເອກລຸ້ນຕໍ່ມາ.

ໃນຕົ້ນສະຕະວັດທີ XVI ຈິດຕະກອນຍຸກຄຳ ພະຍາຍາມປະສານຄວາມງາມໃນຝັນໃຫ້ເຂົ້າກັບຄວາມຈິງຕາມທຳມະຊາດ. ຈິດຕະກອນຍຸກນີ້ຜູ້ມີຊື່ສຽງທີ່ສຸດແມ່ນ ລີໂອນາໂດ ດາວິນຊີ, ໄມເຄີນແອນຈີໂລ ແລະ ຣາຟາເອວ. ຈິດຕະກອນທັງສາມປຽບເໝືອນ ອັດສະລິຍະບຸລຸດ ເພາະເປັນທັງຈິດຕະກອນ, ປະຕິມາກຳ, ສະຖາປານິກ, ວິສະວະກອນ, ນັກດົນຕີ, ນັກຂຽນທີ່ຂຽນກ່ຽວກັບວິທະຍາສາດ,ຂຽນປະຫວັດພະເຍຊູ ແລະມີຄວາມສົນໃຈໃນການສຶກສາໃບໜ້າຕັ້ງແຕ່ທາລົກຈົນເຖິງໄວຊະລາ.

ສ່ວນ ໄມເຄີນແອັນເຈໂລ ຜົນງານທີ່ມີຊື່ສຽງເມື່ອສັນຕະປາປາຈູເລຍທີ່ສອງ ມີພະບັນຊາໃຫ້ແຕ້ມຮູບປະດັບຝາ ໂບດຊີສະຕຽນ ທີ່ນະຄອນ ວາຕິກັງ ໃນ ຄ.ສ 1508 ທີ່ທ່ານອັດປະຕູຂອງຕົວເອງເຖິງ 4 ປີຈຶ່ງສຳເລັດ. ເລື່ອງນີ້ໄດ້ສະແດງເຖິງເລື່ອງໃນ ພະຄຳພີ ເກົ່າ ແລະໃໝ່ຕັ້ງແຕ່ການສ້າງໂລກ, ສ້າງມະນຸດ, ການກຳເນີດຄວາມບາບ ແລະຄວາມພິນາດຂອງມະນຸດເຖິງ ວັນພະເຍຊູ ສະເດັດມາພິພາກສາໂລກ ແລະສິ່ງອື່ນໆລວມທັງພາກໃຕ້ ແລະພາກເໜືອຂອງ ອີຕາລີ.

## 7. ປັດຊະຍາການເມືອງ ຍຸກຟື້ນຟູໃນ ອີຕາລີ

ນັກປັດຊະຍາ ອີຕາລີ ຍຸກຟື້ນຟູເອີ້ນວ່ານັກມະນຸດນິຍົມ ເຊິ່ງຫັນໄປໃຫ້ຄວາມສົນໃຈແນວຄວາມຄິດ ຂອງເພັນໂຕນັກປັດຊະຍາ ກເຣັກບູຮານເປັນສ່ວນໃຫຍ່, ສ່ວນໜຶ່ງກໍຫັນໄປສຶກສາປັດຊະຍາຂອງ ອາຣິດສະ ໂຕເຕີນ. ນັກປັດຊະຍາການເມືອງ ອີຕາລີ ຍຸກນີ້ເດັ່ນກວ່າໝູ່ຄື ລໍເຣັນໂຊວັນລາ (Lorenzo Valla) ເປັນ ນັກປະຫວັດສາດ ແລະປັດຊະຍາ ເຊິ່ງມີຄວາມເຊື່ອວ່າຄວາມດີສູງສຸດຂອງມະນຸດຄືຄວາມສຳລານຢ່າງ ງຽບໆ. ສ່ວນ ນີໂຄໂລມາຄີອາເວັນລີ ໃນເລື່ອງ "The Prince" ເຊິ່ງເປີດເຜີຍວ່າຕົວເຂົາມັກລະບົບຜະເດັດການເດັດຂາດຄືໜ້າທີ່ສຳຄັນທີ່ສຸດ



ຮູບ 5: ນີໂຄໂລມາຄີອາເວັນລີ 1469 – 1527

24/VII ຫ້າມຈຳໜ່າຍ

ຂອງຜູ້ປົກຄອງຈະຕ້ອງສະແຫວງຫາອຳນາດ, ຮັກສາອຳນາດແລະການຂະຫຍາຍອຳນາດ, ຖ້າຈຳເປັນຜູ້ປົກຄອງຈະໃຊ້ວິທີການໃດໆກໍໄດ້ທີ່ຈະຊ່ວຍໃຫ້ຕົນປະສົບຄວາມສຳເລັດຕາມໜ້າທີ່ຂອງຕົນຖືວ່າເປັນຄວາມຍຸດຕິທຳ, ຊອບທຳ. ພ້ອມທັງຢືນຢັນຕື່ມວ່າມະນຸດມັກຄຳນຶງເຖິງຜົນປະໂຫຍດຂອງຕົນເອງ. ກ່ອນອື່ນຜູ້ເປັນນັກການເມືອງຈະຕ້ອງມີຄຸນລັກສະນະສອງຢ່າງຄື ເປັນໝາຈິ່ງຈອກ ແລະລາຊະສີ, ຕ້ອງສະຫລາດແກມໂກງ, ຮູ້ທາງໜີທີໄລ່ ແລະໃນຂະນະດຽວກັນກໍຕ້ອງມີຄວາມສະຫງ່າຜ່າ ເຜີຍຂອງລາຊະສີເປັນທີຫວັ່ນກົວຂອງຄົນ.

## 8. ດ້ານວິທະຍາສາດ

ໃນສະຕະວັດທີ XV ອີຕາລີ ເປັນສູນກາງຂອງການສຶກສາດ້ານວິທະຍາສາດໃນ ຢູໂຣບ. ມີຄົນທົ່ວທະວີບຢູໂຣບ ໄປສຶກສາຮຽນຮູ້ຢູ່ມະຫາວິທະຍາໄລຂອງ ອີຕາລີ ໃນສາຂາວິຊາຕ່າງໆເຊັ່ນ ດາລາສາດ, ຄະນິດສາດ, ຟີຊິກສາດ ແລະການແພດເປັນຕົ້ນ. ນັກວິທະຍາສາດ ອີຕາລີ ຍັງໄດ້ຄົ້ນພົບ ໂລກໝູນຮອບບິນແກນຂອງຕົນເອງ, ຄົ້ນພົບດາວບໍລິວານຂອງພະຫັດ 4 ດວງ, ສາມາດຄາດຄະເນໄລຍະທາງຂອງດາວພະເຄາະ, ຄົ້ນພົບແຮງຂອງຄວາມຖ່ວງຈຳເພາະ ແລະສິ່ງອື່ນຢ່າງຫຼວງຫລາຍ.

## 9. ດ້ານສະລິລະວິທະຍາ ແລະການແພດ

ປະເທດ ອີຕາລີ ສະໄໝຟື້ນຟູ ມີຊື່ສຽງໃນດ້ານນີ້ຫຼາຍ ໂດຍສະເພາະຢູ່ມະຫາວິທະຍາໄລປາດູ (Padua) ເປັນແຫຼ່ງວິທະຍາສາດການແພດ, ຮູ້ຈັກກົນໄກຂອງການໝູນວຽນກະແສ ໂລຫິດ ແລະການທຳງານລະບົບອະໄວຍະວະພາຍໃນຮ່າງກາຍດີກວ່າດັ່ງທີ່ເຄີຍຄົ້ນພົບມາກ່ອນໃນອະດີດ.

## 10. ດ້ານດົນຕີ

ໃນຍຸກຟື້ນຟູ ມີການປະດິດສ້າງເຄື່ອງຫຼິ້ນດົນຕີຂຶ້ນມາຫລາຍຢ່າງ ເດັ່ນທີ່ສຸດແມ່ນ ໄວໂອລິນ. ນັກດົນຕີມີຊື່ສຽງທີ່ສຸດແມ່ນ ຈີໂອວັນນີດາພາເລັດສະຕີນາ. ໃນຄ.ສ 1594 ເລີ່ມມີອຸປະກອນໂອເປຣາ (Opera) ຂຶ້ນເປັນຄັ້ງທຳອິດຂອງໂລກ.

ຍຸກຟື້ນຟູສິລະປະວິທະຍາການໄດ້ເສື່ອມລົງເນື່ອງຈາກ ອີຕາລີໄດ້ສູນເສຍຄວາມເປັນເອກໃນທາງເສດຖະກິດ ແລະການຄົ້ນພົບໂລກໃໝ່ໃນປາຍສະຕະວັດທີ XV (1493)ໄດ້ຍ້າຍສູນກາງການຄ້າຈາກທະເລ ເມເດເຕຣານຽນ ມາຢູ່ພາກພື້ນທະວີບ ຢູໂຣບ ຫຼາຍຂຶ້ນ, ເຮັດໃຫ້ດິນແດນທີ່ເປັນຢູໂຣບ ຕາເວັນຕົກໄດ້ກາຍເປັນສູນກາງຂອງອາລະຍະທຳຍຸກໃໝ່.

# ບົດທີ 3

## ສະໄໝລັດແຫ່ງຊາດ

## (National States)

### 1. ລາຊາທິປະໄຕສະໄໝໃໝ່ໃນປະເທດສະເປນ

ຕາມປະຫວັດສາດຂອງປະເທດ ສະເປນ ບໍ່ມີການລວມກັນເປັນຊາດ. ເຖິງສະຕະວັດທີ XV ປະເທດສະເປນຈຶ່ງຕ້ອງຕໍ່ສູ້ເອົາຊະນະກັບພວກມົວ (Moors)ເປັນພວກມຸດສະລິມ ເປັນເວລານານເຖິງ 500ປີ, ປະເທດສະເປນ ຈຶ່ງສາມາດຈັດຕັ້ງອານາຈັກ ຄຣິດສະຕຽນ ຂຶ້ນຢູ່ທາງພາກເໜືອ. ກາງສະຕະວັດທີ XVພວກມົວມຸດສະລິມທີ່ໄດ້ຄອບຄອງອານາຈັກ ກແຣນນາດາ (Granada) ທາງຕອນໃຕ້ສະເປນ ແລະສ້າງຕັ້ງອານາຈັກ ອິດສະຫຼະຂຶ້ນ 3 ແຫ່ງ ແລະລວມກັນເຂົ້າເປັນສັດຕູຕໍ່ອານາຈັກ ຄຣິດສະຕຽນ ທາງເໜືອ.

ເມື່ອພະເຈົ້າເອບດີນານ ທາຍາດແຫ່ງແຄວ້ນອາຣາກອນ ອະພິເສກສົມລົດກັບພະນາງອີສເບັນລາ ແຫ່ງແຄວ້ນ ຄາສຕີນ ຄ.ສ 1469. ແຄວ້ນ ອາຣາກອນ ຈຶ່ງລວມກັນເຂົ້າກັບແຄວ້ນຄາສຕີນ, ແຕ່ທັງສອງແຄວ້ນດັ່ງກ່າວບໍ່ມີພາສາເວົ້າຢ່າງດຽວກັນ. ພະເຈົ້າເອບດີນານ ຜູ້ມີອິດທິພົນໃນບໍລິເວນ ທະເລເມດີເຕລາເນ ໄດ້ໃຫ້ເສລີພາບທາງສາສະໜາໄດ້ຕາມໃຈ, ແຕ່ພະນາງ ອີສເບັນລາເສື່ອມສັດທາໃນສາສະໜາ ຄຣິດສະຕັງ ແລະດຳເນີນການປົກຄອງຢ່າງມີສິດເດັດຂາດແຕ່ພຽງຜູ້ດຽວ ແລະຈັດຕັ້ງສະພາຂຶ້ນມາເອງ, ທັງສ້າງມິດໄມຕີກັບເມືອງຕ່າງໆ, ແຕ່ງໃຫ້ຊາວເມືອງເປັນທະຫານໃນກອງທັບຫລາຍກວ່າການເພິ່ງພາກອງທັບນອກລະບົບ, ສາມາດເຮັດໃຫ້ຮວບຮວມອຳນາດເຂົ້າສູ່ສູນກາງຢ່າງເດັດຂາດ ແລະບໍ່ນອງເລືອດ. ພ້ອມນັ້ນແຕ່ງໃຫ້ສະຖາບັນກະສັດເປັນສູນກາງລວມກຳລັງ ແລະແຕ່ງຕັ້ງພະເຈົ້າເອັບດີນານ ເປັນຜູ້ບັນຊາກອງທັບຂອງແຄວ້ນເລອອງ, ນາແວັນ ແລະຄາສະຕີນ ເພື່ອກຽມຮັບມືກັບຂ້າເສິກ.

### 2. ສະເປນໃນສະໄໝຂອງຈັກກະພັດ ຊາຣົດທີຫ້າ ແລະພະເຈົ້າ ຟີລິບທີສອງ

ສະຕະວັດທີ XV ເປັນສະຕະວັດທີ່ຍິ່ງໃຫຍ່ຂອງ ສະເປນ ເຊິ່ງພະຍາຍາມຮັກສານະໂຍບາຍຄວາມສະໝ່ຳສະເໝີຂອງອຳນາດຂຶ້ນເປັນປະເທດທຳອິດໃນຢູໂຣບ. ໃນສະຕະວັດທີ XVI ຈັກກະພັດຊາຣົດທີຫ້າ ຄ.ສ 1516 – 1558 ແລະພະເຈົ້າ ຟີລິບທີສອງ ພະໄອລົດ 1558 – 1598 ໄດ້ປົກຄອງສະເປນເຂດເຢຍຣະມັນ ເຊິ່ງຮູ້ຈັກກັນດີໃນນາມວ່າ ຈັກກະພັດ ໂຣມັນອັນສັກສິດ. ພະອົງມີພະລາຊະອານາເຂດຢ່າງກວ້າງຂວາງຄື ລວມສະເປນ, ຢູໂຣບພາກກາງ ແລະແຫລມ ອີຕາລີທາງພາກໃຕ້ເຂົ້າກັນ. ພະອົງໃຊ້ເງິນ ສະເປນ ແລະກອງທັບສະເປນ ປາບປາມການແຕກແຍກໃນ ຄຣິດຕະຈັກ ແລະຕ້ອງເຮັດສົນຄາມກັບເຈົ້າຜູ້ປົກຄອງບາງແຄວ້ນພາຍໃນຈັກກະພັດ ເຢຍຣະມັນ ທີ່ໃຊ້ສາສະໜາເປັນ

ເຄື່ອງມືສ້າງຄວາມແຕກແຍກເພື່ອຖ່ວງອຳນາດພະອົງ. ໃນ ຄ.ສ 1520 ອຳນາດການນຳເມືອງ ໂທເລໂດ, ພວກຊຸມນາງ, ຊົນຊັ້ນຕ່ຳລວມຕົວກັນກໍ່ການກະບົດ ທີ່ເອີ້ນວ່າ ຄອມມູເນຣົ (Comnuneros) ແຕ່ຖືກຈັກກະພັດ ຊາຣັດ ປາບປາມກຸ່ມກະບົດລົງໄດ້ໃນ ຄ.ສ 1521.

ສ່ວນພະເຈົ້າ ຟີລິບທີສອງ. ກໍມີຄວາມເອົາໃຈໃສ່ໃນກິດຈະການທຸກຢ່າງ ແລະມີສັດທາໃນສາສະໜາ ຄຣິດສະຕັງຢ່າງເຄັ່ງຄັດ. ພະອົງປັບປຸງແປງການປົກຄອງໃນປະເທດໃໝ່ເຊັ່ນ ຈັດລະບົບສະພາທີ່ປຶກສາໂດຍມີສະພາແຫ່ງຊາດເປັນສະພາສູງສຸດ, ສະມາຊິກສະພາມາຈາກຕະກຸນຊຸມນາງທັງໝົດ ແລະພະອົງຕ້ອງຕັດສິນໃຈດ້ວຍຕົນເອງໃນທຸກເລື່ອງ. ຜູ້ນຳແຄວັນໃດທີ່ບໍ່ຍອມເສຍພາສີກິດຈະການໃຫ້, ພະອົງກໍ່ບັ່ນຮອນອຳນາດໄປເລື້ອຍໆ. ພະອົງມີຄວາມຮັ່ງມີທາງການເງິນຫຼາຍ ເຊິ່ງໄດ້ມາຈາກອານານິຍົມຂອງ ສະເປນ ໃນອາເມຣິກາ, ການແບ່ງຜົນກຳໄລຈາກການຂາຍບໍລິການທາງສາສະໜາແລະການຂາຍຕຳແໜ່ງທາງລາຊະການຕ່າງໆ, ຢູ່ທາງໃຊ້ເງິນຄຳທີ່ໄດ້ມາຈາກການເຮັດສົງຄາມກັບປະເທດຕ່າງໆຈົນໝົດ ຈົນເກືອບຈະເຮັດໃຫ້ການເງິນຂອງສະເປນ ຫລົ້ມສະລາຍໃນຄ.ສ 1598.

ສະພາບດັ່ງກ່າວ ອານາຈັກຂອງພະອົງໃນສະເປນເອງ, ດິນແດນ ຢູໂຣບ ຕ່ຳ, ໃນ ອີຕາລີ, ໃນທະວີບອາເມຣິກາ ແລະໝູ່ເກາະຟີລິບປິນ ເຊິ່ງເອົາຊື່ຂອງພະອົງໄປຕັ້ງຊື່ປະເທດ, ແຕ່ປະຊາຊົນທີ່ລ່ຳລວຍຕ່າງໆ ທີ່ຢູ່ໃຕ້ການປົກຄອງບໍ່ຕ້ອງເສຍພາສີ ບວກກັບການນຳທີ່ຂາດປະສົບການ ແລະຂາດປະສິດທິພາບບໍລິຫານ ຈຶ່ງບໍ່ສາມາດຮັກສາອານາຈັກເຫຼົ່ານັ້ນໄວ້ໄດ້.

ພາຍຫຼັງທີ່ພະເຈົ້າ ຊາຣັດທີຫ້າ ແລະພະເຈົ້າຟີລິບທີສອງປັບປຸງອຳນາດການປົກຄອງຄືນໃໝ່ ເຮັດໃຫ້ສະເປນມີຄວາມເຂັ້ມແຂງ, ເປັນປະເທດກລາສິກທີ່ອຸດົມສົມບູນທາງດ້ານແຮ່ທາດທຳມະຊາດ.ການຂະຫຍາຍຕົວໄປຍັງພື້ນທະເລ, ເຮັດໃຫ້ກອງທັບເຮືອແລະການຄ້າຈະເລີນຮຸ່ງເຮືອງເປັນຢ່າງຍິ່ງ.

## ③ ລັດທິພານິດຊາດນິຍົມ (Mercantilism)

ໃນສະຕະວັດທີ XVI - XVII ເປັນປີແຫ່ງທິດສະດີທາງເສດຖະກິດ ແລະການເມືອງທີ່ສົ່ງເສີມຄວາມຍິ່ງໃຫຍ່ຂອງລັດທີ່ ເຊື່ອວ່າອຳນາດຂອງປະເທດຈະຍິ່ງໃຫຍ່ໄດ້ຈະຕ້ອງມີໂລຫະເງິນຄຳເປັນຖານຂອງເງິນຕາ(Billionism) ສະແດງໃຫ້ເຫັນຄວາມນິຍົມທາງດ້ານວັດຖຸ, ຄວາມຄິດອອກຈາກນາມທຳມາສູ່ຮູບທຳຄື ມີວັດຖຸຫຼາຍເທົ່າໃດຍິ່ງດີແລະທັງມີອຳນາດ. ອີກປະການພານິດນິຍົມຍັງເປັນລະບົບທີ່ມີການອຸປະຖຳຢ່າງໃກ້ຊິດ ເຊິ່ງໄດ້ແກ່ເຈົ້າໜ້າທີ່ຂອງລັດ ເປັນຝ່າຍຄວບຄຸມນະໂຍບາຍຂອງລັດ ສະນັ້ນລັດທິ ພານິດຊາດນິຍົມ ຈຶ່ງເປັນການສະໜັບສະໜູນໃຫ້ລັດສົ່ງສິນຄ້າອອກຕ່າງປະເທດໃຫ້ຫລາຍທີ່ສຸດ ປະເທດ ສະເປນ ໄດ້ຮັບການປັບປຸງການຄ້າລະຫວ່າງຊາດໃຫ້ເປັນອາຊີບທີ່ສູງສົ່ງແກ່ລັດ.

ນອກຈາກນີ້ລັດທິພານິດຊາດນິຍົມ ຍັງສົ່ງເສີມໃຫ້ຜະລິດສິນຄ້າພາຍໃນປະເທດໃຫ້ຫຼາຍທີ່ສຸດຈຶ່ງສາມາດເພິ່ງຕົນເອງໄດ້ ເມື່ອເປັນດັ່ງນີ້ເຮັດໃຫ້ທຸກປະເທດໃນ ຢູໂຣບ ພະຍາຍາມແຂ່ງຂັນຍຶດຄອງດິນແດນແຫ່ງໃໝ່ (Colonialism) ເພື່ອສະແຫວງຫາເງິນຄຳ(ໂລຫະ) ເຂົ້າຫາເມືອງແມ່; ສ່ວນ

ດິນແດນອານານິຄົມກໍຈະກາຍເປັນຕະຫຼາດສິນຄ້າຂອງປະເທດເມືອງແມ່ຕາມຫຼັກທິດສະດີຂອງລັດທິ ພານິດຊາດນິຍົມ.

## 4. ສົງຄາມກູ້ເອກະລາດ ຮໍລັນດາ ແລະກອງທັບເຮືອ ອາມາດາ.

ສົງຄາມກູ້ເອກະລາດ ຮໍລັນດາ ເກີດຂຶ້ນ ຫລັງຈາກສົງຄາມລະຫວ່າງຝຣັ່ງກັບ ສະເປນ (ພະເຈົ້າ ຟຣານຊົດ ກັບ ພະເຈົ້າຊາຣັດທີຫ້າ) ເມື່ອເວລາຕໍ່ມາພວກດັດກໍໄດ້ກໍ່ການກະບົດຕໍ່ເຈົ້າຟີລິບທີສອງ ເນື່ອງຈາກວ່າພະອົງພະຍາຍາມເຂົ້າມາມີອິດທິພົນເໜືອເຂດແຄວັນໃນທ້ອງຖິ່ນຕ່າງໆໃນ ເນເທແລນ, ກົງກັນຂ້າມຝ່າຍດັກຕ້ອງການມີອິດສະຫລະຈາກລັດທິພານິດຊາດນິຍົມຂອງເມືອງແມ່ຢູ່ແລ້ວ. ສະນັ້ນພວກຊຸນນາງ, ຄົນຊັ້ນກາງ ແລະຊັ້ນຕ່ຳຈຳນວນຫຼາຍຮວມຕົວກັນກໍ່ກະບົດຕໍ່ພະເຈົ້າທີສອງ. ພະອົງກໍສົ່ງກຳລັງເຂົ້າປາບ ແຕ່ກັບເຮັດໃຫ້ດິນແດນຕອນໃຕ້ຂອງ ເນເທແລນ (ປັດຈຸບັນແມ່ນປະເທດ ແບນຊິກ) ລວມກັບພາກເໜືອຕ້ານກັບ ສະເປນ.

ຄ.ສ 1587 ພະເຈົ້າພິລິບທີສອງສົ່ງຕົວແທນໄປຂໍເຈລະຈາປະນີປະນອມ ຈຶ່ງໄດ້ດິນແດນຕອນໃຕ້(ແບບຊິກ) ຄືນມາໃຫ້ສະເປນ ແລະໃຫ້ດິນແດນແຫ່ງນີ້ຖືສາສະໜາ ຄາທໍລິກ. ສ່ວນພວກດັກໄດ້ປະກາດເອກະລາດໃນ ຄ.ສ 1584. ໂດຍມີພະນາງ ເອລິສເບກ ທີໜຶ່ງ 1558 - 1603 ເຂົ້າມາຊ່ວຍທຳລາຍປົດແອກຈາກ ສະເປນ. ສະເປນ ພະຍາຍາມລອບປົງພະຊົນ ຈຶ່ງເຮັດໃຫ້ອາລິສະເບດສົ່ງກອງທັບອັງກິດໄປເນເທແລນ ຕີກັບ ສະເປນ 1585 ແລະປະຫານຊີວິດພະນາງ ແມຣີ.

ຄ.ສ 1587 ພະເຈົ້າຟີລິບທີສອງແຫ່ງ ສະເປນ ປະກາດສົງຄາມຢ່າງເປັນທາງການກັບອັງກິດ. ກອງທັບເຮືອອາມາດາຂອງສະເປນ ທີ່ຂຶ້ນຊື່ໃນຢູໂຣບແລະບໍ່ເຄີຍຮູ້ປະລາໄຊແກ່ໃຜ ຈຶ່ງຕ້ອງຖືກອັງກິດທຳລາຍໃນຊ່ອງແຄບອັງກິດ ຄ.ສ 1588 ເຮັດໃຫ້ອັງກິດເປັນເຈົ້າພື້ນທະເລແທນສະເປນ. ຊາວໂປເຕດສແຕັນ ຕ່າງກໍພາກັນຂະໜານນາມຊື່ພາຍຸທີ່ໃຫ້ຂະບວນເຮືອອາມາດາຈົມຢູ່ໃຕ້ພື້ນທະເລວ່າ: " ພາຍຸໂປເຕດສແຕັນ" (Protestant Wind). ຄ.ສ 1609 ມີການເຈລະຈາສະຫງົບເສິກລະຫວ່າງສະເປນກັບ ຮໍລັນດາ ເປັນອັນວ່າ ສະເປນຍອມຮັບຮູ້ເອກະລາດ ຮໍລັນດາ ຊົ່ວນິລັນດອນ.

## 5. ລາຊາທິປະໄຕສະໄໝ ຝຣັ່ງ

ຜົນຂອງສົງຄາມຊ່ວຍສົ່ງເສີມລະບົບລາຊາທິປະໄຕຍຸກໃໝ່ໃນ ຝຣັ່ງໃຫ້ເຂັ້ມແຂງຂຶ້ນ, ເຮັດໃຫ້ຊາວ ຝຣັ່ງ ບໍ່ມີຄວາມເຫລື້ອມໃສຕໍ່ພວກຊຸນນາງ ແລະເຫັນວ່າພວກຊຸນນາງບໍ່ມີຄວາມຮັກປະເທດຊາດຢ່າງແທ້ຈິງ. ຊາວ ຝຣັ່ງ ຈຶ່ງຫັນມາສະໜັບສະໜູນກະສັດ. ກະສັດສາມາດເກັບພາສີເພື່ອນຳໄປອຸປະຖຳທະຫານ, ເຮັດໃຫ້ກະສັດມີກຳລັງທັບຢູ່ໃນກຳມື ເຊິ່ງສາມາດຈະກຳຈັດຊຸນນາງໄດ້ທຸກເວລາອີກດ້ວຍ.

ໃນໄລຍະຕົ້ນລະບົບລາຊາທິປະໄຕປະສົບກັບອຸປະສັກ ເນື່ອງຈາກວ່າໃນປະເທດ ຝຣັ່ງມີລະບົບເຊື່ອຖືສາສະໜາໃຫຍ່ສອງນິກາຍຄື ນິກາຍ ຄາທໍລິກ ແລະໂປແຕດສແຕັນ ຈຶ່ງເຮັດໃຫ້ເກີດສົງຄາມສາສະໜາຢ່າງຮ້າຍແຮງ. ກະສັດທີ່ຖື ຄາທໍລິກ ຖືກຍຶດລາຊະບັນລັງຈາກພວກຊຸນນາງສ່ວນ

③ ຍັງລັງງາະ ສັດເອັນອີນີ

ພຸກທີ່ສົ່ງເສີມລະບາ ເຕົ່ງໃງ່ ພເບີກອງ ຄາງເຄົາລາອະ ນຸ

ໃຫຍ່ທີ່ຖື ໂປແຕດສະແຕັນ. ມາຮອດປີ 1572 ໂຄໂລນີ ທົວໜ້າໂປແຕັດສະແຕັນ ພ້ອມດ້ວຍລູກນ້ອງ ຖືກພວກຄາທໍລິກຂ້າຕາຍຢ່າງຫາລຸນ, ແຕ່ກໍຖືກ ເຮັນຣີ ປາບປາມຢ່າງສໍາເລັດ ແລະສະຖາປານາ ຕົນເປັນກະສັດ ຝຣັ່ງ 1589 - 1610. ພະອົງມີຄວາມຊ່ຽວຊານດ້ານການຈັກການເສດຖະກິດຢ່າງດີ, ທີດິນເພື່ອການກະສິກໍາມີຫຼາຍຂຶ້ນ, ສົ່ງເສີມການຜະລິດສິນຄ້າຟຸ່ມເຟືອຍໃນກຸງ ປາຣີ, ສົ່ງເສີມອຸສາຫະກໍາຜ້າໄໝ, ຈັດການກັບລາຍຮັບລາຍຈ່າຍແຫ່ງຊາດໄດ້ດີ, ສັນທະວະໄມຕີກັບບັນດາປະເທດ ຄາທໍລິກໃນ ຢູໂຣບ ເກືອບທັງໝົດ ເພື່ອສ້າງຮາກຖານສັນຕິສຸກໃນອະນາຄົດ.

ຮວມຄວາມແລ້ວ ລາຊາທິປະໄຕສະໄໝໃໝ່ໃນປະເທດ ຝຣັ່ງ ຈະເຫັນໄດ້ການປ່ຽນແປງລະບົບອໍານາດບໍລິຫານລາຊະການຈາກຂຸນນາງມາເປັນອໍານາດບໍລິຫານຂອງກະສັດແບບສືບທອດ. ພະເຈົ້າ ຫລຸຍ XIV ໄດ້ສັ່ງສ້າງພາລະຊະວັງຂຶ້ນຫຼາຍແຫ່ງ. ພາລາຊະວັງທີສໍາຄັນຄື ພາລະຊັງ ແວນຊາຍ(Versailles) ພາລະຊະວັງນີ້ ນັບວ່າເປັນແບບສະບັບຂອງລາຊະສໍານັກຂອງ ຝຣັ່ງ ອັນມີຊື່ສຽງໄປທົ່ວໂລກ. ສິ່ງສໍາຄັນວ່າຈະສ້າງອັນໃດຂຶ້ນມາຈະຖືກຮຽນແບບໄປສູ່ລາຊະສໍານັກໃນ ຢູໂຣບ.

ພາສາ ຝຣັ່ງກາຍເປັນພາສາລະຫວ່າງຊາດຂອງຜູ້ມີການສຶກສາ ແລະເຂົ້າແທນພາສາລາຕິນ, ວັນນະຄະດີ ຝຣັ່ງ ເປັນທີ່ແຜ່ຫລາຍໃນ ຢູໂຣບ, ກາຍເປັນຜູ້ນໍາໜ້າໃນການແຕ່ງກາຍ - ເຄື່ອງນຸ່ງ, ອາຫານການກິນ ຕະຫລອດຮອດການຫຼິ້ນຕ່າງໆ. ໃນລະຊະສໍານັກ ແວນຊາຍ ເປັນທີ່ປະຊຸມຂອງລັດຖະມົນຕີຂອງພະອົງ ເຊິ່ງມີລັດຖະມົນຕີວ່າການສົງຄາມ, ການເງິນ, ການຕ່າງປະເທດ ແລະພາຍໃນ ຂຶ້ນລາຍງານໂດຍກົງໃຫ້ພະອົງ ເຊິ່ງບໍ່ຕ້ອງຜ່ານສະພານິຕິບັນຍັດ ແລະພະອົງມີຄວາມໄວ້ວາງໃຈມອບອໍານາດໜ້າທີ່ບໍລິຫານໃຫ້ຂ້າຫລວງກວດການຕ່າງໆ, ທໍາການບໍລິຫານໃນສ່ວນພູມິພາກ ແລະທ້ອງຖິ່ນ ເປັນອັນວ່າກິດຈະການພາຍໃນປະເທດດໍາເນີນໄປຢ່າງດີ.



ຮູບ 6: ພຣະລາຊະວັງ ແວນຊາຍ ສະໄໝພະເຈົ້າ ຫລຸຍ ສິບສີ່

## 6. ລັດທິພານິດນິຍົມ ແລະ ໂຄແບ

ຝຣັ່ງໃນສະໄໝພະເຈົ້າ ຫລຸຍທີສິບສີ່ ນໍາເອົາລັດທິພານິດນິຍົມມາໃຊ້ສົ່ງເສີມອໍານາດ ແລະຄວາມຮຸ່ງເຮືອງຂອງປະເທດ, ເຮັດໃຫ້ຝຣັ່ງ ກາຍເປັນປຶກແຜ່ນໄດ້ໃນທີ່ສຸດ. ລັດທິພານິດນິຍົມໃນ

ຝຣັ່ງໄດ້ເນັ້ນເຖິງຄວາມລ້ຳລວຍດ້ວຍຊັບສິນເງິນຄຳ, ວິທີການຮັກສາດູນການຄ້າຂາຍ ຢູ່ທີ່ການສົ່ງສິນຄ້າອອກໄປຕ່າງປະເທດ ແລະຕ້ອງປະຕິຮູບການເງິນ ແລະອຸດສາຫະກຳພາຍໃນ. ບໍ່ເພິ່ງປະເທດອື່ນ, ບໍ່ໃຫ້ເງິນຄຳຮົ່ວໄຫລ ໂດຍການຕັ້ງກຳແພງພາສີຂາເຂົ້າໃຫ້ສູງ. ຢູ່ໃນສະໄໝນັ້ນ ເງິນຄຳຢູ່ປະເທດຕ່າງໆ ຍັງບໍ່ທັນນິຍົມໃຊ້ຫຼາຍ ເພາະການຄ້າຍັງຢູ່ຂອບເຂດຈຳກັດ. ດັ່ງນັ້ນ ຝຣັ່ງຈຶ່ງຫາທຸກວິທີທາງໃຫ້ການຄ້າທຸກຊະນິດມາຢູ່ໃນມືຂອງ ຝຣັ່ງທັງໝົດ ໂດຍມີລັດຖະບານມາຄວບຄຸມອຸດສາຫະກຳ ເພື່ອເພີ່ມຜະລິດຕະພັນຂອງປະເທດຕະຫຼອດເຖິງການເສີມສ້າງກຳລັງທັບຂອງປະເທດໃຫ້ໝັ້ນຄົງ. ໂຮງງານທຸກແຫ່ງໃນ ຝຣັ່ງຕ້ອງຊື້ວັດຖຸດິບຢູ່ພາຍໃນຫຼືອານານິຄົມຂອງ ຝຣັ່ງເທົ່ານັ້ນ. ຈາກບັນຫານີ້, ນັບວ່າເປັນເຫດຜົນໜຶ່ງທີ່ ຝຣັ່ງສົນໃຈໃນການສະແຫວງຫາອານານິຄົມ ເພື່ອເປັນບ່ອນຈຳໜ່າຍສິນຄ້າ, ນະໂຍບາຍເຊັ່ນນີ້ ເອີ້ນວ່ານະໂຍບາຍຄ້າຂາຍກັບເມືອງຂຶ້ນ.

ພະເຈົ້າ ຫລຸຍສິບສີ່ ມີລັດຖະມົນຕີການເງິນທີ່ນິຍົມໃນລັດທິພານິດນິຍົມຄື ຈັນແບັບຕິດ ໂຄແບ(ຄ.ສ 1619 - 1683) ເປັນຜູ້ມີອິດທິພົນເໜືອຄະນະລັດຖະມົນຕີທັງຫລາຍ. ໂຄແບມີນະໂຍບາຍສະໜັບສະໜູນປະດິດສິ່ງໃໝ່ໆ, ສ້າງເຮືອຂົນສົ່ງຂະໜາດໃຫຍ່, ສົ່ງເສີມການສຶກສາວິຊາຊີບຕ່າງໆ, ເຊີນຜູ້ຊ່ຽວຊານປະເທດຕ່າງໆມາຊ່ວຍ. ຝຣັ່ງຖືເປັນຜູ້ລິເລີ່ມອຸດສາຫະກຳໃໝ່ ແລະເປັນເຈົ້າຂອງກິດຈະການທຸກຢ່າງ ຈົນມີນັກທຸລະກິດຄັດຄ້ານວ່າ ຄວນປ່ອຍໃຫ້ເອກະຊົນດຳເນີນທຸລະກິດຕາມລຳພັງ. ເຖິງຢ່າງໃດກໍຕາມ, ລັດທິພານິດນິຍົມຂອງ ໂຄແບ ໄດ້ເຮັດໃຫ້ ຝຣັ່ງ ກາຍເປັນປະເທດຜູ້ນຳໜ້າທາງເສດຖະກິດໃນຢູໂຣບຈົນເຖິງສະຕະວັດທີ XVIII ຈາກນັ້ນກໍແມ່ນ ອັງກິດໄດ້ຂຶ້ນມາເປັນປະເທດນຳໜ້າທາງເສດຖະກິດແທນທີ່, ເພາະອັງກິດສາມາດຜະລິດສິນຄ້າເຄື່ອງມືສະໄໝໃໝ່ທີ່ມີລາຄາຖືກກວ່າ ປະກອບກັບພະເຈົ້າ ຫລຸຍສິບສີ່ ເຮັດສົງຄາມ ເປັນການສິ້ນເປືອງຊັບສິນຂອງປະເທດຫລາຍ ແລະອື່ນໆ ທີ່ບໍ່ສາມາດແກ້ໄຂໄດ້ ເປັນເຫດນຳໄປສູ່ການປະຕິວັດຄັ້ງຍິ່ງໃຫຍ່ໃນປະຫວັດສາດຂອງ ຝຣັ່ງ ໃນປີ 1789 ຈົນຕໍ່ມາ.

## 7. ສົງຄາມໃນສະໄໝພະເຈົ້າຫລຸຍທີສິບສີ່

ເບື້ອງຕົ້ນ ແມ່ນສົງຄາມສາມສິບປີ ຄ.ສ 1618 - 1648 ເປັນສົງຄາມທີ່ເກີດຂຶ້ນຍ້ອນສາສະໜາຕ່າງລັດທິລະຫວ່າງຈັກກະພັດ ໂຣມັນ ອັນສັກສິດທີ່ນັບຖືສາສະໜາ ໂຣມັນຄາທໍລິກ ກັບປະເທດຕ່າງໆໃນ ຢູໂຣບ ເຊິ່ງນັບຖືສາສະໜາ ໂປແຕດສະແຕັນ ເປັນສ່ວນຫລາຍ. ຈັກກະພັດໂຣມັນເຫັນວ່າ ລັດທິ ໂປແຕັດສະແຕັນ ເລີ່ມມີກຳລັງເຂັ້ມແຂງຂຶ້ນເປັນໜ້າຫວັ່ນກົວເກງຂາມ ຈຶ່ງສະໜັບສະໜູນໃຫ້ ແມັກຊີມີລຽນ ເຈົ້າຄອງລັດທີ່ນັບຖືສາສະໜາ ຄາທໍລິກ ຜູ້ມີອຳນາດກວ່າໃນບັນດາລັດອື່ນໆ ຟື້ນຟູສາສະໜາ ຄາທໍລິກໃຫ້ເຂັ້ມແຂງ ເພື່ອຕໍ່ຕ້ານລັດທິ ໂປແຕັດສະແຕັນ ເຊິ່ງແບ່ງການເຮັດສົງຄາມສາມສິບປີ ເປັນ 4 ຕອນຄື:

- ຕອນທີ 1 ສົງຄາມ ໂບຮີມຽນ ຫຼື ພາລາທີເນັນ
- ຕອນທີ 2 ສົງຄາມ ເດນມາກ
- ຕອນທີ 3 ສົງຄາມ ສະວີເດັນ
- ຕອນທີ 4 ສົງຄາມປະເທດ ຝຣັ່ງ ແລະລາຊະວົງ ອັອດສະໂຕ - ສະເປນ ແຮບສເບີກ

ເມື່ອ ຝຣັ່ງ ຊະນະສົງຄາມ 30ປີ ແຫ່ງລາຊະວົງແຮບສະເບີກ ຈົນຕະຫລອດການໄດ້ດິນແດນ ຕ່າງໆຂອງ ເຢຍຣະມັນ. ພະເຈົ້າ ຫລຸຍທີສິບສີ່ ມີພະປະສົງຂະຫຍາຍອຳນາດຂອງ ຝຣັ່ງອອກໄປໃຫ້ກວ້າງຂວາງເຖິງແມ່ນ້ຳ ໄຣ ແລະທຳການລວມເຂດດັກຂອງ ສະເປນ ແລະແຄວັນອື່ນໆ ໃຫ້ມາຢູ່ໃຕ້ ອຳນາດ ຝຣັ່ງ ແລະຫວັງຄອບຄອງ ອິນເດຍ, ຄານາດາ, ຣອນລັງ... ເຊິ່ງປາຖະໜານຳເອົາ ວັດທະນະທຳ ຝຣັ່ງ ໃນດ້ານວັນນະສິນ (ວັນນະຄະດີ) ແລະວິຖີຊີວິດສັງຄົມ ຝຣັ່ງທົ່ວ ຢູໂຣບ ໂດຍ ພະເຈົ້າຫລຸຍສິບສີ່ສາມາດເຮັດໄດ້ຢ່າງໜ້າພິດສະວົງ. ແຕ່ຜົນສຸດທ້າຍຊາວ ຢູໂຣບຕ່າງກໍພາກັນຄິດ ເຖິງວ່າ ຝຣັ່ງເຂົ້າມາຄຸກຄາມ ຈຶ່ງຖືກຜູ້ນຳຂອງ ຢູໂຣບ ຕ້ານຄືນ.

## 8. ສົງຄາມສືບລາຊະສົມບັດ ສະເປນ

ພະເຈົ້າ ຫລຸຍສິບສີ່ ໄດ້ເຮັດສົງຄາມຄັ້ງສຸດທ້າຍຂອງພະອົງ ເນື່ອງຈາກພະເຈົ້າຊາຣັດທີສອງ ກະສັດ ສເປນສິ້ນພະຊົນ ປີ1700 ບໍ່ມີຜູ້ສືບລາຊະສົມບັດແທນ. ບັນດາຜູ້ນຳໃນ ຢູໂຣບ ລົງຄວາມ ເຫັນວ່າ ເຈົ້າຊາຍແຫ່ງ ບາວາເຣຍ ມີສິດໃນລາຊະບັນລັງສະເປນ ແຕ່ເພິ່ນສິ້ນພະຊົນໄປກ່ອນ. ໃນ ທີ່ສຸດຕ້ອງລົງຄວາມເຫັນອານາຈັກ ເນເປີນຊີຊີລີ ແລະລໍແຣັນຄອນ ໃຫ້ແກ່ຝຣັ່ງ. ແຕ່ພະເຈົ້າຊາຣັດທີ ສອງຊຽນພິໄນກຳ ຍົກດິນແດນ ສະເປນທີ່ກວ້າງໃຫຍ່ໃຫ້ແກ່ເຫລັນຂອງພະອົງກ່ອນແລ້ວ ຄືພະນັດ ດາຂອງພະເຈົ້າ ຫລຸຍທີສິບສີ່ ຊຶ່ງມີພະນາມວ່າ ຟີລິບແຫ່ງອອງຈູ. ເມື່ອຕໍ່ມາໄດ້ຄອງບັນລັງ ເປັນພະ ເຈົ້າຟີລິບທີຫ້າແຫ່ງ ສະເປນ. ສ່ວນພະເຈົ້າ ຫລຸຍ ຕ້ອງການເອົາດິນດັ່ງກ່າວນັ້ນຫລາຍທີ່ສຸດ ຈຶ່ງຮຽກ ຮ້ອງເອົາຈາກພະເຈົ້າ ຟີລິບພະນັດດາ ຈຶ່ງເຮັດໃຫ້ພັນທະມິດຂອງ ຢູໂຣບເຊັ່ນ ຈັກກະພັດອອດຕເຣຍ, ອັງກິດ, ດັກ ແລະແບນເດັນເບີກ ເຮັດສົງຄາມກັບ ຝຣັ່ງ ຈຶ່ງເອີ້ນວ່າສົງຄາມສືບລາຊະສົມບັດ ສະເປນ ໃນ ຄ.ສ1710 - 1713. ສົງຄາມຄັ້ງນີ້ມັກສູ້ຮົບກັນຢູ່ໃນ ອິຕາລີ ແລະບໍລິເວນ ຢູໂຣບຕ່ຳ.

## 9. ສົງຄາມ ເຈັດປີ

ສົງຄາມເຈັດປີ ເປັນສົງຄາມທີ່ໂລກຮູ້ຈັກໃນ ຢູໂຣບ ແລະຮູ້ຈັກກັນໃນອາເມຣິກາ, ເປັນ ສົງຄາມລະຫວ່າງຝຣັ່ງກັບອັງກິດທີ່ແຍ່ງຊິ່ງຄວາມເປັນໃຫຍ່ໃນ ອິນເດຍ ຄ.ສ 1756 ເປັນສົງຄາມ ແຫ່ງການປະຕິວັດທາງການທູດ, ເປັນສົງຄາມລະຫວ່າງປະເທດພາຄີພັນທະມິດຄື ຝ່າຍໜຶ່ງແມ່ນ ອັອດຕເຣຍ, ຝຣັ່ງ ແລະຣັດເຊຍ; ອີກຝ່າຍໜຶ່ງ ແມ່ນ ປະຣັດເຊຍ ແລະອັງກິດ ໂດຍແຕ່ລະຝ່າຍຕ້ອງ ການຊິງຄວາມເປັນໃຫຍ່ໃນດິນແດນຕ່າງໆໃນ ຢູໂຣບ.

ສົງຄາມຄັ້ງນີ້ຝ່າຍອັງກິດໄດ້ຮັບໄຊຊະນະເໜືອຝຣັ່ງ ທາງທະເລ ແລະທາງບົກເນື່ອງຈາກ ອັງກິດມີກອງທັບເຮືອທີ່ມີປະສິດທິພາບ.ອັງກິດໄດ້ຄອບຄອງດິນແດນໃນໝູ່ເກາະ ອິນເດຍຕາເວັນຕົກ ແລະໃນທະວີບອາເມຣິກາແລະໝູ່ເກາະຕາເວນອອກໃນອາຊີ. ການລົບຄັ້ງນີ້ອັງກິດມີໄຊເໜືອຝຣັ່ງ ທັງໃນທະວີບ ຢູໂຣບ, ອາຊີ ແລະອາເມຣິກາເໜືອ. ຝຣັ່ງຕອມຍອມລົງນາມສົນທິສັນຍາສະຫງົບເສິກ ເຊິ່ງເອີ້ນວ່າ "ສົນທິສັນຍາປາຣີກັບອັງກິດ" ຄ.ສ 1763, ຕ້ອງຍອມສະ ລະຜົນປະໂຫຍດທຸກຢ່າງໃນ ອິນເດຍໃຫ້ກັບອັງກິດ; ສ່ວນຝຣັ່ງຍັງເຫຼືອດິນແດງໝູ່ເກາະນ້ອຍໆບາງເລັກນ້ອຍເທົ່ານັ້ນ.

ຫລັງຈາກສົງຄາມ 7 ປີຜ່ານໄປ ຢູໂຣບ ກັບມາມີສັນຕິສຸກອີກຄັ້ງໜຶ່ງເປັນເວລາ 13ປີ; ໃນທີ່ສຸດ ກໍເກີດສົງຄາມກູ້ເອກະລາດຂອງອາເມຣິກາ ໃນ ຄ.ສ 1776 ໂດຍພວກອານານິຄົມໄດ້ໄຊຊະນະກັບກອງທັບ ອັງກິດ ໂດຍຝ່າຍອັງກິດຍອມເຮັດສົນທິສັນຍາ ປາຣີ ຍອມຮັບຮູ້ເອກະລາດຂອງອາເມຣິກາໃນ ຄ.ສ 1783.

## ບົດທີ 4

# ການປະຕິຮູບສາສະໜາ ແລະ ການກໍາເນີດນິກາຍ ໂປເຕັດສແຕັນ (The Protestant Reformation)

## 1. ສາເຫດແຫ່ງການປະຕິຮູບສາສະໜາ

ສາສະໜາ ຄຣິດ ແຕ່ດັ້ງເດີມແທ້ບໍ່ໄດ້ແບ່ງອອກເປັນນິກາຍ, ເມື່ອ ຄ.ສ 1054 ຄະນະບາດຫຼວງໃນ ຢູໂຣບ ຕາເວັນຕົກ ເກີດມີຄວາມເຫັນຂັດແຍ່ງກັນຮຸນແຮງ ຈຶ່ງໄດ້ແຍກໄປຕັ້ງນິກາຍຂອງຕົນຊຶ່ງເອີ້ນວ່າ ກຣີກ ໂອໂຕດ໋ອກ (Greek Orthodox) ເມື່ອມີການປະຕິຮູບເກີດຂຶ້ນ ຄຣິດຕະສາສະໜາ ນິກາຍ ຄາໂທລິກ ເຊິ່ງມີພະສັນທະປາປາ ເປັນປາມຸກ ກໍແບ່ງອອກເປັນສອງນິກາຍຄືໂຣມັນຄາທໍລິກ ແລະໂປເຕັດສະແຕັນດ້ວຍສາເຫດຫລາຍປະການຄື:

### *1.1 ດ້ານເສດຖະກິດການຄ້າ*

ຢູໂຣບມີຄວາມຈະເລີນຢ່າງໄວວາ, ລະບົບການເງິນເລີ່ມໝູນວຽນ, ກິດຈະການດ້ານການຄ້າຂະຫຍາຍກວ້າງຂວາງ, ເກີດການລົງທຶນເພີ່ມຜົນປະໂຫຍດເປັນຮາກຖານລະບົບນາຍທຶນໃໝ່ (Capitalism) ຍ້ອນແນວນີ້, ປະຊາຊົນເກີດຄວາມໝັ້ນໃຈຕົວເອງ, ມີຄວາມຄິດເປັນອິດສະຫຼະ, ມີຄວາມຕັດສິນໃຈໂດຍເຫດຜົນຂອງຕົນເອງເປັນຫຼັກ.

### *1.2 ດ້ານການເມືອງ*

ມີຄວາມຕື່ນຕົວໃນດ້ານຄວາມສະເໝີພາບ ແລະເສລີພາບຂອງປະຊາຊົນ ເຊິ່ງນໍາໄປສູ່ລະບົບປະຊາທິປະໄຕໃນພາຍຫຼັງ ດັ່ງທີ່ສະແດງອອກຜ່ານຄໍາກ່າວຂອງຈອນບອນ (John Ball) ເລື່ອງຄວາມສະເໝີພາບຂອງມະນຸດຊາດເມື່ອສະຕະວັດທີ XIV ວ່າ:"ເພື່ອນທີ່ຮັກແພງທັງຫຼາຍເລື່ອງລາວຕ່າງໆໃນປະເທດອັງກິດ ຍອມຈະດີໄປບໍ່ໄດ້ຈົນກວ່າທຸກສິ່ງທຸກຢ່າງຈະມີຄວາມສະເໝີພາບເທົ່າທຽມກັນ...".( ຮອງສາດສະດາຈານ ນັນທະນາ ກະປິນການຈະນະ, 2538: 327).

### *1.3 ໃນດ້ານຄວາມຄິດຈິດໃຈ*

ໂດຍຊາວ ຢູໂຣບທົ່ວໄປໄດ້ຮັບອິດທິພົນຂອງລັດທິມະນຸດນິຍົມ ສອນໃຫ້ຄົນຮູ້ຈັກເສລີພາບຂອງຄວາມຄິດສ່ວນຕົວ ແລະຄວາມສໍາຄັນຂອງມະນຸດຊາດ. ມີນັກມະນຸດນິຍົມຫລາຍຄົນມີຄວາມຄິດຈະປັບປຸງສາສະໜາໃຫ້ກົງກັບຄວາມໝາຍດັ້ງເດີມທີ່ສຸດ ແລະເຮັດໃຫ້ປະຊາຊົນໄດ້

ສຶກສາເລົ່າຮຽນຫລັກພະທຳຂອງພະເຈົ້າດ້ວຍຕົວເອງ. ຕໍ່ກັບບັນຫານີ້ ອີຣັດສມຸດ( Erasmus) ຊາວຮອນລັງຜູ້ຊ່ຽວຊານດ້ານພາສາ ກເຣັກ ແລະໂຣມັນບູຮານໄດ້ແປ ພະຄຳພີ ເປັນພາສາລາຕິນ ແລະໃຫ້ຄຳອະທິບາຍວ່າ: "ຂ້າພະເຈົ້າມີຄວາມປະຖະໜາທີ່ຈະເຫັນການສິ້ນສຸດຂອງການຄົ້ນຄວ້າສ້າງທິດສະດີສາສະໜາຕ່າງໆ ແລະໃຫ້ຄົນມາສຶກສາພະວັດຈະນະຂອງພະ ເຢຊູ ເຊິ່ງງ່າຍແກ່ການເຂົ້າໃຈບໍ່ແມ່ນພະຍາຍາມຕີຄວາມໃຫ້ວິຈິດພິດສະດານເລິກເຊິ່ງເກີນຄວາມຈິງ, ທິດສະດີສາສະໜາ ແລະຂໍ້ປະຕິບັດຂອງສັນຕະປາປາ ແລະບາດຫລວງບໍ່ສອດຄ່ອງຫລືໃກ້ຄຽງກັບຄຳສັ່ງສອນທີ່ແທ້ຈິງຂອງພະເຢຊູ." (2538 : 327)

### 1.4 *ຄວາມບໍ່ເຄັ່ງຄັດຕໍ່ສາສະໜາ*

ຍ້ອນພະສັນທະປາປາ, ບາດຫລວງ ແລະນາງຊີສະໄໝກາງບໍ່ເຄັ່ງຄັດໃນວິໄນຂອງສາສະໜາ. ສັນທະປາປາບາງອົງລັກມີພັນລະຍາ ເຊັ່ນສັນທະປາປາອາເລັກຊານເດີທີຫົກ, ບາງອົງສະສົມຊັບສົມບັດໄວ້ໃຫ້ລູກໆ, ບໍ່ສຶກສາຫາຄວາມຮູ້. ພະບາດຫລວງທີ່ ກຸງໂຣມ ມີການຂາຍຕຳແໜ່ງໃນພະລາຊະຄະນະ, ຂາຍໃບບຸນແຜ່ສ່ວນກຸສົນ, ແຕ່ງຕັ້ງຍາດພີ່ນ້ອງໃຫ້ບວດເປັນບາດຫລວງ ແລ້ວດຳລົງຕຳແໜ່ງສູງບວກກັບຊາວ ຢູໂຣບ ໄດ້ສຶກສາວິຊາຄວາມຮູ້ສູງ ຈຶ່ງບໍ່ເຊື່ອສາສະໜາແບບງ່າຍໆ. ສະນັ້ນນັກປະຕິຮູບສາສະໜາຈຶ່ງຂັດແຍ່ງກັບບາດຫລວງ ແລະເຮັດໃຫ້ການປະຕິຮູບສາສະໜາໃນຢູໂຣບໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງໂດຍມີນັກປະຕິຮູບທີ່ມີຊື່ສຽງຫຼາຍຄົນ.

## 2. ນັກປະຕິຮູບສາສະໜາ ມາຕິນລູເທີ (ຄ.ສ 1483 - 1546)

ມາຕິນລູເທີ ເກີດໃນ ເຢຍຣະມັນ, ເປັນນັກສຶກສາກົດໝາຍ ແລະມີສັດທາໃນສາສະໜາຢ່າງແຮງກ້າ. ດັ່ງນັ້ນຈຶ່ງໄດ້ສຶກສາຕຳລາສາສະໜາຢ່າງໜັກແຕ່ກໍບໍ່ໄດ້ບັນລຸຈິດໃຈອັນສູງສົ່ງຂອງພະເຈົ້າໄດ້.ຕໍ່ມາ ລູເທີ ໄດ້ເດີນທາງໄປ ກຸງໂຣມ ໄດ້ໄປເຫັນການປະພຶດຂອງພວກພະ ຢູ່ທີ່ນັ້ນເຊິ່ງມີຄວາມໃຝ່ຝັນທາງໂລກຈຶ່ງເປັນເຫດໃຫ້ລູເທີຮູ້ສຶກວ່າສາສະໜາ ໄດ້ຕົກຢູ່ໃນມືຂອງຜູ້ທີ່ບໍ່ຄູ່ຄວນດ້ວຍຫລາຍເຫດຜົນທີ່ຜິດຈາກຈຸດປະສົງເດີມ. ດ້ວຍເຫດນີ້ ລູເທີ ໂຈມຕີຢ່າງຮຸ່ງແຮງດ້ວຍຄຳປະທ້ວງ 95 ຂໍ້, ໃນນັ້ນຂໍ້ທີ 36 ກ່າວວ່າ : "ຄຣິດສາສະນິກະຊົນທຸກຄົນທີ່ຮູ້ສຶກຜິດແລະເສຍໃຈຢ່າງແທ້ຈິງກໍຈະໄດ້ຮັບການຍົກໂທດໂດຍບໍ່ຕ້ອງມີໜັງສືຊຳລະບາບ" ( 2538 : 328)



ຮູບ 7: ມາຕິນ ລູເທີ 1483 – 1546

ລູເທີໄດ້ນຳໜ້າຄວາມຄິດໄປປະຕິບັດໄດ້ສຳເລັດ. ສະນັ້ນ, ລັດທິມະນຸດນິຍົມເປັນພະລັງໜຶ່ງຊ່ວຍໃຫ້ສາສະໜາເປັນສາສະໜາຂອງສາມັນຊົນ, ໃຫ້ປະຊາຊົນເຂົ້າໃຈບັນຫາ 2 ຢ່າງຄື:

\+ ການຕັດສິນ ໂດຍໃຊ້ຄວາມເຊື່ອໝັ້ນສັດທາຄວາມເຊື່ອເທົ່ານັ້ນ ຈຶ່ງສາມາດອະທິບາຍຄວາມເລິກລັບທັງປວງຂອງພະເຈົ້າໄດ້ແລະພິຈາລະນາວ່າທຸກສິ່ງຂອງພະອົງໄດ້ກະທຳຖືກຕ້ອງແລ້ວ.

\+ ສາສະໜາຢູ່ໃນມືຂອງ ຄຣິດສາສະນິກະຊົນ ທີ່ມີຄວາມເຊື່ອໃນພະເຈົ້າ. ຫົວໜ້າສາສະໜາຄືພະຄຣິດ ແຕ່ອົງດຽວ, ບໍ່ມີມະນຸດທີ່ຕັ້ງຕົນເປັນໃຫຍ່ຂຶ້ນມາເອງ.

ອຸດົມຄະຕິຂອງລູເທີ ສັ່ງສອນໃຫ້ເພື່ອນມະນຸດທຸກຄົນຮ່ວມມື, ຮ່ວມໃຈກັນສ້າງຄວາມດີໃຫ້ແກ່ກັນ ເພື່ອຄວາມຢູ່ລອດຂອງມະນຸດທັງປວງ. ການປະຕິບັດສາສະໜາຂອງລູເທີໄດ້ນຳຊາວ ຢູໂຣບໄປສູ່ຍຸກໃໝ່ຂອງເສລີພາບທາງຈິດວິນຍານ.

## 3. ນິກາຍໂປເຕັດສແຕັນທີ່ສຳຄັນ

### *3.1 ລັດທິລູເທີແຣັນ ( Lutherannism)*

ໃນບັນດານິກາຍ ໂປເຕັດສະແຕັນທັງຫລາຍ ແມ່ນນິກາຍນີ້ມີຄວາມໃກ້ຄຽງກັບນິກາຍຄາທໍລິກທີ່ສຸດ ເພາະມີການດຳເນີນພິທີກຳທາງສາສະໜາຄື ຄາທໍລິກ, ແຕ່ສາມາດແຕ່ງດອງໄດ້. ພ້ອມນັ້ນ ລູເທີໃຫ້ຄວາມເຫັນວ່າ ມະນຸດທຸກຄົນມີບາບຕິດຕົວມາແຕ່ກຳເນີດ.

### *3.2 ລັດທິສະວິງກີ (Ulrich Zringli ຄ.ສ 1484 - 1531)*

ເປັນພະຊາວສວິດ, ມີການສຶກສາສູງ. ທັງໄດ້ຮັບອິດທິພົນຈາກລັດທິມະນຸດນິຍົມ.ຄວາມຄິດສະວິງກີຮຸນແຮງກວ່າລູເທີຫລາຍຄື ປະຕິເສດຄວາມສັກສິດຂອງພິທີກຳທັງປວງ ແລະຖືວ່າເປັນຄວາມເຊື່ອຖືທາງໄສຍະສາດທີ່ໄຮ້ຄາຫາເຫດຜົນບໍ່ໄດ້, ຕໍ່ຕ້ານການເຄົາລົບນັກບຸນຕ່າງໆທີ່ເຊື່ອກັນວ່າ ເປັນຜູ້ວິເສດສຸດເໜືອຄົນທຳມະດາສາມັນ.

### *3.3 ລັດທິຄານແວັງ (Calvinism ຄ.ສ 1509 - 1564)*

ຄານແວັງ ເປັນຄົນຝຣັ່ງ, ສຶກສາວິຊາອັກສອນສາດ ແລະເທວະວິທະຍາຈົນເປັນຊ່ຽວຊານ, ປັບປຸງສາສະໜາ ໂປເຕັດສແຕັນ ໃນ ຝຣັ່ງ ແຕ່ຖືກຕໍ່ຕ້ານຈາກພະ ແລະຊາວ ຄຣິດ ນິກາຍໂຣມັນຄາທໍລິກ. ຄານແວງໜີໄປຢູ່ເຈນເນວາ (ສະວິດເຊີແລນ) ແລ້ວທຳການເທດສະໜາສັ່ງສອນຢູ່ທີ່ນັ້ນຈົນເກີດຄວາມເຫຼື້ອມໃສໃຈສັດທາຢ່າງແຮງ ເຊິ່ງຫລັກສາສະໜາຂອງເຂົາມີດັ່ງນີ້:

1. ຄຣິດສາສະນິກະຊົນທຸກຄົນຕ້ອງຕົກນາຣົກ. ສະນັ້ນຜູ້ໃດຈະໄດ້ຂຶ້ນສະຫວັນຕໍ່ເມື່ອໄດ້ສ້າງແຕ່ຄວາມດີຈົນພະເຈົ້າເມດຕາ.
2. ຕ້ອງບຳເພັນຊີວິດຢູ່ຢ່າງງ່າຍໆ, ບໍ່ສະໜຸກລື່ນເລີງ, ບໍ່ດື່ມສຸລາ ແລະຫຼິ້ນ.
3. ເຊື່ອຄຳສອນຢ່າງເຄັ່ງຄັດ, ປະຕິບັດຄວາມດີໂດຍອັດຕະໂນມັດ, ບໍ່ຄິດເຖິງຜົນຕອບແທນ.
4. ການຈັດສາສະໜາກິດ ຕ້ອງອາໄສຫຼັກປະຊາທິປະໄຕ.
5. ຜູ້ທີ່ເປັນຄຣິດສຕຽນທີ່ດີ ຕ້ອງປະກອບສຳມາຊີບ, ຖືວ່າອາຊີບຂອງຕົນເປັນກຽດສູງ. ຄວາມສຳເລັດໃນການງານຖືເປັນຜູ້ທີ່ໄດ້ພອນຈາກພະ.ນອກຈາກລັດທິດັ່ງກ່າວນີ້ແລ້ວ ຍັງມີລັດທິອັງກິດຕື່ມອີກ.

## 4. ກະແສຕໍ່ຕ້ານການປະຕິຮູບສາສະໜາ(ຄ.ສ 1534 - 1598)

ຄວາມຈິງແລ້ວ ນິກາຍຄາທໍລິກໄດ້ມີການປັບປຸງມາແຕ່ກ່ອນຈະເກີດການແຕກແຍກທາງສາສະໜາ ແຕ່ຍັງບໍ່ທັນເຮັດຢ່າງເອົາຈິງເອົາຈັງຄືສະໄໝ ລູເທີ. ເມື່ອລູເທີປະກາດນິກາຍໂປເຕັດສແຕັນແລ້ວ ເຮັດໃຫ້ສັນທະປາປາ ແລະຄະນະບາດຫລວງ ໂຣມັນຄາທໍລິກ ເຫັນວ່າສາສະໜາຂອງຕົນເສື່ອມເສຍໄປກວ່າເດີມ ຈຳເປັນຈຶ່ງມີການປັບປຸງສາສະໜາ.

ການຕໍ່ຕ້ານການປະຕິຮູບສາສະໜາ ໂດຍມີສັນທະປາປາ ແລະຄະນະບາດຫລວງ ເຍຊູ ຜູ້ເຄັ່ງຄັດໃນສາສະໜາເປັນກຳລັງສຳຄັນ. ສ່ວນສັນທະປາປາກໍໄດ້ປັບປຸງຕົງເອງໃຫ້ເຫຼື້ອມໃສຂຶ້ນກວ່າເກົ່າ ເພື່ອເຮັດເກີດສັດທາແກ່ຊາວຄະທໍລິກໂດຍເຄັ່ງຄັດຕໍ່ວິໄນ. ໃນປີ ຄ.ສ 1545 ສັນທະປາປາໂປນທີສາມ ແລະຄະນະບາດຫລວງຈັດປະຊຸມສະພາເພື່ອຫາທາງປັບປຸງນິກາຍຄາທໍລິກ ແລະຈັດກິດເກນອື່ນໆຂອງວັດເຊັ່ນ ຈັດການປັບປຸງລະບຽບວິໄນຂອງພະ ແລະ ວັດ, ອອກຄຳສັ່ງຫ້າມຂາຍໃບບຸນ, ຫ້າມມີຕຳແໜ່ງໜ້າທີເກີນກວ່າຕຳແໜ່ງທີປະຊຸມກຳນົດ.

ຈຸດປະສົງຂອງການປະຊຸມ ຄະນະບາດຫລວງ ເຍຊູອິດ ຊັກຊວນໃຫ້ຊາວໂປໂລຍ ແລະເຢຍຣະມັນຕອນໃຕ້ກັບໃຈມາຖືຄາທໍລິກຄືເກົ່າໂດຍອ້າງວ່າ: "ດ້ວຍຄວາມຊ່ອຍເຫຼືອຂອງພະເຈົ້າຈະອຸທິດຮ່າງກາຍ ແລະຈິດໃຈເພື່ອກ່ອມເວລາເພື່ອນບ້ານໃຫ້ເປັນຄົນດີ" (2538 : 338) ເຊິ່ງຈະເຮັດໄດ້ດ້ວຍການໃຫ້ການສຶກສາ ກ່ຽວກັບສາສະໜາ, ການເທດສະໜາສັ່ງສອນ, ການເຮັດວຽກເພື່ອສາທາລະນະກຸສົນ ແລະການຊ່ອຍເຫຼືອພວກຄົນຈົນແລະຄົນຊະລາ.

## 5. ຜົນດີ ແລະຜົນຮ້າຍຂອງການປະຕິຮູບສາສະໜາ

### *5.1 ຜົນດີ*

- ເຮັດໃຫ້ສາສະໜາແຜ່ຂະຫຍາຍໄປທົ່ວ ຢູໂຣບ.
- ເຮັດໃຫ້ແຕ່ລະຊາດສາມາດເລືອກ ນັບຖືສາສະໜາທີຕົນມີສັດທາເຫຼື້ອມໃສຢ່າງມີເສລີພາບ. ສະນັ້ນໃນ ຢູໂຣບ ຈຶ່ງມີຫລາຍນິກາຍ ແລະຍັງມີນິກາຍຍ່ອຍອີກ.
- ເຮັດໃຫ້ເກີດຂັນຕິຄຸນທາງສາສະໜາ ເພື່ອໃຫ້ລັດທິຂອງຕົນຢູ່ລອດ.
- ເຮັດໃຫ້ຊ່ອຍກວາດລ້າງຄວາມບໍ່ຍຸຕິທຳຂອງນັກສາສະໜາໃຫ້ມີຄວາມຜ່ອງໃສ.
- ເຮັດໃຫ້ຄຸນຄ່າຂອງລັດທິບຸກຄົນ ແລະການສຶກສາສາທາລະນະຜູ້ນຳຂອງນິກາຍ ໂປເຕັດສແຕັນປົດປ່ອຍສາວົກໃຫ້ພົ້ນຈາກຄວາມເຊື່ອ ແລະອ່ານພະຄຳພີດ້ວຍຕົວເອງ.
- ເປັນການວາງພື້ນຖານ ກ້າວຂຶ້ນສູ່ຍຸກໃໝ່ຂອງ ຢູໂຣບ ທີວິທະຍາການທັງຫລາຍເຕີບໂຕຢ່າງໄວຄວບຄູ່ກັບຄວາມຈະເລີນທາງດ້ານການຄ້າ ແລະການຫັນເຂົ້າສູ່ລະບອບປະຊາທິປະໄຕ.

### *5.2 ຜົນຮ້າຍ*

- ກໍໃຫ້ເກີດສົງຄາມເດືອດຮ້ອນວຸ່ນວາຍໄປທົ່ວ ຢູໂຣບ, ເຮັດໃຫ້ຄົນດີມີຄວາມຮູ້ຖືກຂ້າຕາຍຈຳນວນ ບໍ່ໜ້ອຍ.

- ເປັນການຕໍ່ຕ້ານອິດສະຫຼະພາບຂອງນັກຄິດ ແລະພູມປັນຍາທີ່ແຕກຕ່າງໃຫ້ມາເຂົ້າສາສະໜາ.
- ເຮັດໃຫ້ເກີດຄວາມຄິດຕ້ານການສ້າງສັນສິລະປະ ເຊັ່ນພວກຄານແວງຫ້າມສາວົກແຕ່ງກາຍເຈີດຈາດ, ໃຫ້ເອົາເວລາໄປປະກອບອາຊີບແລະຮັບໃຊ້ພະເຈົ້າຫລາຍກວ່າໄປຜະລິດຜົນທາງສິລະປະ. ດັ່ງນັ້ນ ສະໄໝນີ້ຜະລິດຕະຜົນທາງດ້ານສິລະປະ ຈຶ່ງບໍ່ຂະຫຍາຍຕົວຫລາຍຄືສະໄໝອື່ນໆ.

# ບົດທີ 5

# ຍຸກແຫ່ງການຄົ້ນພົບແຜ່ນດິນໃໝ່ ແລະການຂະຫຍາຍຕົວຂອງ ຢູໂຣບ ໃນສະຕະວັດ XV-XVII

## Age of Discovery and Exploration

### 1. ການສະແຫວງຫາອານານິຄົມໃນໂລກໃໝ່ຂອງ ປອກຕຸຍການ ໃນອັບຟຣິກາ ແລະອິນເດຍ

ການຄົ້ນພົບຄັ້ງໃຫຍ່ ເລີ່ມຂຶ້ນໃນສະຕະວັດທີ XV ເນື່ອງຈາກວ່າມີວິຊາການໃໝ່, ສາມາດຕໍ່ເຮືອໃຫຍ່ ແລະທັນສະໄໝເດີນທະເລໃນໄລຍະທາງໄກໄດ້. ພ້ອມນັ້ນກໍເປັນການສະແຫວງຫາທາງດ້ານການຄ້າໃນ ອັບຟຣິກາ ແລະອາຊີ. ຊາວ ຢູໂຣບເລີ່ມສະແຫວງຫາທາງອານານິຍົມຈົນເຖິງສະຕະວັດທີ XVII. ຊາດທີ່ເປັນຜູ້ນໍາໃນການຄົ້ນພົບແຜ່ນດິນໃໝ່ແມ່ນ ປອກຕຸຍການ.

ປອກຕຸຍການ ເລີ່ມມີຄວາມຄິດເດີນທາງໄປ ອາຊີທາງຕາເວັນຕົກ ໂດຍເຈົ້າຊາຍ ເຮນຣີ ສັ່ງໃຫ້ມີການສໍາຫຼວດທາງອອກໄປທາງມະຫາສະໝຸດ ອັດລັງຕິກ. ປອກຕຸຍການ ເຂົ້າຍຶດໝູ່ເກາະແມດີຣາ, ອາຊໍເລັດ ຄ.ສ 1427 ແລະເຄັບເວີດ ຄ.ສ 1456 ປອກຕຸຍການໄປເຖິງຝັ່ງ ນິວກີນີ ແລະທັງເຜີຍແຜ່ສາສະໜາໄປພ້ອມ. ໃນ ຄ.ສ 1486 ບາມໂທໂລມີວໄດອັດ ນັກເດີນເຮືອ ປອກຕຸຍການໄດ້ອອກເດີນທາງຈາກລິສະບອນໄປທາງຝັ່ງຕາເວັນຕົກຂອງ ອັບຟຣິກາ ເຖິງປາຍສຸດຂອງທະວີບ. ການສໍາຫຼວດຂອງ ໄດອັດ ເຮັດໃຫ້ຮູ້ຈັກທາງໃຕ້ສຸດຂອງ ອັບຟຣິກາ. ໃນ ຄ.ສ 1497 ວາສໂຄດາຄາມາ ເດີນທາງໂດຍທາງເຮືອຈາກຝັ່ງຕາເວັນອອກ ອັບຟຣິກາ ເຖິງຝັ່ງຕາເວັນຕົກຂອງອິນເດຍ. ໝາຍຄວາມວ່າ ຢູໂຣບຄົ້ນພົບເສັ້ນທາງເດີນເຮືອໄປຍັງອາຊີ.

ເມື່ອຕໍ່ມາ ອາບຸກເຄີ ບຸກຄົນສໍາຄັນສ້າງທີ່ໝັ້ນຢູ່ ອິນເດຍຄື ເມືອງກົວເປັນສະຖານີການຄ້າແລະສ້າງສະຖານີອື່ນໆ ລວມທັງເຂດໃກ້ກັບອ່າວເປີເຊີ. ເຮັດໃຫ້ ປອກຕຸຍການ ສາມາດຄວບຄຸມການທະເລອາຣັບໄດ້ ແລະຂະຫຍາຍມາພາກຕາເວັນອອກຄື ເກາະລັງກາ, ອ່າວເບັງການ, ອາຊີອາຄະເນ_ມາເລເຊຍ. ທໍາອິດມີແຕ່ດ້ານການຄ້າ. ຕໍ່ມາໃນທາງການເມືອງເຊັ່ນ ສະເປນ, ຮອນລັງ, ອັງກິດ ແລະຝຣັ່ງຕິດຕາມມາທາງການຄ້າ ແລະການສ້າງອານານິຍົມຂຶ້ນ.

## 2. ການສະແຫວງຫາອານານິຄົມໃນໂລກໃໝ່ຂອງ ສເປນ ແລະປອກຕຸຍການ

ຄ.ສ 1492 ພະນາງອາລິສເບກ ແຫ່ງ ສະເປນ ສົ່ງຄຣິດສໂຕເຟີ ໂຄລຳບັດໄປສ້າງຄວາມສຳພັນທາງການທູດກັບສູນຕານ ອິນເດຍ ໂດຍເດີນທາງໄປທາງຕາເວັນອອກ ໄດ້ໄປພົບໝູ່ເກາະມາຮາຊາ ແລະໝູ່ເກາະອື່ນໆ. ໂຄລຳບັດອອກເດີນທາງທັງສາມຄັ້ງ. ສ່ວນຄັ້ງທີສີ່ໃນ ຄ.ສ 1502 ໄດ້ສຳຫຼວດໄປເຖິງຝັ່ງອາເມຣິກາກາງຄື ຮອນດູຣັດ ແຕ່ບໍ່ໄດ້ພົບໝູ່ເກາະ ໂມລູກັດ ຕາມຄວາມປະສົງໄວ້ກໍເຖິງແກ່ກຳໄປ. ຜົນງານຂອງ ໂຄລຳບັດ ຄືພົບທະວີບ ອາຊີ ແລະອາເມຣິກາກາງ ແລະຮູ້ຈັກວ່າມະຫາສະໝຸດ ປາຊີຟິກ ເປັນມະຫາສະໝຸດທີໃຫຍ່ກວ່າໝູ່.

ເມື່ອຕໍ່ມາມີຊາວ ຢູໂຣບ ເດີນທາງຕາມການສຳຫລວດຂອງ ໂຄລຳບັດ ໄປຍັງທະວີບອາເມຣິກາໃຕ້ ໄດ້ຂຽນໜັງສືເລົ່າເຖິງການສຳຫຼວດທະວີບໃໝ່ ເຊິ່ງໄດ້ພິມໃນ ຄ.ສ 1507 ໂດຍອະເມຣິໂກ ເວສປູດຊີ ຜູ້ເດີນສຳຫຼວດມີຄວາມສົນໃຈດ້ານພູມີສາດ, ເຮັດໃຫ້ອາເມຣິກາໄດ້ຊື່ຕາມຊື່ຂອງນັກສຳຫຼວດ.

ຄ.ສ1513 ນັກສຳຫຼວດຊື່ ບັນບົວ ຊາວສະເປນ ເດີນທາງໄປທາງນິກເຖິງ ປານາມາພົບຝັ່ງປາຊີຟິກ ນັບເປັນຜູ້ທຳອິດ. ການເດີນສຳຫຼວດທາງເຮືອໄດ້ມີຜົນສຳເລັດໃນ ຄ.ສ1519 ໂດຍເຟນັນໂດ ແມັກເຈແລັນ ຊາວປອກຕຸຍການ ນຳທີມສຳຫຼວດອາເມຣິກາໃຕ້, ເດີນທາງໄປເຖິງໝູ່ເກາະຟີລິບປິນ, ຜ່ານເຂົ້າມາອິນເດຍ. ການເດີນທາງຮອບໂລກສຳເລັດຄັ້ງທຳອິດ ໄດ້ພິສູດວ່າໂລກນີ້ກົມ.

ເມື່ອຕໍ່ມາສະເປນ ແລະປອກຕຸຍການເກີດຜິດຖຽງວິວາດກັນ. ໃນ ຄ.ສ 1529 ທັງສອງໄດ້ລົງນາມສົນທິສັນຍາ ສະຣາໂກຊາ, ແບ່ງເຂດອິດທິພົນ. ສະນັ້ນ ສະເປນຈຶ່ງບໍ່ຄ່ອຍສົນໃຈທະວີບອາຊີກັບໄປສົນໃຈດິນແດນໃນອາເມຣິກາເໜືອ ແລະໃຕ້ ທີເປັນເຂດອິດທິພົນຂອງຕົນ. ໝາຍຄວາມວ່າດິນແດນອາເມຣິກາໃຕ້ເກືບທັງໝົດແມ່ນຂອງສະເປນ ຍົກເວັ້ນບເຣຊິນຢູ່ໃນເຂດຂອງປອກຕຸຍການ.

ໃນລະຫວ່າງ ຄ.ສ 1520-1550 ເປັນໄລຍະສຳຫຼວດຕັ້ງຖິ່ນຖານໃນອາເມຣິກາກາງແລະໃຕ້ໂດຍມີສະເປນຜູ້ນຳໜ້າໂດຍໃຊ້ແຮງງານຊາວພື້ນເມືອງເປັນຜູ້ບຸກເບີກ, ມີການຂຸດຄົ້ນບໍ່ແຮ່ ຕະຫຼອດເຖິງການນຳເອົາການປູກຝັງລ້ຽງສັດຂອງ ຢູໂຣບ ເຂົ້າໄປອີກດ້ວຍ.

ການທີ່ສະເປນສົນໃຈທະວີບອາເມຣິກາເໜືອແລະໃຕ້ ຍ້ອນພວກຊາວພື້ນເມືອງແຖບນີ້ ມີອາລະຍະທຳທີ່ໝັ້ນຄົງສຳຄັນສາມແຫ່ງຄື:

### 2.1 ອາລະຍະທຳມາຢານ (mayan)

ພວກ ມາຢານຢູ່ໃນເມັກຊິກ ແລະອາເມຣິກາກາງ. ພວກນີ້ມີຄວາມຊຳນານດ້ານການກະສິກຳຢ່າງດີ, ເຮັດປະຕິທິນໃຊ້ເອງ, ມີຄວາມຈະເລີນທີ່ສຸດດ້ານສິລະປະກຳ, ແກະສະຫລັກ ແລະສະຖາປັດຕະຍະກຳ, ຮູ້ຈັກສ້າງນະຄອນໃຫຍ່ໆດ້ວຍຫີນ ກວ່າອິນເດຍແດງເຜົ່າອື່ນໆ ແລະເຜົ່າອື່ນໆຂອງໂລກໃນເວລາດຽວກັນເຊັ່ນ ການສ້າງວິຫານທີປະດັບປະດາດ້ວຍຮູບພາບ, ແກະສະຫລັກມະນຸດແລະພືດຕ່າງໆ.

ໃນດ້ານຄວາມເຊື່ອ ເຂົາເຈົ້າເຊື່ອວ່າໂລກນີ້ມີຜູ້ສ້າງຂຶ້ນມາ, ມີໄສຍະສາດເຄື່ອງລາງຂອງຂັງນານາຊະນິດ, ມີພະເປັນຜູ້ນຳທາງສາສະໜາ, ການສັງເວີຍບູຊາດ້ວຍມະນຸດເປັນຂອງທຳມະດາ.

ການບູຊາດ້ວຍມະນຸດແມ່ນອາໄສພວກທີ່ເປັນຊະເລີຍ ແລະຂ້າທາດ, ເດັກນ້ອຍ ແລະຍິງສາວພົມມະຈາລີ. ການປະຕິບັດແບບນີ້ຢ່າງໜ້ອຍໄດ້ 400 ຫຼື 600 ປີ ຄືປະມານ ຄ.ສ 1000 - 1600 ປີ.

### *2.2 ອາລະຍະທຳອິນຄາ (Incan)*

ພວກອິນຄາຢູ່ໃນເອກວາດໍ, ເປຣູ ແລະໂບລີເວຍ. ສານຊາດນີ້ມີຄວາມຈະເລີນທາງດ້ານອາລະບະທຳບໍ່ເທົ່າພວກມາຢານ, ແຕ່ຄວາມເປັນຈັກກະພັດບໍ່ນ້ອຍໜ້າພວກ ມາຢານ. ພວກນີ້ກິນມັນເທດເປັນອາຫານຫລັກ, ຮູ້ຈັກເອົາສັດເປັນເຄື່ອງຊ່ວຍແຮງງານຄົນ, ຮູ້ຈັກການຊົນລະປະທານ ແລະປູກຝັງໃນເຂດທະເລຊາຍໄດ້ດີ, ມີການຄ້າຂາຍ, ມີເມືອງສຳຄັນຕ່າງໆທີ່ສ້າງດ້ວຍຫີນ ໂດຍບໍ່ຕ້ອງໃຊ້ຊີມັງຕະຫຼອດເຖິງວິສະວະກຳຂົວທາງອື່ນໆ. ຮູ້ຈັກປະດິດເຄື່ອງໃຊ້ສອຍດ້ວຍເງິນ, ຄຳ ແລະຄຳຂາວ; ແຕ່ບໍ່ເຄີຍປະດິດອັກສອນໄວ້ຂຽນຫຼືອ່ານ. ຜູ້ປົກຄອງລັດຊື່ ອິນຄາ ເປັນຜູ້ສືບເຊື້ອສາຍມາຈາກສຸລິຍະເທບ, ມີການປົກຄອງຢ່າງເຄັ່ງຄັດ. ລາຍໄດ້ຂອງລັດແບ່ງເປັນ 3 ສ່ວນຄືຈັກກະພັດອິນຄາ ຂອງວັດ ແລະປະຊາຊົນ. ອາລະຍະທຳອິນຄາຖືກອງທັບສະເປນເຂົ້າຍຶດໄດ້ໃນ ຄ.ສ 1532.

### *2.3 ອາລະຍະທຳ ແອັດສເຕກ (Aztec)*

ເອດສເຕກ ເປັນຊົນຊາດທີ່ມີອຳນາດຫຼາຍໃນຕອນເໜືອຂອງເມັກຊິກ ແລະມີຄວາມຈະເລີນຮຸ່ງເຮືອງໃນໄລຍະ ຄ.ສ 1325 ພວກນີ້ຮຽກຮ້ອງບັນນາການຈາກເມືອງຂຶ້ນດ້ວຍຊີວິດຄົນເພື່ອທຳອິດພິທີສັງເວີຍບູຊາເທບພະເຈົ້າ. ການກະທຳເຊັ່ນນີ້ ຖືວ່າໂຫດຮ້າຍສາມານຢ່າງຍິ່ງ. ພວກເມືອງຂຶ້ນທັງຫຼາຍ ຈຶ່ງເປີດໂອກາດໃຫ້ກອງທັບ ສເປນ ເຂົ້າມາທຳລາຍລ້າງຜານ ອານາຈັກນີ້ສຳເລັດ ຄ.ສ 1521 ໂດຍໄດ້ຮັບການຊ່ວຍເຫຼືອຂອງເຜົ່າອິນເດຍແດງ.

## 3. ຜົນຂອງການຄົ້ນພົບທະວີບອາເມຣິກາ

ການຮຸກຮານຂອງສເປນໃນໂລກໃໝ່ ໄດ້ທຳລາຍອາລະຍະທຳຂອງ ມາຢານ, ອິນຄາ ແລະແອັດສເຕກລົງຈົນໝົດ ແລະອາລະຍະທຳ ສະເປນເຂົ້າແທນທີໃນອາເມຣິກາກາງແລະໃຕ້. ເສັ້ນທາງຄ້າຂາຍຂອງພວກອິນເດຍແດງໄດ້ຮັບການປັບປຸງດີຂຶ້ນ, ນຳເອົາພົດນານາຊະນິດຂອງ ຢູໂຣບໄປເຜີຍແຜ່, ນຳເອົາສັດທີ່ເປັນອາຫານ ແລະແຮງງານ, ເຮັດການກະສິກຳ ແລະຂຸດຄົ້ນແຮ່ທາດຕ່າງໆ.

ສະເປນໄດ້ປົກຄອງຊາວພື້ນເມືອງຢ່າງທາລຸນ, ຂຸດຄົ້ນຊັບພະຍາກອນທຳມະຊາດໃນໂລກໃໝ່ຢ່າງຟູມເຟືອຍ, ກໍ່ຕັ້ງມະຫາວິທະຍາໄລ ແລະໂບດສາສະໜານິກາຍຄາທໍລິກຫຼາຍແຫ່ງ ແຕ່ການຈັດການການບໍ່ດີ, ເຮັດໃຫ້ອານານິຍົມຂອງສເປນບໍ່ຈະເລີນ, ຊາວສເປນໄດ້ສົມລົດກັບຊາວພື້ນເມືອງຕ້ອງການຖ່າຍຖອດເຊື້ອສາຍໄປສູ່ຊາວພື້ນເມືອງ.

ມີສ່ວນປ່ຽນແປງໂສມໜ້າຂອງສັງຄົມຢູໂຣບ ໃຫ້ກ້າວໜ້າມາສູ່ຍຸກປັດຈຸບັນໄດ້ຢ່າງໄວວາ ເປັນຕົ້ນແມ່ນຊັບພະຍາກອນ ມາສ້າງສະເປນຢ່າງຟູມເຟືອຍ, ເກີດໄພເງິນເຟີ້, ສິນຄ້າມີລາຄາແພງ, ຊາວໄຮ່ນາຂາຍຜົນຜະລິດໄດ້ກຳໄລດີ ສາມາດໃຊ້ໜີ້ສິນຄ້າໄດ້, ຫຼືໄຖ່ຕົນເປັນອິດສະຫຼະ ແລະຍົກຖານະຕົນເປັນຊົນຊັ້ນກາງທີ່ຮັ່ງມີ. ຕໍ່ມາຊົນຊັ້ນກາງໄດ້ກາຍເປັນຜູ້ນຳໃນການປົກຄອງຂອງ ຢູໂຣບ.

## 4. ການສຳຫຼວດເສັ້ນທາງເດີນເຮືອທາງເໜືອ

ເນື່ອງຈາກວ່າ ກຸ່ມປະເທດໃນຢູໂຣບພາກເໜືອຕ້ອງການຄ້າຂາຍທາງເຮືອເຊື່ອມຕໍ່ອາຊີ ໂດຍບໍ່ຕ້ອງຢູ່ໃຕ້ອິດທິພົນຂອງ ສເປນ ແລະປອກຕຸຍການ. ສະນັ້ນ ອັງກິດກັບຮອນລັງຊອກເສັ້ນທາງເດີນເຮືອໄປເໜືອສຸດຂອງທະວີບອາເມຣິກາ. ການເດີນທາງຂອງຈອນແຄບບອດທີໄດ້ຮັບການອຸປະຖຳຂອງພະເຈົ້າແຮນຣີທີເຈັດ ແຫ່ງ ອັງກິດ ໄດໄປເຖິງຝັ່ງຕາເວັນອອກສ່ຽງເໜືອຂອງອາເມຣິກາ ຄື ນິວຟີນແລນ, ໄດ້ພົບແຫຼ່ງຈັບປາທີອຸດົມສົມບູນທີ່ສຸດ, ເຮັດໃຫ້ການເດີນທາງຈາກ ຢູໂຣບໄປຫາປາຢູ່ທາງເໜືອຂອງອາເມຣິກາຫຼາຍຂຶ້ນ ເຊິ່ງກໍ່ໃຫ້ເກີດຄວາມສຳຄັນແກ່ຊາວຢູໂຣບຫຼາຍຢ່າງຄື:

ເປັນການເພີ່ມປະລິມານອາຫານ(ປາ)ສຳລັບລ້ຽງພົນລະເມືອງຢູໂຣບຕາເວັນຕົກທີຂາດແຄນສິນໃນລະດູໜາວ.

ຊາວຢູໂຣບໄດ້ໄປສ້າງທີ່ໝັ້ນຢູ່ຕາມຊາຍຝັ່ງ, ຕິດຕໍ່ກັບພວກອິນເດຍແດງ ແລະເອສກີໂມ ທີ່ແລກປ່ຽນສິນຄ້າຄືຂົນສັດ, ເຮັດໃຫ້ຊາວ ຢູໂຣບຂະຫຍາຍທີ່ໝັ້ນເຂົ້າໄປສຳຫຼວດພາຍໃນເລິກເຂົ້າໃນອາເມຣິກາເໜືອ.

ການເຂົ້າໄປສຳຫຼວດອາເມຣິກາເໜືອ ໂດຍບໍ່ຖືກບັງຂັບຈາກພວກສເປນ ແລະປອກຕຸຍການໃນອາຊີ. ອາເມຣິກາກາງແລະໃຕ້ ເຮັດໃຫ້ ຢູໂຣບອື່ນເຂັ້ມແຂງ ແລະສາມາດຕໍ່ເຮືອເດີນທະເລຫຼາຍຂຶ້ນ ແລະເປັນຄູ່ແຂ່ງທີສຳຄັນໃນໄລຍະຕໍ່ມາ.

## 5. ການສຳຫຼວດຕັ້ງຖິ່ນຖານໃນທະວີບອັບຟຣິກາ

ທະວີບອັບຟຣິກາຕິດກັບຢູໂຣບ ແຕ່ໄດ້ຮັບການສຳຫຼວດຕາມຫຼັງ. ສ່ວນທີຮູ້ຈັກດີຄືຊາຍຝັ່ງເໜືອສຸດຂອງທະວີບ ທີມີການຕິດຕໍ່ກັບ ກເຣັກແລະໂຣມັນ. ໃນທ້າຍສະຕະວັດທີ XV ປອກຕຸຍການໄດ້ສຳຫຼວດຊາຍຝັ່ງຕາເວັນຕົກຂອງອັບຟຣິກາ ນອກຈາກນີ້ ອັງກິດ, ຝຣັ່ງ ແລະຮອນລັງເລີ່ມສະແຫວງຫາຜົນປະໂຫຍກຈາກການຊື້ຂ້າທາດ. ການທີ່ພວກປອກຕຸຍການແລະຊາວຜິວຂາວບໍ່ສົນໃຈຍ້ອນທະວີບນີ້ເປັນທີ່ງພຽງສູງ, ແມ່ນ້ຳມີແກ້ງມີຕາດຫຼາຍ, ເປັນທະເລຊາຍແຫ້ງແລ້ງ. ເມື່ອປອກຕຸຍການຫລຸດຜ່ອນອຳນາດໃນເຂດນີ້ລົງ ຈຶ່ງເປັນໂອກາດຂອງອັງກິດ, ຝຣັ່ງແລະຮອນລັງຫຼາຍຂຶ້ນ ຕາມລຳດັບ.

## 6. ການສຳຫຼວດ ແລະຕັ້ງຖິ່ນຖານໃນທະວີບອົອດສຕເຣເລຍ

ການຄົ້ນພົບຄັ້ງໃຫຍ່ໃນສະຕະວັດທີ XV ເມື່ອປອກຕຸຍການຄົ້ນພົບທາງເດີນເຮືອອ້ອມເໜືອສຸດຂອງອັບຟຣິກາສຳເລັດຜົນ. ຈາກນັ້ນ ປອກຕຸຍການ ແລະຮອນລັງສຳຫຼວດລົງທາງໃຕ້ຈາກເກາະນິວກີນີຕາເວັນອອກ ເຂົ້າໄປອ່າວໃຫຍ່ຕອນເໜືອຂອງ ອົດສຕເຣເລຍໃນ ຄ.ສ 1606

ຕໍ່ມາເຮືອສິນຄ້າຂອງຮອນລັງມາພົບຝັ່ງຕາເວັນຕົກຂອງ ອອດສຕເຣເລຍ. ຮອນລັງຈຶ່ງຈັບຈອງດິນແດນນີ້ເປັນຂອງຕົນຮຽກວ່າ (New Holland) ແຕ່ເນື່ອງວ່າເປັນເຂດແຫ້ງແລ້ງ, ອິດອັບພະຍາກອນທຳມະຊາດ ຈຶ່ງບໍ່ສົນໃຈໃນການຕັ້ງຖິ່ນຖານທີໝັ້ນ ແລະການຄ້າຂຶ້ນ.

ຕໍ່ມາ ອາບູທັດສເມນ ເປັນຜູ້ທໍາອິດເດີນທາງຈາກ ຢູໂຣບ ອ້ອມເໜືອສຸດຂອງ ອັບຟຣິກາ ແລະອ້ອມທະວີບ ອັອດສຕເຣເລຍ ໃນຄ.ສ 1642 ຈາກນັ້ນກໍຄົ້ນພົບໝູ່ເກາະ ນິວຊີແລນ ຢູ່ຕອນໃຕ້ຂອງທະວີບ, ພົບໝູ່ເກາະຕົງກາ ແລະຟູຈີ (Targa - Fuji) ຕອນເໜືອຂອງທະວີບ, ເຮັດໃຫ້ຮູ້ວ່າທະວີບອັອດສຕເຣເລຍເປັນດິນແດນສ່ວນໜຶ່ງຕ່າງຫາກ.

ຈາກນັ້ນ ທັດສເມນ ໄດ້ສໍາຫຼວດອີກເທື່ອໜຶ່ງ, ແຕ່ການສໍາຫຼວດຄັ້ງທີສໍາຄັນທີສຸດຄື ການສໍາຫຼວດຂອງ ກັບຕັນຄຸກ(Captain Cook) ຫົວໜ້າຜູ້ສັງເກດການດ້ານດາລາສາດຂອງລັດຖະບານອັງກິດ ທີຄົ້ນຄວ້າດ້ານດາລາສາດ ແລະການເດີນເຮືອໃນ ຄ.ສ 1770. ບ່ອນທີ່ອັງກິດສໍາຫຼວດອັງກິດໄດ້ປະກາດເປັນເຂດອັງກິດ ເຊິ່ງຮຽກວ່າ "New South Wale". ເຮັດໃຫ້ອັງກິດໄດ້ທະວີບອັອດສຕເຣເລຍ ເປັນບ່ອນລະບາຍນັກໂທດ.

ໃນ ຄ.ສ 1788 ອັງກິດສົ່ງນັກໂທດເຂົ້າໄປໃຊ້ແຮງງານໃນການສ້າງຖະໜົນ, ທາງລົດໄຟ, ການກະເສດ. ອາດເວົ້າໄດ້ວ່າທະວີບ ອັອດສຕເຣເລຍ ເລີ່ມຕົ້ນດ້ວຍການເປັນອານານິຍົມນັກໂທດຕັ້ງແຕ່ ຄ.ສ1788 - 1868. ຈາກນັ້ນຈຶ່ງຄ່ອຍມີການປ່ຽນແປງ, ມີບໍລິສັດເອກະຊົນລົງທຶນດ້ານການກະເສດແລະລ້ຽງສັດຕະຫຼອດເຖິງການຄົ້ນພົບບໍ່ທອງຄໍາໃນສະຕະວັດທີ XIX ເສດຖະກິດຂອງອອດສຕເຣເລຍດີຂຶ້ນຕາມລໍາດັບ, ເຮັດໃຫ້ຊາວຕ່າງຊາດ ໂດຍສະເພາະແມ່ນຈີນເຂົ້າໄປຢ່າງຫຼວງຫຼາຍ ເຮັດໃຫ້ລັດຖະບານຂອງປະເທດ ອອກນະໂຍບາຍທີ່ຮຽກວ່າ "ຜິວຂາວຂອງອັອດສເຕເຣເລຍ" (White Australia) ເມື່ອຫຼັງຈາກສົງຄາມໂລກຄັ້ງທີສອງ ນະໂຍບາຍນີ້ຖືກຍຸບເລີກໄປ. ປັດຈຸບັນອັອດສເຕເຣເລຍຈັດເປັນປະເທດເປີດໃຫ້ຊາດອື່ນໆ ມີໂອກາດເຂົ້າໄປຕັ້ງຖິ່ນຖານຢ່າງຫຼວງຫຼາຍ.

# ບົດທີ 6

## ການປະຕິວັດທາງພູມປັນຍາໃນສະຕະວັດທີ XVII - XVIII

## (The Intellectual Revolution)

ການປະຕິວັດພູມປັນຍາ ແລະ ການປ່ຽນແປງລະບອບ ... ວັດທະນະ

### 1. ນັກປະຕິວັດທາງພູມປັນຍາໃນສະຕະວັດທີ XVII

ຄວາມກ້າວໜ້າທາງພູມປັນຍາໃນສະຕະວັດທີ XVII ເປັນຕົ້ນແມ່ນຄວາມຈະເລີນທາງດ້ານເສດຖະກິດ ແລະວັດທະນະທໍາຂອງຢູໂຣບຄື ອິດທິພົນຂອງການຟື້ນຟູ, ຄວາມມັ່ງຄັ່ງຂອງຄົນຊັ້ນກາງການຂະຫຍາຍຖານະຂອງຊົນຊັ້ນຕໍ່າ ແລະຄວາມກ້າວໜ້າທາງດ້ານວິຊາການຖ່າຍທອດຈາກດິນແດນ ຕ່າງໆສູ່ ຢູໂຣບ. ລັກສະນະຂອງການປະຕິວັດທາງພູມປັນຍາ ແມ່ນປາກົດອອກໃນປັດຊະຍາ ແລະ ວິທະຍາສາດເປັນສ່ວນຫຼາຍ. ນັກປະຕິວັດທາງພູມປັນຍາທີ່ມີຊື່ສຽງໃນສະຕະວັດທີ XVII ມີ.

### 1.1 ເຣີເນ ເດສຄານເທີ ຄ.ສ 1596 - 1650

ເດສຄານເທີ ເປັນອັດສະລິຍະບຸກຄົນຜູ້ໜຶ່ງ ທີ່ວາງແບບແຜນປັດຊະຍາ, ເຮັດໃຫ້ເກີດການປະຕິວັດທາງພູມປັນຍາ. ເດສຄານເທີ ເປັນທະຫານ, ເປັນນັກຄະນິດສາດ ແລະຟີຊິກສາດ ທັງເປັນຜູ້ປະກາດລັດທິເຫດຜົນໃນສະໄໝເປັນນີ້ແຕກຕ່າງກັບສະໄໝກາງຄື ໄດ້ຍົກເລີກຕຳລາ ແລະຄວາມເຊື່ອສະໄໝກາງແລ້ວມາໃຊ້ວິທີການທີປາສະຈາກເທບພະເຈົ້າ (God) ຫັນມາໃຊ້ວິທີທາງຄະນິດສາດ ເພື່ອຫາເຫດຜົນຄວາມຈິງປະຈັກຕາ ໄປສູ່ການສະຫລຸບດ້ວຍເຫດຜົນ.

ເດສຄານເທີ ເຊື່ອວ່າລັດທິຄວາມຈິງ (Axiosm) ຈາກໜັງສືທີ່ມີຊື່ສຽງຄື: "I think, There i am) (2538: 357) ເຂົາເຊື່ອວ່າສາມາດສະແຫວງຫາຄວາມຮູ້ທັງຫລາຍໃນຈັກກະວານເຊັ່ນ ການພິສູດວ່າ ເທບພະເຈົ້າດຳລົງຢູ່, ມະນຸດເປັນສັດຊ່າງຄິດ ຫຼືຈິດຕ່າງກັບວັດຖຸ ແລະຍັງພິສູດວ່າຄົນສາມາດເຂົ້າເຖິງຄວາມຈິງໂດຍເຫດຜົນ. ເຂົາຢືນຢັນຕື່ມວ່າ ມະນຸດມີມັນສະໝອງປະເສີດກວ່າສັດໂລກອື່ນ, ຈິດບໍ່ມີຮູບຄືວັດຖຸ ແຕ່ເປັນແກນສານທີ່ພະເຈົ້າປະທານໃຫ້ໄວ້ໃນສັງຂານຂອງມະນຸດ ແລະຕຳ ແໜ່ງຂອງຈິດຢູ່ທີ່ຫົວ. ສ່ວນວ່າ ການຄວບຄຸມຄູ່ກັນໄປຂອງຈິດແລະກາຍເອີ້ນວ່າ: "Innate Ideas" ເປັນຄວາມຈິງປະຈັກພະຍານ ໂດຍບໍ່ມີການສຳພັນກັບປະສົບການ

### 1.2 ເບັນດິກ ສປີໂນຊາ ຄ.ສ 1632 - 1677

ສປີໂນຊາ ກຳເນີດໃນກຸງອຳສເຕີດຳ, ເປັນນັກປັດຊະຍາໃຊ້ລັດທິເຫດຜົນ ແລະລັດທິກົນຈັກວ່າ ນັກປັດຊະຍາບໍ່ຈຳເປັນຫັນໄປຫາຝ່າຍສາສະໜາ ເພື່ອຄົ້ນພົບຄວາມຈິງອີກຕໍ່ໄປຄືມີເຫດຜົນຈະໃຫ້ຄວາມຮູ້ທີ່ເປັນຄວາມຈິງ ເຊິ່ງໄດ້ຢັ້ງຢືນວ່າມີວັດຖຸສຳຄັນຢູ່ໃນຈັກກະວານນັ້ນ ແມ່ນຈິດແລະກາຍ, ພະເຈົ້າມີລັກສະນະເປັນທຳມະຊາດຢູ່ໃນໂຕ. ສປີໂນຊາ ພິສູດວ່າ ຄວາມດີທີ່ສົມບູນມີຢູ່ໃນ "ຄວາມຮັກຂອງພະເຈົ້າ" ນັ້ນຄືການເຄົາລົບບູຊາລະບຽບ ແລະຄວາມກົມກືນຂອງທຳມະຊາດ. ດ້ວຍເຫດນີ້ ສປີໂນຊາຈຶ່ງເປັນຜູ້ເຄັ່ງຄັດຕໍ່ຄວາມຍຸຕິທຳ, ຂັນຕິຄຸນ ແລະການມີຊີວິດຢູ່ດ້ວຍເຫດຜົນ ພ້ອມດ້ວຍມະນຸດສະທຳ ແລະລຸລ່ວງອາລົມຄຽດແຄ້ນໄດ້.

### 1.3 ໂທມັດ ຮອບສ

ໂທມັດ ຮອບສ ເປັນນັກສະແຫວງຫາເຫດຜົນຜູ້ຍິ່ງໃຫຍ່ຜູ້ໜຶ່ງທີ່ເຫັນພ້ອມວ່າ ເລຂາຄະນິດເປັນວິທີການທີ່ເໝາະສົມທີ່ສຸດ ໃນການໃຊ້ຄົ້ນຫາຄວາມຈິງໃນແງ່ປັດຊະຍາ. ເຂົາຢືນຢັນວ່າຮາກຖານຂອງຄວາມຮູ້ຢູ່ທີ່ປະສາດສຳພັນ, ຈິດເປັນພຽງການເຄື່ອນໄຫວຂອງສະໝອງ, ແຕ່ບໍ່ມີເຫດຜົນວ່າ, ພະເຈົ້າຖ້າເຮົາເຊື່ອວ່າມີຈິງຈະຕ້ອງມີກາຍຈິດ. ຄວາມຄິດຂອງຮອບສ ເປັນຄວາມຄິດແບບວັດຖຸນິຍົມ (Materialism) ຢ່າງແທ້ຈິງ. ພ້ອມນັ້ນ, ເຂົາຍັງເຊື່ອລັດທິກົນຈັກ (Mechanism) ວ່າອັນໃດທີ່ຄົນເຮົາເຮັດມາຈາກຄວາມຢາກ, ຄວາມຢາກນີ້ໄດ້ມາຈາກປະສົບການ, ແຕ່ບໍ່ມີມາດຖານທີ່ແນ່ນອນໃນເລື່ອງຄວາມດີ ແລະຄວາມຊົ່ວຄື ຄວາມດີແມ່ນສິ່ງທີ່ໃຫ້ຄວາມສຸກສຳລານ, ຄວາມຊົ່ວແມ່ນສິ່ງທີ່ນຳຄວາມທຸກມາໃຫ້.

### 1.4 ທິດສະດີເສລີນິຍົມທາງການເມືອງຂອງຈອນລັອກ (ຄ.ສ 1632 - 1704)

ທິດສະດີການເມືອງຂອງຈອນລັອກ ສ່ວນຫຼາຍມາຈາກໜັງສືຕ່າງໆທີ່ຈອນລັອກຢືນຢັນວ່າ: "ດັ່ງເດີມມະນຸດເກີດມາມີອິດສະຫຼະພາບ ແລະຄວາມສະເໝີພາບຢ່າງສົມບູນ, ກົດໝາຍກໍມີແຕ່ກົດ

ໝາຍຂອງທຳມະຊາດ ຊຶ່ງແຕ່ລະຄົນໃຊ້ກໍເພື່ອຄຸ້ມຄອງສິດທີ່ອັນເກີດຕາມທຳມະຊາດ." (2538:358) ໜັງສື່ເລື່ອງຊີວິດ ແລະເສລີພາບນີ້ຕໍ່ມາບັນການມະນຸດເລີ່ມມີຄວາມສັບສົນວຸ່ນວາຍ ໃນການມີຊີວິດຢູ່ຕາມພາວະທຳມະຊາດ ແລະມະນຸດຈຶ່ງໄດ້ພ້ອມໃຈສະຖາປະນາລັດຖະບານ ແລະອຳນາດບາງປະການໃຫ້ລັດຖະບານ ພຽງແຕ່ບໍ່ແມ່ນເປັນອຳນາດລັດທິເດັດຂາດເທົ່ານັ້ນ.

ຈອນລັອກໄດ້ປະນາມລັດທິການປົກຄອງເດັດຂາດທຸກຮູບແບບ. ສະນັ້ນ ຈອນລັອກຈຶ່ງມີອິດທິພົນບໍ່ໜ້ອຍ. ເຂົາເຊື່ອວ່າ ຮາກຖານແທ້ຈິງໃນການດຳເນີນຂອງລັດຖະບານ ແລະການມີລັດຖະບານເຮັດໜ້າທີ່ປົກປ້ອງຊີວິດ, ເສລີພາບ ແລະຊັບສິນບັດຂອງປະຊາຊົນ ທີ່ຖືກຕ້ອງຕາມກົດໝາຍນັ້ນ ປະຊາຊົນຈະເຊື່ອຟັງລັດຖະບານ ແລະສະໜັບສະໜູນຢ່າງເຕັມທີ່. ກົງກັນຂ້າມຖ້າລັດຖະບານເຮັດບໍ່ດີຈະຖືກປະຊາຊົນລົບລ້າງ. ຍ້ອນແນວນີ້ອິດທິພົນຂອງ ລັອກຈຶ່ງເປັນຮາກຖານໃຫ້ການປະຕິວັດຂອງຊາວອາເມຣິກາ, ຝຣັ່ງ ແລະຍັງມີອິດທິພົນຕໍ່ການຮ່າງລັດຖະທຳມະນູນຂອງຫຼາຍປະເທດໃນ ຢູໂຣບ.

### *1.5 ທິດສະດີນິຍົມທາງການເມືອງຂອງ ວອນແຕ(Voltaire)*

ວອນແຕ ແລະມອງເຕສກິເອ ຊາວຝຣັ່ງ, ເປັນຜູ້ນຳໃນທິດສະດີ ໂດຍສະເພາະວອນແຕກຽດຊັງສາສະໜາ ຄຣິດສະຕຽນ ວ່າເປັນສັດຕູຂອງມະນຸດຊາດ ແລະການປົກຄອງແບບທາດ. ສ່ວນມອງເຕສກິເອີ ເປັນນັກຄິດທີ່ດີເດັ່ນໃນສະຕະວັດ XVIII. ເຂົາເຊື່ອວ່າສະພາບແວດລ້ອມຈະມີອິດທິພົນຕໍ່ສະພາບສັງຄົມ, ສະຖາບັນການເມືອງ ແລະກົດໝາຍ. ມອງແຕບໍ່ນິຍົມລັດທິຜະເດັດການ, ເຂົາໄດ້ວາງຮາກຖານແບບການປົກຄອງໄວ້ 3 ແບບຈະແຈ້ງຄື:

1. ລະບົບສາທາລະນະລັດ (Republic) ແບບປະສົມປະສານຊັ້ນຄົນຕ່າງໆ.
2. ລະບົບລາຊາທິປະໄຕໂດຍອຳນາດຈຳກັດ (Limited Monarchy) ແບບການປົກຄອງຢູ່ພາຍໃຕ້ຮີດຄອງປະເພນີຄື ຜູ້ນຳຖືກຈຳກັດອຳນາດຕາມກົດໝາຍ ແລະປະເພນີ.
3. ລະບົບການໃຊ້ອຳນາດ ໂດຍບໍ່ເປັນທຳ ແລະບໍ່ມີຂໍ້ຈຳກັດ.(Despotism)

### *1.6 ນັກເສດຖະກິດຂອງອາດາມສະມິດ (Adam Smith 1723 - 1790)*

ອາດາມສະມິດເປັນຊາວສະກັອດ ເປັນນັກເສດຖະກິດທີ່ຍິ່ງໃຫຍ່ທີ່ສຸດຂອງຍຸກແຫ່ງຄວາມຮູ້ແຈ້ງ (The Enlightenment) ໜັງສືທີ່ມີຊື່ສຽງຄື The wealth of Nation 1776. ເປັນຕຳລາເສດຖະກິດທີ່ມີອິດທິພົນທີ່ສຸດເຫຼັ້ມໜຶ່ງເຊິ່ງໄດ້ຢືນຢັນວ່າ ແຮງງານເປັນທີ່ມາຂອງຄວາມມັ່ງຄັ່ງ, ບໍ່ແມ່ນການກະເສດ ແລະໄດ້ສະໜັບສະໜູນການຄ້າເສລີວ່າ ລັດຖະບານຄວນມີສ່ວນກ່ຽວຂ້ອງກັບການຄ້າເອກະຊົນ, ເຮັດໃຫ້ເອກະຊົນແຕ່ລະຄົນໄດ້ຄ້າຂາຍໄດ້ໂດຍສະດວກ. ຂອຍປ້ອງກັນບໍ່ໃຫ້ເກີດ [illegible] ແຫ່ງສາທາລະນະສຸກ.

## 2 ຍຸກແຫ່ງຄວາມຮູ້ແຈ້ງ (The Enlightenment)

ຈຸດສູງສຸດແຫ່ງຄວາມຮູ້ແຈ້ງມີຄື

1. ມີແຕ່ເຫດເທົ່ານັ້ນທີ່ພາໃຫ້ເຮົາໄປສູ່ຄວາມສະຫຼາດຮອບຮູ້ແລະຄວາມຮູ້ມີມາດຖານ ມາຈາກປະສາດສຳພັດ.

2. ຈັກກະວານເປັນເຄື່ອງຈັກກົນທີ່ຖືກຄວບຄຸມດ້ວຍກົດເກນຕ່າງໆທີ່ບໍ່ອາດແປປວນຫຼືປ່ຽນແປງດ້ວຍອຳນາດມະນຸດ.

3. ໂຄງສ້າງຂອງສັງຄົມທີ່ດີທີ່ສຸດ ຕ້ອງເປັນທຳມະດາ ແລະເປັນທຳມະຊາດທີ່ສຸດ ໂດຍອາໄສເຫດຜົນ ແລະເສລີພາບ.

4. ບໍ່ມີບາບດັ້ງເດີມ ( Original Sin ) ຄົນຈະບໍ່ໂຫດຮ້າຍຖ້າບໍ່ແມ່ນພະຫຼືທໍລະລາດ ພາເຮັດສົງຄາມ.

ຈາກນັ້ນ ມີຜູ້ສະຖາປານາຍຸກແຫ່ງຄວາມຮູ້ແຈ້ງ ໂດຍແຮງບັນດານໃຈກໍ່ໃຫ້ເກີດຍຸກນີ້ ສ່ວນຫຼາຍມາຈາກຄວາມສົນໃຈທາງປັດຊະຍາຂອງ ເດຄານ ຊປີຊາໂນ ແລະຮອບ, ແຕ່ຜູ້ສະຖາປະນາຍຸກນີ້ຢ່າງແທ້ຈິງຄື ເຊີໄອແຊັດ ນິວເຕີນ ແລະຈອນລັອດ.

## 3. ປັດຊະຍາເອກຍຸກແຫ່ງຄວາມຮູ້ແຈ້ງໃນສະຕະວັດທີ XVIII

ວອນແຕ (ຄ.ສ1694 - 1778) ຍຸກແຫ່ງຄວາມຮູ້ແຈ້ງໃນສະຕະວັດທີ XVIII ຮຸ່ງເຮືອງທີ່ສຸດໃນຝຣັ່ງພາຍໃຕ້ການນຳຂອງ ວອນແຕ. ວອນແຕກຳເນີດໃນຊົນຊັ້ນກາງ, ເປັນນັກຂຽນປະເພດສຽດສີເຍາະເຍີ້ຍສັງຄົມທີ່ປາກກ້າວ່າແຂງ ຈົນຖືກເຂົ້າຄຸກ ບານຕີກ ແລະຖືກເນລະເທດໄປອັງກິດເຖິງສາມປີ ຈົນເຮັດໃຫ້ຫຼົງໄຫຼໃນສະຖາບັນການເມືອງຂອງອັງກິດ.

ຜົນງານການຂຽນກ່ຽວກັບປັດຊະຍາທີ່ລືຊື່ທຳອິດແມ່ນ (Letters on the English) ເຊິ່ງໄດ້ປັດຊະຍາເອົາແນວຄວາມຄິດຂອງນິວເຕີນ ແລະຈອນລັອກ ແລະເຫຼັ້ມຕໍ່ມາ (Philosophical Dictionary, Candide) ເປັນໜັງສືປະຫວັດສາດ ແລະໂຄງກອນ. ໂດຍໜັງສືສ່ວນຫຼາຍໄດ້ອະທິບາຍເຖິງວ່າ ໂລກນີ້ຖືກຄວບຄຸມໂດຍທຳມະຊາດ, ເຫດຜົນ ແລະປະສົບການເທົ່ານັ້ນທີ່ຈະເປັນເຄື່ອງນຳທາງຂອງຊີວິດມະນຸດ. ເຂົາມັກເບິ່ງໂລກໃນແງ່ທີ່ໂຫດຮ້າຍຂົມຂື່ນ ມີຢູ່ເລື່ອງດຽວທີ່ ວອນແຕຊື່ນຊົມສັນຕິພາບ ແລະອິດສະຫຼະພາບໃນ (ອາເມຣິກາໃຕ້) ເພາະຢູ່ອາເມຣິກາໃຕ້ບໍ່ມີຄະດີຄວາມ, ບໍ່ມີຄຸກ, ປະຊາຊົນບໍ່ມີຄວາມໂລບ ແລະຄວາມຊົ່ວຮ້າຍ.

ນອກຈາກນີ້ ກໍຍັງມີນັກປັດຊະຍາຜູ້ອື່ນໆເຊັ່ນ ເດນີດ ເດກີໂຣ, ລອງແບ, ເອດເວທີອຸດສ, ເຄວິດຮຸນ ລ້ວນແຕ່ໄດ້ຮວບຮວມຄວາມຮູ້ດ້ານ ສາລານຸກົມ (The Encyclopedists)ປັດຊະຍາວິທະຍາສາດ, ລັດທິເຫດຜົນ, ເສລີພາບນິຍົມ, ວັດຖຸນິຍົມ ແລະອື່ນໆ.

## 4. ລັດທິສາສະໜາຍຸກແຫ່ງຄວາມຮູ້ແຈ້ງ (Enlightenment)

ລັດທິເຊື່ອຖືວ່າມີເຫດພະເຈົ້າ ເປັນລັດທິທີ່ປະຫຼາດໃນຍຸກນີ້ ຫັນມານັບຖືແທນສາສະໜາທັງຫຼາຍ. ຫຼັກເກນຂອງລັດທິທີ່ເຊື່ອຖືວ່າມີພະເຈົ້າສະຫລຸບໄດ້ຄື:

1. ມີພະເຈົ້າອົງໜຶ່ງເປັນຜູ້ສ້າງຈັກກະວານຂຶ້ນມາ ແລະບັນຍັດກົດທຳມະຊາດເພື່ອໃຊ້ຄວບຄຸມຈັກກະວານ.
2. ພະເຈົ້າຈະບໍ່ຫຍຸ້ງກ່ຽວກັບວຽກຂອງມະນຸດໃນໂລກ.

3. ບົດສູດເນີນພິທີການທາງສາສະໜາ ລ້ວນແຕ່ເປັນເລື່ອງໄຮ້ປະໂຫຍດ, ພະເຈົ້າບໍ່ອາດຮັບສິນບົນ.

4. ມະນຸດມີອິດສະຫຼະພາບທາງຈິດໃຈທີ່ຈະເລືອກສິ່ງທີ່ດີ ແລະຫຼີກລ່ຽງຄວາມຊົ່ວໄດ້ແລະບໍ່ມີຫຼັກທີ່ວ່າ ພະເຈົ້າເປັນຜູ້ກຳນົດ ໂຊກຊາຕາໄວ້ໃຫ້.

## ບົດທີ 7

## ການປະຕິວັດໃນອັງກິດ, ອາເມຣິກາ ແລະຝຣັ່ງ

### I. ການປະຕິວັດໃນອັງກິດ

ການປະຕິວັດໃນອັງກິດ ຫຼືເອີ້ນວ່າ ການຂັດແຍ່ງກັນໃນຄັ້ງໃຫຍ່ລະຫວ່າງກະສັດກັບລັດຖະສະພາ. ອາດເວົ້າໄດ້ວ່າເລີ່ມແຕ່ສະໄໝລາຊະວົງ ສຈວດ(Stuart) ພະເຈົ້າເຈມທີໜຶ່ງ (ຄ.ສ 1603 - 1625) ຮູ້ວ່າຫຼັກການປົກຄອງຂອງອັງກິດສະໄໝນີ້ມີຄວາມຂັດແຍ່ງກັບຫຼັກການປົກຄອງເດີມຄື ຫຼັກເທວະສິດທິຂອງກະສັດເມື່ອ Divine Rights of Kings ປະກາດໃນລັດຖະ. ສະພາອັງກິດວ່າການປົກຄອງຄວນຈະເປັນສິດທິເດັດຂາດຂອງກະສັດ ຄຳປະກາດນີ້ເທົ່າກັບວ່າປະກາດໃຫ້ອັງກິດກັບໄປປົກຄອງແບບສົມບູນຍາສິດທິລາດເໝືອນເດີມ. ສະນັ້ນ ຈຶ່ງເຮັດໃຫ້ລັດຖະສະພາອັງກິດຄັດຄ້ານ ເພາະເປັນການຂັດຕໍ່ມະຫາບັດ ເຊິ່ງພະເຈົ້າຈອນໄດ້ລົງພະນາມໄວ້ໃນ ຄ.ສ 1215 ວ່າ ອັງກິດຖືຫຼັກປະຕິບັດການປົກຄອງຈະຕ້ອງໄດ້ຮັບການຮ່ວມມືລະຫວ່າງກະສັດກັບກຳມະການບໍລິຫານແຜ່ນດິນ.

ນອກຈາກນີ້, ພະເຈົ້າເຈມຍັງກີດກັ້ນການນັບຖືສາສະໜາຕ່າງໆ. ສະນັ້ນຈຶ່ງເຮັດໃຫ້ຜູ້ຖືກກີດຂີ່ທົນຕໍ່ການບັງຄັບບໍ່ໄດ້ ໂດຍສະເພາະພວກນັບຖື ຄາທໍລິກ ລວມຕົວກັບວາງແຜນ ຍູບເລີກລັດຖະສະພາ. ດັ່ງນັ້ນ, ລັດຖະບານພະເຈົ້າເຈມຈັບກຸມຜູ້ວາງແຜນ ຍູບເລີກ ລັດຖະສະພາ. ດັ່ງນັ້ນ. ລັດຖະບານພະເຈົ້າເຈມຈັບກຸມຜູ້ວາງແຜນໄປປະຫານຊີວິດຢ່າງຫຼວງຫຼາຍ ແລະປາບປາມສາສະໜາອື່ນໆຢ່າງເດັດຂາດ. ໃນ ຄ.ສ 1620 ພວກໂປແຕັດສະແຕັນ - ນິກາຍພິວຣິແຕນ ຕ້ອງການມີຄວາມອິດສະຫຼະ. ຈຶ່ງອົບພະຍົບໄປຮອນລັງ, ອາເມຣິກາ ແລະພວກນີ້ທຳການເປັນກະບົດຕໍ່ພະເຈົ້າເຈມທີໜຶ່ງຈົນເຖິງສະໄໝພະເຈົ້າຊາຣັດທີໜຶ່ງໃນ ຄ.ສ 1625 - 1649

### 1. ລາຊະການພະເຈົ້າ ຊາຣັດທີໜຶ່ງ

ຄວາມຂັດແຍ່ງລະຫວ່າງລັດຖະສະພາ ກັບກະສັດຍິ່ງເພີ່ມທະວີຄວາມຮຸນແຮງຂຶ້ນຍ້ອນນະໂຍບາຍຫຼັກເທວະສິດທິນັ້ນເອງ. ພ້ອມນັ້ນ ຍັງມີເລື່ອງຊຸ່ນເຄືອງທີ່ລັດຖະສະພາອະນຸມັດເງິນເຮັດ

ສົງຄາມກັບ ສເປນ ແລະຝຣັ່ງໃນປີ 1625 ແລະ 1627 ແລະຍັງມີຄວາມຂັດແຍ່ງກັບສະພາຂຸນນາງ ແລະສະພາສາມັນໃນເລື່ອງເກັບພາສີ ໂດຍທີ່ພະເຈົ້າຊາຣັດບໍ່ໄດ້ຜ່ານມະຕິຂອງສະພາ ຖືວ່າເປັນການໃຊ້ອຳນາດແຕ່ພະອົງດຽວ ຈົນເຖິງ 11 ປີ.

ຄ.ສ 1640 ເກີດສົງຄາມກັບສະກອດແລນ ພະເຈົ້າຊາຕ້ອງການງົບປະມານເພີ່ມໃຫ້ ກອງທັບ ຈຶ່ງຮຽກປະຊຸມສະພາ, ສະມາຊິກສະພາເຫັນໂອກາດດີ ຈຶ່ງປະກາດກົດໝາຍຕ່າງໆ ທີ່ພະເຈົ້າຊາຮຽກເກັບພາສີ ໂດຍບໍ່ຜ່ານສະພານັ້ນໃຫ້ເປັນໂມຄະ ບວກກັບການເກີດຈາລະຈົນໃນປະເທດໄອແລນຕໍ່ຕ້ານການປົກຄອງຂອງອັງກິດ. ສະນັ້ນ ສະພາຈຶ່ງອອກມະຕິເພີ່ມງົບປະມານກອງທັບ ແລະສະພາຄວບຄຸມກອງທັບໂດຍກົງ; ບໍ່ໃຫ້ຢູ່ໃນກຳມືຂອງອຳນາດພະເຈົ້າຊາອີກຕໍ່ໄປ, ແຕ່ພະອົງບໍ່ຍອມລົງນາມ. ສະນັ້ນ ຄວາມຂັດແຍ່ງຈຶ່ງລະເບີດຈົນກາຍເປັນສົງຄາມກາງ ເມືອງ.

ການໂຈມຕີກັນຄັ້ງນີ້, ຝ່າຍພະເຈົ້າຊາປະກອບດ້ວຍຂຸນນາງ, ຄົນຊັ້ນສູງໄດ້ຮັບການເຝິກແອບອາວຸດມາເປັນຢ່າງດີ. ສ່ວນທະຫານສະພາປະກອບດ້ວຍຊົນຊັ້ນກຳມະກອນ, ພໍ່ຄ້າ, ຊາວນາກະສິກອນ ເຊິ່ງມີສັນຍະລັກຄື ຕັດຜົມກຽນອ້ອມຫົວ. ໃນເບື້ອງຕົ້ນສະນາມລົບພູມທຸກແຫ່ງຝ່າຍພະເຈົ້າຊາໄດ້ຮັບໄຊຊະນະ. ຕໍ່ມາປະມານ 4 ປີ ເມື່ອ ໂອລີເວີ ຄອມແວວ (Olive Cromwell) ໄດ້ເພີ່ມທະຫານສະພາໃຫ້ເຂັ້ມແຂງ ເອີ້ນວ່າ (Iron side) ທຳການສູ້ຮົບໄດ້ຮັບໄຊຊະນະກັບຄືນ, ພະເຈົ້າຊາໂຕນໄປຝຣັ່ງ, ສະກອດແລນ ແຕ່ຖືກຈັບມາເປັນນັກໂທດຂອງສະພາສົ່ງໄປປະທັບຢູ່ວິມານແຫ່ງໜຶ່ງຕອນໃຕ້ຂອງອັງກິດ.

ໃນປີ 1646 ກອງທັບຄອມແວວ ຕີກອງທັບສະກັອດທີ່ຍົກມາຊ່ວຍພະເຈົ້າຊາ, ສະພາຊິກສະພາໂຄ່ນລົ້ມອຳນາດກະສັດ ແລະພວກອ່ຽງເອ່ນ. ແລ້ວສ້າງຕັ້ງລະບອບການເມືອງສັງຄົມປະຊາທິປະໄຕ, ໃຫ້ທຸກຄົນມີສິດອອກສຽງເລືອກຕັ້ງໂດຍທົ່ວໄປ, ແຍກອຳນາດທາງສາສະໜາອອກຈາກການເມືອງການປົກຄອງ, ຍົກມາດຕະຖານສັງຄົມແລະເສດຖະກິດຂຶ້ນໃຫ້ດີກວ່າເກົ່າ. ຄສ 1648 ພວກສະກອດແລນປະລາໄຊສົງຄາມ, ພວກກອງທັບເຂົ້າມາມີອຳນາດແທນພະເຈົ້າຊາ ແລ້ວສ້າງຕັ້ງສະພາຄືນໃໝ່ປະກອບດ້ວຍສະມາຊິກ 140 ຄົນຈາກພັກຝ່າຍຕ່າງໆ. ໃນທີ່ສຸດສະມາຊິກສະພາລົງມະຕິຕັດສິນ ປະຫານຊີວິດພະເຈົ້າ ຊາຣັດທີໜຶ່ງໃນວັນທີ 30 ມັງກອນ 1649 ອັນເປັນການສ້າງຄວາມສະເທືອນຂວັນ ໃຫ້ແກ່ຊາວອັງກິດ ແລະຊາວຢູໂຣບຢ່າງຫຼວງຫຼາຍ.

ສະພາ (Rump) ຫລົ້ມສະຖາບັນກະສັດ ແລະສະພາຂຸນນາງ ແລະປະກາດໃຫ້ອັງກິດເປັນການປົກຄອງໃນລະບອບສາທາລະນະລັດ ໃນຮູບແບບເຄືອຈັກກະພົບ (Republic ຫຼື Commonwealth) ອັງກິດສະໄໝນີ້ ເປັນການປົກຄອງແບບທະຫານ ໂດຍມີສະພາສະໜັບສະໜູນກອງທັບຢ່າງເຕັມທີ່ ແລະປາບປາມພວກກະບົດໃນໄອແລນ ແລະສະກອດແລນທີ່ຍັງຮັກສາອິດທິພົນພະເຈົ້າຊານັ້ນລົງເສຍ ແລະປາບພວກນິຍົມກະສັດ.

ໃນປີ 1655 ສັ່ງເນລະເທດພະຄາທໍລິກອອກນອກປະເທດ ແລະຫ້າມພະນິກາຍອັງກິດສັ່ງສອນສາສະໜາ, ແບ່ງປະເທດອອກເປັນເຂດທະຫານ 11 ເຂດ, ມີນາຍພົນຮັກສາການເຂດ ໂດຍສະເພາະຄວບຄຸມການເກັບພາສີ, ຄຸມການປະພຶດຂອງປະຊາຊົນ, ຫ້າມແຂ່ງມ້າ, ຫ້າມຕີໄກ່, ຫ້າມ

ທໍລະມານໝີ, ຫ້າມຂາຍເຫຼົ້າໃນສະຖານທີ່ຕ່າງໆ, ຫ້າມມີສຳນັກຍິງໂສເພນີຢ່າງເດັດຂາດ ຖ້າລະເມີດລົງໂທດຢ່າງຮຸນແຮງ.

ເມື່ອສິ້ນສຸດສະໄໝ Oliver Cromwell ແລ້ວ ຣິຊາດ ຄຣອມແວວ(ລູກ) ຂຶ້ນດຳລົງຕຳແໜ່ງຜູ້ຮັກສາພະນະຄອນແທນ ແຕ່ເຫັນວ່າຍັງຂາດຄວາມສາມາດພາໃຫ້ເກີດຈະລາຈົນ, ຈາກນັ້ນ ຄ.ສ 1659 ນາຍພົນມອງ (General Monk) ໄດ້ນຳກອງທັບຈາກສະກອດແລນປາບກອງທັບຄຣອມແວວລົງເສຍ. ໃນຂະນະນີ້ປະຊາຊົນອັງກິດຍັງມີຄວາມຜູກພັນກັບປະເພນີດັ້ງເດີມ ນາຍພົນມອງຈຶ່ງເປີດປະຊຸມສະພາ ແລ້ວເປັນເອກະສັນອັງເຊີນກະສັດໃນລາຊະວົງຈວດກັບມາອີກ ແລະອັງເຊີນພະເຈົ້າຊາລັດທີສອງ ທີ່ໄປລີ້ໄພຢູ່ຝຣັ່ງກັບມາປົກຄອງອັງກິດ. ພະເຈົ້າຊາລັດທີສອງຕ້ອງເຊັນຄຳໝັ້ນສັນຍາ ຍອມຮັບປົກຄອງປະເທດຕາມຄວາມເຫັນຊອບຈາກລັດຖະສະພາທຸກປະການ.

## 2. ລາຊະການພະເຈົ້າຊາຣັດທີສອງ

ພະເຈົ້າຊາຣັດທີສອງ ຄ.ສ 1660 - 1685 ໄດ້ເກີດລະບາດຄັ້ງໃຫຍ່ຂຶ້ນໃນກຸງລອນດອນ ຄ.ສ 1665, ຄົນໃນເມືອງແຕກໜີໄປຊົນນະບົດ, ຄົນຕາຍເຖິງໜຶ່ງແສນຄົນ ແລະຍັງຢູ່ຕາມຕົວເມືອງອ້ອມລອນດອນອີກ. ຄ.ສ 1666 ເກີດໄຟໄໝ້ທຳລາຍວິຫານເຊັນພອດ, ທະນາຄານແຫ່ງຊາດ, ໂບດ 88 ແຫ່ງພ້ອມດ້ວຍບ້ານເຮືອນອີກ 13 ພັນຫຼັງ. ພະເຈົ້າຊາຣັດຈຶ່ງມີນະໂຍບາຍສ້າງບ້ານເຮືອນ ແລະສະຖານທີ່ຕ່າງໆຄືນໃໝ່ດ້ວຍດິນຈີ່ແທນໄມ້. ພ້ອມດຽວກັນນີ້ອານານິຍົມອັງກິດໃນອາເມຣິກາກໍໄດ້ເພີ່ມຂຶ້ນອີກຢ່າງຫຼວງຫຼາຍ ໂດຍຊາວອັງກິດໄດ້ຈັດຕັ້ງໂຄໂລນີຂຶ້ນເຊັ່ນ ໂຄໂລນີ ເວີຈິເນຍ, ນິວອິງແລນ ເພື່ອເປັນທີ່ພັກພາອາໄສແກ່ຜູ້ລີ້ໄພ ແລະໃຫ້ສິດທິແກ່ຜູ້ນັບຖືສາສະໜາຕ່າງໆຂອງຄົນອັງກິດ, ເປັນການທົດແທນໜີ້ສິນ ແລະບາບກຳທີ່ກະສັດອັງຜ່ານມາ.

## 3. ການປະຕິວັດທີ່ປະສົມຜົນສຳເລັດ (the glorious Revolution)

ການປະຕິວັດ 1688 ເປັນການປະຕິວັດທີ່ບໍ່ດຸເດືອດຮຸນແຮງຄືຫຼາຍຄັ້ງ ແຕ່ໄດ້ປະສົບຜົນສຳເລັດ ຄືສ້າງຕົວຢ່າງບົດຮຽນໃຫ້ແກ່ການປະຕິວັດຄັ້ງຕໍ່ມາໃນທົ່ວໂລກ. ການປະຕິວັດຄັ້ງນີ້ ເປັນໄຊຊະນະຂອງທິດສະດີທີ່ວ່າ: "ລັດຖະບານຕ້ອງໄດ້ຮັບຄວາມນິຍົມຈາກປະຊາຊົນໃນການປົກຄອງເສຍກ່ອນ." (2538: 385) ສິ່ງສຳຄັນທີ່ສຸດຈາກການປະຕິວັດນີ້ຄື ກົດໝາຍວ່າດ້ວຍສິດທິຂອງປະຊາຊົນອັງກິດ (The Bill of Right of 1689) ເຊິ່ງມີຂໍ້ຄວາມທີ່ສຳຄັນຄືດັ່ງນີ້:

+ ຫ້າມກະສັດໃຊ້ອຳນາດ... ຍົກເລີກກົດໝາຍໂດຍສະພາບໍ່ເຫັນດີ ອຳນາດຍົກເລີກກົດໝາຍເປັນສິດຂອງລັດຖະສະພາເທົ່ານັ້ນ
+ ຫ້າມກະສັດໃຊ້ອຳນາດເກັບພາສີ ໂດຍບໍ່ໄດ້ຮັບການຍິນຍອມຈາກສະພາ
+ ປະຊາຊົນອັງກິດມີສິດທີ່ຈະຖວາຍດີກາຕໍ່ກະສັດໄດ້
+ ປະຊາຊົນອັງກິດມີສິດເລືອກຕັ້ງສະມາຊິກລັດຖະສະພາ ເພື່ອທຳໜ້າທີ່ອອກກົດໝາຍ
+ ທຸກຄົນຢູ່ພາຍໃຕ້ກົດໝາຍ, ໄດ້ຮັບການປະຕິບັດຕາມກົດໝາຍ ໂດຍເທົ່າທຽມທົ່ວໜ້າກັນ

ຈາກນັ້ນ ທາງລັດຖະສະພາກໍໄດ້ອອກກົດໝາຍຕ່າງໆ ເພື່ອເພີ່ມອຳນາດໃຫ້ແກ່ສະພາເຊັ່ນ ລັດຖະສະພາມີອຳນາດຄວບຄຸມກອງທັບ, ກຳນົດມີນຫຽນບາດທີ່ວ່າ ຜູ້ຢູ່ໃນສາຍຂອງການສືບລາຊະສົມບັດ (Line of Sucession) ຕ້ອງນັບຖືສາສະໜານິກາຍອັງກິດເທົ່ານັ້ນ. ການປະຕິວັດນີ້ ຈຶ່ງຖືວ່າ ເປັນຕົ້ນກຳເນີດຂອງການເພີ່ມອຳນາດແກ່ປະຊາຊົນ ໂດຍຜ່ານລັດຖະສະພາ ແລະຈຳກັດອຳນາດກະສັດ.

## II. ການປະຕິວັດກູ້ອິດສະຫຼະພາບອາເມຣິກາ (The American Revolution)

### 1. ສາເຫດ

ສາເຫດທີ່ພາໃຫ້ເກີດສົງຄາມກອບກູ້ອິດສະຫຼະພາບເຊິ່ງນອກຈາກ ເສດຖະກິດວິກິດການເປັນບັນຫາໃຫຍ່ ແລ້ວຍັງມີເຫດຜົນຢ່າງອື່ນໆຄື:

+ ຊາວອານານິຄົມມີຄຸນະພາບຊີວິດ ຕ່າງກັບຄົນທາງອັງກິດ. ດັ່ງນັ້ນ ການກໍ່ສ້າງຕົວເອງເປັນສິ່ງສຳຄັນ ຈຶ່ງເຮັດໃຫ້ພວກອາເມຣິກາ ຫຼືພວກອານານິຄົມໃນອາເມຣິກາ ເຊື່ອໝັ້ນໃນຕົວເອງ ແລະຮັກອິດສະຫຼະພາບ.

+ ຊາວອານານິຄົມ ສ່ວນໜ້ອຍທີ່ມີຄວາມຮັກຊາດອັງກິດ, ສ່ວນຫຼາຍໄດ້ຮັບແຕ່ຄວາມເດືອດຮ້ອນ ເພາະຖືກກົດຂີ່ຂູດຮີດດ້ານສາສະໜາໃນເມືອງແມ່. ພົນລະເມືອງຢູ່ອານານິຄົມ 40% ບໍ່ແມ່ນຄົນອັງກິດ ພວກເຂົາໄປຈາກ ຢູໂຣບຕາເວັນອອກ ແລະຕາເວັນຕົກ.

+ ຄວາມຫຍຸ້ງຍາກທາງການເມືອງໃນອັງກິດ ເປັນບັນຫາສຳຄັນ ເຊິ່ງບໍ່ແມ່ນສະເພາະຄົນອາເມຣິກາເບື່ອໜ່າຍການເມືອງອັງກິດ, ພາຍໃນອັງກິດເອງບໍ່ພໍໃຈນຳການກົດຂີ່ຂອງກະສັດ. ສາຍເຫດນີ້ຈຶ່ງເຮັດໃຫ້ຄົນອັງກິດມີຄວາມເຫັນໃຈຊາວອາເມຣິກາ ແລະຊາວອານານິຄົມໃນອາເມຣິກາບໍ່ໜ້ອຍ.

+ ການປະຕິວັດຄັ້ງຜ່ານມາເປັນຕົວຢ່າງເຊັ່ນ ໂອລິເວີ ຄຣອມແວວ ເປັນຄົນຊົນຊັ້ນສາມັນແຕ່ສາມາດພັດທະນາຕົນໂຄ່ນລົ້ມອຳນາດພະເຈົ້າຊາ ແລະດັບພະຊົນຊີບໄດ້. ຈາກຕົວຢ່າງນີ້ເຮັດໃຫ້ຊາວອານານິຍົມອາເມຣິກາ ກ້າຫານຫຼົ້ມລ້າງນະໂຍບາຍທາງລາຊະການອັງກິດໄດ້ຄືກັນ.

+ ບົດປະພັນຕ່າງໆຂອງນັກປາດເຊັ່ນ ຈອນລັອກ ເປັນແຮງບັນດານໃຈສະໜັບສະໜູນໃຫ້ຄົນອາເມຣິກາ ຕ້ອງຮູ້ຈັກປົກຄອງ ແລະດູແລຕົນເອງໄດ້ ລັດຖະບານບໍ່ຄວນລ່ວງລ້ຳສິດທິຂອງປະຊາຊົນ, ແຕ່ປົກຄອງປະຊາຊົນໃຫ້ດີ ແລະຍຸດຕິທຳ, ຫາກມີການຂົ່ມເຫັງ ລາສະດອນມີສິດລົ້ມລ້າງອຳນາດລັດຖະບານໄດ້.

### 2. ພຶດຕິກຳທີ່ກໍ່ໃຫ້ເກີດການປະຕິວັດ

+ ຍ້ອນພະເຈົ້າຊາແຕ່ລະອົງ ບໍ່ຢຸດເຊົາໃນການກົດຂີ່ຂູດຮີດ, ເຮັດໃຫ້ຊາວອານານິຍົມຄຽດແຄ້ນຢູ່ຕໍ່ມາ.

+ ຄົນຊັ້ນກາງທີ່ເປັນພໍ່ຄ້າບໍ່ພໍໃຈນະໂຍບາຍການຄ້າຂາຍຂອງອັງກິດ ທີ່ຕ້ອງການໃຫ້ອານານິຄົມ ສົ່ງຜົນປະໂຫຍດໃຫ້ແກ່ອັງກິດເທົ່ານັ້ນ, ບໍ່ຄຳນຶງເຖິງຊາວອານານິຄົມ(ນະໂຍບາຍພານິດນິຍົມ) (Mercantile System).

+ ອາເມຣິກາກຳເລີ່ມຕົ້ນພັດທະນາ ຈຶ່ງໄດ້ເພິ່ງອັງກິດໃນດ້ານສິນຄ້າສຳເລັດຮູບທີ່ເອົາວັດຖຸດິບແລກກັນ ເປັນຕົ້ນແມ່ນຢາສູບ, ໄມ້, ໜັງສັດ, ອັງກິດຕ້ອງໃຫ້ອາເມຣິກາ ຍອມຮັບລາຄາສິນຄ້າ ແລະຫ້າມຊາວອານານິຍົມເປີດການຄ້າຂາຍກັບປະເທດອື່ນໆ ແລະຫ້າມຜະລິດສິນຄ້າສຳເລັດຮູບທຸກຊະນິດດ້ວຍຕົນເອງ.

+ ເກັບຄ່າອາກອນພາສີ ສແຕັມ ການຄ້າແພງແລ້ວ ຍັງເກີດທະເລາະວິວາດ ຜິດຖຽງກັນ ກັບຊາວອານານິຄົມອີກ.

ຈາກພຶກຕິກຳດັ່ງກ່າວເຮັດໃຫ້ອານານິຄົມອັງກິດໃນອາເມຣິກາເກືອບທັງໝົດ13 ລັດ. ແບ່ງເປັນ 3 ເຂດໃຫຍ່ຄື ເຂດນິວອິງແລນມີ 4 ລັດ. ເຂດກາງມີ 5 ລັດ ແລະເຂດໃຕ້ມີ 4 ລັດ. 13 ລັດນີ້ ອັງກິດຕັ້ງຜູ້ວ່າລາຊະການລັດ. ມີລັດຖະສະພາ, ມີພິພາກສາ, ແຕ່ດ້ານເສດຖະກິດຍັງຖືກອັງກິດບັງຄັບຢູ່.

ສະນັ້ນ ແພັດທຣິກ ເຮນຣີ (Patrick Henry) ຜູ້ແທນຂອງອານານິຄົມ ໄດ້ປະກາດໃນ ສະພາອັນມີຂ້າຫຼວງ ແລະທີ່ປຶກສາຂ້າຫຼວງ ເຊິ່ງກະສັດອັງກິດແຕ່ງຕັ້ງໃຫ້ມານັ່ງສະພາອາເມຣິກາ ແລະຜູ້ແທນສະພາທັງຫຼາຍໜ້າທີ່ຂອງສະພານີ້ຄື ພິຈາລະນາອອກກົດໝາຍຫຼືລະບຽບທີ່ເປັນປະໂຫຍດຕໍ່ຊາວ ໂຄໂລນີວ່າ ມີນລັດເວີຈິເນັຍເທົ່ານັ້ນ ທີ່ມີສິດເກັບພາສີພວກອານານິຄົມເທົ່ານັ້ນ ເຊິ່ງຄຳປະກາດຂອງ ແພັດທຣິກ ເປັນທີ່ຮູ້ຈັກກັນດີໃນປະຫວັດສາດ ອາເມຣິກາຄື: "ຄວາມພະຍາຍາມໃດໆທີ່ຈະມາໃຊ້ອຳນາດຕໍ່ສິ່ງໃດໆ ຫຼືຕໍ່ບຸກຄົນໃດໆກໍຕາມ ຖືວ່າຜິດກົດໝາຍ, ລະເມີດລັດຖະທຳມະນູນ ແລະບໍ່ຍຸຕິທຳ, ອຳນາດດັ່ງກ່າວນັ້ນ ມີແນວໂນ້ມທີ່ຈະທຳລາຍເສລີພາບຂອງຊາວອັງກິດໄດ້ເຊັ່ນດຽວກັນຄຶດທີ່ຈະທຳລາຍເສລີພາບຂອງຊາວ ອາເມຣິກາ....ຈົ່ງມອບເສລີພາບແກ່ຂ້າພະເຈົ້າ ຫຼືບໍ່ສະນັ້ນ ຈົ່ງເອົາຊີວິດຂອງຂ້າພະເຈົ້າໄປ..." (2538:389)

## 3. ປາກົດການໃບຊາທີ່ ບອດສຕັນ (Boston Tea Party)

ເມື່ອອັງກິດຍົກເລີກ ພາສີອາກອນ ສະແຕັມແລ້ວ ເຮັດໃຫ້ອາເມຣິກາດີໃຈບໍ່ພໍທໍໃດ ອັງກິດປະກາດໃຊ້ພາສີອາກອນ ແກ້ວ. ກົ່ວ. ສີ. ເຈັ້ຍ ແລະໃບຊາທີ່ຊາວອານານິຄົມຊື້ເຂົ້າມາໃນອາເມຣິກາ ຈຶ່ງເກີດການປະທ້ວງຢ່າງຮຸນແຮງ ໂດຍການສະແດງຂອງຄົນໂກດແຄ້ນ ໃນເດືອນທັນວາ 1773 ມີຊາວອານານິຄົມ 50 ຄົນ ປອມຕົວ ເປັນຊາວອິນເດຍແດງ ຂຶ້ນເປເຮືອ ບັນທຸກຊາ 3 ລຳ ຂົນຊາຖິ້ມລົງທະເລທີ່ເມືອງບອດສຕັນ ຈຶ່ງໄດ້ຊື່ວ່າ (Boston Tea Party).

ປາກົດການນີ້ ເຮັດໃຫ້ພະເຈົ້າຊາດຽດແຄ້ນແທນພະໄທ ແລະລົງໂທດຊາວແມສາຊູເຊດເຕັມທີ ໂດຍການປິດເມືອງບອດສຕັນ ແລະໃຫ້ໃຊ້ແທນຄ່າເສຍຫາຍໃບຊາທັງໝົດ ແລະເມືອງຈະຕ້ອງຕົກຢູ່ໃຕ້ການປົກຄອງຂອງຜູ້ວ່າລາຊະການອັງກິດໂດຍກົງ.

ເດືອນ 9/1774 ມີການປະຊຸມສະພາສູງຄັ້ງແຮກຂອງອາເມຣິກາ ( The First Continental Congiess) ເຊິ່ງມີຜູ້ນຳສຳຄັນເຂົ້າຮ່ວມເຊັ່ນ ຈອນອາດຳ , ຊາມືວອາດຳ , ຈອດວໍຊິງຕັນ, ຄຣິດສໂຕເຟີ...ຈາກລັດແມນຊາສູເຊດ ແລະຊາວຄຣໍໄລນາ ປະຊຸມຂໍຮ້ອງໃຫ້ອັງກິດຢຸດເຊົາການກະທຳທີ່ຮຸນແຮງ ແລະຍົກເລີກກົດໝາຍຕ່າງໆ ແລະສະພານີ້ໄດ້ສ້າງຕັ້ງກອງທະຫານຮັກສາການແຫ່ງຊາດ ອາເມຣິກາ (National Guards) ເພື່ອກຽມຮັບມື. ກອງປະຊຸມທີຟີລາເດເຟຍນີ້ ສະແດງໃຫ້ເຫັນການເຄື່ອນໄຫວທີສຳຄັນຂອງຊາວອານານິຄົມ ພ້ອມທີຈະຈັບອາວຸດລຸກຂຶ້ນຕໍ່ສູ້ອັງກິດ.

ພວກຄົນກ້າຕາຍຂອງໂຄໂລນີ ສະສົມອາວຸດແລະລະເບີດເປັນສູນກາງໄວ້ຢູ່ເມືອງຄອງຄອດ. ເດືອນເມສາ 1775 ນາຍພົນອັງກິດ (ເກດ) ສົ່ງທະຫານອັງກິດມາຢຶດຍຸດໂທປະກອບ ແລະຈັບກຸ່ມຜູ້ນຳສຳຄັນ, ເຮັດໃຫ້ຕໍ່ສູ້ກັນຝ່າຍອາເມຣິກາຕາຍ 8 ຄົນ ທະຫານອັງກິດຕາຍຂອງ 293 ຄົນ.

## 4. ການສູນເສຍອານານິ ຄົມໃນອາເມຣິກາເໜືອ ຂອງອັງກິດ.

ໃນວັນທີ 10 ພຶດສະພາ 1775 ຊາວອານານິຄົມປະຊຸມທີເມືອງຟີລາເດເຟຍ ຄັ້ງທີສອງ. ເພື່ອກຽມຕໍ່ຕ້ານອັງກິດ ໂດຍມີບັນດາລັດຖະບຸລຸດ ແລະນັກການເມືອງທີເຫັນການໄກເຊັ່ນ ວິນລຽມພິດ ແລະລອນນອນ ເປັນແກນນຳ. ພະເຈົ້າຊາອັງກິດຈ້າງທະຫານ ເຢຍຣະມັນເພີ່ມອີກ 2 ໝື່ນຄົນ. ສ່ວນອາເມຣິກາແຕ່ງຕັ້ງໃຫ້ ຈອດວໍຊັງຕັນ ເປັນຜູ້ບັງຄັບບັນຊາທະຫານອານານິຄົມ. ດັ່ງນັ້ນ ສົງຄາມຈິ່ງລະເບີດຂຶ້ນທຳອິດຢູ່ຟີລາເດເຟຍແຕ່ 1775 - 1781. ຝ່າຍທະຫານອານານິຄົມຮ່ວມມືກັນຢ່າງດີ ແລະຜູ້ນຳໂຄໂລນີ ໄດ້ຈັດຕັ້ງຄະນະກຳມະການຂຶ້ນທຸກແຫ່ງແຂງຕໍ່ອັງກິດ ເພື່ອອິດສະຫຼະພາບຂອງອາເມຣິກາ.

ເດືອນມິຖຸນາ 1776 ໄດ້ແຕ່ງຕັ້ງຄະນະກຳມະການເພີ່ມຮ່າງປະກາດ ອິດສະຫຼະພາບອາເມຣິກາ 5 ຄົນຄື ເບັນຈາມິນ ຝແຣງລິນ, ທໍມັດ, ຈອນອາດຳ, ເຈບຝສັນ... ຮ່າງອິດສະຫຼະພາບໄດ້ສຳເລັດ ແລະເມື່ອວັນທີ 4 ກໍລະກົດ 1776 ຖືເປັນວັນສຳຄັນທີສຸດ ໂດຍຖືເປັນວັນຊາດ ອາເມຣິກາຈົນເຖິງທຸກວັນນີ້. ຄຳປະກາດອິດສະຫຼະພາບ (Declaration of Independence) ເປັນການປະກາດໃຫ້ໂລກຮູ້ເຖິງສາເຫດທີອານານິຄົມຕ່າງໆທີແຍກຕົວອອກຈາກອັງກິດ ໂດຍມີຂໍ້ຄວາມທີ່ສຳຄັນຕອນໜຶ່ງວ່າ: *" ພວກເຮົາຖືຄວາມຈິງຕໍ່ໄປນີ້ ເປັນສິ່ງເດັ່ນຊັດວ່າ ຄົນທຸກຄົນຖືກສ້າງຂຶ້ນມາເໝືອນກັນ ແລະເທົ່າກັນ. ຜູ້ທີ່ສ້າງຄົນທຸກຄົນຂຶ້ນມານັ້ນ ໄດ້ປະສານສິດເທົ່າທຽມກັນ ໂດຍບໍ່ມີການປິດຜັນສິດທີດັ່ງກ່າວນັ້ນຄື ສິດທີ່ຈະມີຊີວິດ, ອິດສະຫຼະພາບ ແລະການສະແຫວງຫາຄວາມສຸກ, ໃນນາມປະຊາຊົນຜູ້ຊອບທຳທີ່ຢູ່ໃນອານານິຄົມນີ້ຂໍປະກາດວ່າ: ອານານິຄົມອາເມຣິການີ້ມີສິດທີ່ຈະເປັນອິດສະຫຼະ ແລະເປັນປະເທດເອກະລາດ, ອານານິຄົມແຫ່ງນີ້ໄດ້ໝົດສິ້ນຈາກຄວາມຈິ່ງຮັກພັກດີທີ່ມີຕໍ່ພະມະຫາກະສັດແຫ່ງຈັກກະພັດອັງກິດ..."*(1538:392)

## III. ການປະຕິວັດ ຝຣັ່ງ 1789 ( The French Revolution)

### 1. ເຫດຜົນຂອງການປະຕິວັດ

ການປະຕິວັດຄັ້ງໃຫຍ່ໃນຝຣັ່ງ ຄ.ສ1789 ນອກຈາກເປັນການປ່ຽນແປງການເມືອງໃນຝຣັ່ງແລ້ວ ຍັງເປັນເຫດການສໍາຄັນຂອງໂລກອີກເປັນຕົ້ນແມ່ນການເມືອງ, ເສດຖະກິດ, ຂະນົບທໍານຽມປະເພນີ ແລະແນວຄວາມຄິດຂອງສາສະດອນ ໂຄ່ນລົ້ມລະບອບເກົ່າ(Old Regime) ຈາກລະບອບສົມບູນຍາສິດທິລາດ ມາເປັນສາທາລະນະລັດ. ການປະຕິວັດຝຣັ່ງນີ້ ເປັນແມ່ບົດຂອງການປະຕິວັດຕໍ່ມາ ໂດຍສະເພາະການປະຕິວັດລັດເຊຍ (ຕຸລາ 1917) ໂດຍສາເຫດທີ່ສໍາຄັນສະມາດສະຫລຸບໄດ້ຄືດັ່ງນີ້:

*1.1 ສາເຫດທາງການເມືອງ*

\+ ຍ້ອນກະສັດປົກຄອງປະເທດບໍ່ມີຄວາມຍຸຕິທໍາຄືພະອົງກ່ອນໆ ແລະມີການປົກຄອງດ້ວຍອໍານາດເດັດຂາດຂອງກະສັດລາຊະວົງ ບູບອງ (Bourbon - Dinasty) ຕັ້ງແຕ່ທ້າຍສະຕະວັດທີ XVI. ເຮັດໃຫ້ການປະຕິວັດຝຣັ່ງຂຶ້ນກັບກະສັດແຕ່ພະອົງດຽວ. ບໍ່ປ່ອຍໃຫ້ປະຊາຊົນມີສ່ວນຮ່ວມ ແລະບໍ່ຫົວຊາຕໍ່ຊີວິດປະຊາຊົນ.

\+ ການປະຊາໄຊສົງຄາມ 7 ປີກັບອັງກິດ (1756 - 1763) ຝຣັ່ງສູນເສຍຄານາດາ ແລະໝົດອິດທິພົນໃນອິນເດຍ ເມື່ອພະເຈົ້າ ຫລຸຍທີ16 ເມື່ອປີ 1774 ເຮັດໃຫ້ຖານະການເງິນໃກ້ຈະຫລົ້ມສະລາຍ ເຊິ່ງຮຽກຮ້ອງໃຫ້ພະອົງກອບກູ້ຖານະໃຫ້ດີຂຶ້ນ ແຕ່ພະອົງບໍ່ມີຄວາມສາມາດພຽງພໍໃນການບໍລິຫານປະເທດຕໍ່ໄປ ແລະບໍ່ປະສານຕໍ່ໂລກພາຍນອກ, ມີແຕ່ຫາຄວາມສຸກສ່ວນຕົວ.

\+ ປະຊາຊົນເຫັນຈຸດອ່ອນ ແລະຄວາມຫລົ້ມຫລຽວຂອງລັດຖະບານ ແລະຄວາມຕົກພະໄທຢ່າງແຮງຂອງພະເຈົ້າ ຫລຸຍ ຄ.ສ 1778 ທີ່ເຂົ້າຫຍຸ້ງກ່ຽວກັບສົງຄາມປະກາດເອກະລາດຂອງອາເມຣິກາທັງໆທີ່ຝຣັ່ງຍັງຍາກຈົນ. ພ້ອມນີ້ພະເຈົ້າຫລຸຍຍັງຈ່າຍເງິນຟຸ່ມເຟືອຍ, ໂອ້ອາວ, ສ້າງພະລາຊະສໍານັກ ພະລາຊະວັງ ແວນຊາຍ (Versailles)

\+ ລັດຖະບານບໍ່ສາມາດເກັບພາສີນໍາພວກຂຸນນາງ, ເຈົ້າໜ້າທີ່ລັດ. ນອກນີ້ຄົນຊັ້ນກາງຂອງຝຣັ່ງເປັນຜູ້ຄຸມອໍານາດເສດຖະກິດ ທັງລົບລົກພາສີອາກອນຕ່າງໆໄດ້ງ່າຍ.

*1.2 ສາເຫດທາງສັງຄົມ*

ກ່ອນການປະຕິວັດຝຣັ່ງ ປະຊາຊົນຝຣັ່ງແບ່ງອອກເປັນ 3 ຖານັນດອນ (estates)ຄື:

ກ. ຖານັນດອນທີໜຶ່ງມີ (The First Estate)

ພະທີ່ມີສັກ[illegible]ຊັ້ນສູງ

ພະທີ່ມີສົມພະປະລັກດາ

ທັງສອງຊັ້ນຄື [illegible] ເປັນຢູ່[illegible] ຕ່າງກັນຢ່າງຂາດຂັ້ນ ໂດຍສະເພາະ ພະສົງ[illegible] ທີ່ປະຈໍາຕາມໝູ່ບ້ານຕ່າງໆ ມີຖານະຄືກັບຊາວຝຣັ່ງທົ່ວໄປ

ຂ. ຖານັນດອນທີສອງມີ ( Second Estate)

\+ ຂຸນນາງທີ່ສືບເນື່ອງຈາກບັນພະບູລຸດ.

+ ຊຸນນາງມີພູມສັນປັນຍາກ້າວໜ້າກວ່າຊົນຊັ້ນສູງກຸ່ມໃດໆ. ເປັນນັກປະຕິຮູບສັງຄົມທີ່ເຂັ້ມແຂງ ແລະບາງຄົນຢູ່ໃນຂະບວນການປະຕິວັດອີກດ້ວຍ.

ຄ. ຖານັນດອນທີສາມມີ ( The Third Estate)

+ ຊົນຊັ້ນສາມັນປະກອບດ້ວຍພົນລະເມືອງຝຣັ່ງສ່ວຍຫຼາຍ (96%)ບໍ່ໄດ້ຮັບສິດທິ ແລະໄດ້ເສຍພາສີທີ່ດິນ, ພາສີເລືອກຕັ້ງ, ພາສີລາຍໄດ້, ພາສີເກືອ ສ່ວນພວກທີໜຶ່ງແລະທີສອງບໍ່ໄດ້ເສຍ.

+ ຊົນຊັ້ນກາງ ແມ່ນກຸ່ມຄົນມີຄວາມຈະເລີນທາງດ້ານການຄ້າ ແລະອຸດສາຫະກຳໃນປະເທດ ເຊັ່ນພວກທະນາຍຄວາມ, ນາຍທະນາຄານ, ນັກທຸລະກິດ, ພະນັກງານລັດ, ພໍ່ຄ້າ, ນາຍຊ່າງ ເຊິ່ງເປັນພວກມີການສຶກສາດີ, ສະຫຼາດ, ແຕ່ບໍ່ມີສິດທາງການເມືອງເທົ່າທຽມພວກຂຸນນາງ ແລະພວກພະ.

*1.3 ສາເຫດຄວາມແຜ່ຫລາຍຂອງຄວາມຄິດໃນສະຕະວັດທີ XVIII*

ໃນສະຕະວັດທີ XVIII ມີນັກປາດແລະນັກປັດຊະຍາຫຼາຍຄົນເຊັ່ນ ວອນແຕ, ແລະມອງແຕສກີເອີ ເປັນຕົ້ນ ຕ່າງກໍສອນໃຫ້ຊາບຊຶ້ງເຖິງລັດທິເສລີພາບ ແລະຄວາມເປັນອິດສະຫຼະພາບຂອງຕົນ. ແລະນອກນັ້ນ ສົງຄາມກູ້ອິດສະຫຼະພາລອາເມຣິກາເປັນສ່ວນຊ່ວຍກະຕຸ້ນຊາວຝຣັ່ງໃຫ້ຕື່ນຕົວເລື່ອງເສລີພາບ - ອິດສະຫຼະພາບໃນການທີ່ທະຫານຝຣັ່ງໄປຊ່ວຍອານານິຄົມ ອາເມຣິກາ ສູ້ຮົບກັບອັງກິດເພື່ອນຳເອົາລະບອບປະຊາທິປະໄຕມາເຜີຍແຜ່ໃນຝຣັ່ງ.

## 2. ໄລຍະຕົ້ນຂອງການປະຕິວັດ

ທຳອິດສົງຄາມໄດ້ເກີດຂຶ້ນໃນເດືອນມິຖຸນາ 1789 - ສິງຫາ 1792. ໄລຍະນັ້ນແມ່ນເຫດການທີ່ເກີດຂຶ້ນໃນກຸງປາຣີ ເນື່ອງຈາກການຂາດແຄນອາຫານ, ຄົນທຸກຈົນເພີ່ມຂຶ້ນ, ປະຊາຊົນກໍ່ຄວາມວຸ່ນວາຍ ຈຶ່ງປຸກລະດົມຂຸນນາງໃຫຍ່, ເຜົາຊັບສິນ ຈົນຖືກທະຫານປາບປາມ, ແຕ່ບໍ່ສຳເລັດຜົນ ຍິ່ງເພີ່ມຄວາມກຽດຊັງຕໍ່ລັດຖະບານ ແລະກະສັດຫຼາຍຂຶ້ນ. ດັ່ງນັ້ນກຸ່ມຄົນປະເພດທີສາມ ແລະພວກສາມັນຊົນ ຮວມຕົວກັນ ເຊິ່ງເອີ້ນວ່າ: "ກອງທະຫານຮັກສາການແຫ່ງຊາດ"

ໃນວັນທີ 14 ກໍລະກົດ 1789 ພວກທະຫານລາສະດອນ ລຸກຂຶ້ນໂຈມຕີຄຸກບານຕິກ (Bastilles) ບ່ອນຄຸມຂັງນັກໂທດການເມືອງ. ການທຳລາຍຄຸກນີ້ເປັນສັນຍານເຕືອນວ່າ: ສາມັນຊົນລວມກັນທຳລາຍອຳນາດຂອງມະຫາກະສັດເພື່ອໃຫ້ຮັບຊາບສິດທິ ແລະເສລີພາບຂອງປະຊາຊົນ. ນັບແຕ່ທຳລາຍຄຸກບານຕິກ ປະຫວັດສາດໄດ້ຖືເອົາວັນ, ເດືອນ, ປີ ນັ້ນເປັນວັນເລີ່ມຕົ້ນຂອງການປະຕິວັດ ແລະວັນນີ້ໄດ້ປະກາດເປັນວັນຊາດ ຝຣັ່ງຈົນເຖິງທຸກວັນນີ້ອີກດ້ວຍ.

## 3. ຜົນສຳເລັດຂອງການປະຕິວັດໃນໄລຍະຕົ້ນ ( 1789 - 1791)

ພວກປະຕິວັດໄດ້ທຳລາຍຄຸກບານຕິກ, ຊາວນາທຸກຄົນລຸກຂຶ້ນ. ສະມາຊິກຮ່າງລັດຖະທຳມະນູນປະຊຸມ ແລະລົງມະຕິຍົກເລີກສິດທິພິເສດຕ່າງໆຂອງບາດຫຼວງແລະຂຸນນາງຄື ການເສຍພາສີ

ຕ້ອງເທົ່າກັນ, ປະໂຫຍດແລະສິດທິໄດ້ຮັບ ຕ້ອງເທົ່າທຽມກັນ ເຊິ່ງນັກປະຕິວັດ., ນັກປົກຄອງສະໄໝຕໍ່ມາຖືເປັນແບບຢ່າງ ແລະປະກາດສິດທິຂອງມະນຸດ ໂດຍມີໃຈຄວາມສຳຄັນຄື:

1. ຄົນເຮົາເກີດເປັນອິດສະຫຼະ ມີສິດເທົ່າທຽມກັນ,ຄວາມແຕກຕ່າງໃນສັງຄົມຍ່ອມມີຂຶ້ນ ແຕ່ຕໍ່ເມື່ອໄດ້ເຮັດປະໂຫຍດໃຫ້ແກ່ສາທາລະນະ.
2. ອຳນາດອະທິປະໄຕມາຈາກປວງຊົນທົ່ວໄປ, ບໍ່ມີຄະນະຫຼືບຸກຄົນໃດໃຊ້ອຳນາດໄດ້ຫາກອຳນາດນັ້ນໆບໍ່ໄດ້ມາຈາກປະຊາຊົນ.
3. ເສລີພາບການອະນຸຍາດໃຫ້ດຳເນີນທຸກສິ່ງຢ່າງໄດ້ ໂດຍບໍ່ກະທົບກະເທືອນເຖິງບຸກ ຄົນອື່ນ.
4. ກົດໝາຍຫຼືເຈດຈຳນົງຂອງຄົນທົ່ວໄປ, ພົນລະເມືອງທຸກຄົນມີສິດໄດ້ຮັບສ່ວນໃນການກຳນົດເຈດຈຳນົງນັ້ນດ້ວຍຕົນເອງ ຫຼືໂດຍອາໄສຜູ້ແທນຂອງຕົນ.

ສະພາຮ່າງລັດຖະທຳມະນູນປະກາດໃຊ້ໃນ ຄ.ສ1791 ກຳນົດການປົກຄອງຢູ່ໃນຮູບກະສັດຢູ່ໃຕ້ລັດຖະທຳມະນູນ, ລັດຖະສະພາມີສະພາດຽວ ຄືສະພານິຕິບັນຍັດ ( Legislative Assembly ) ແບ່ງປະເທດອອກເປັນ 83 ເຂດ (ແຂວງ) ແຕ່ລະເຂດແບ່ງເປັນເມືອງ, ຕາແສງ, ມີເທດສະບານ ແລະປະຊາຊົນຕ້ອງຢູ່ໃຕ້ການປົກຄອງຂອງຝ່າຍບໍລິຫານ ຈົນເຮັດໃຫ້ກະສັດແລະຂຸນນາງຫຼາຍຄົນໂຕນໜີໄປຕ່າງ ປະເທດ. ສ່ວນພະເຈົ້າຫລຸຍທີ 17 ຖືກຄຸມຂັງຈົນສິ້ນພະຊົນຊີບໃນຄຸກໃນປີ 1795.

ລະດູຮ້ອນ ຄ.ສ1792 ເປັນໄລຍະຂອງຊົນຊັ້ນກຳມາຊີບ, ຊາວປາຣີມີອຳນາດໃນລັດຖະສະພາແທນຊົນຊັ້ນກາງ, ມີແນວຄິດປັດຊະຍາເລື່ອງຄວາມສະເໝີພາບຂອງ ຣຸດໂຊມາແທນ. ຄຳຂວັນຂອງຄະນະປະຕິວັດຄື ເສລີພາບ, ພະລາດອນພາບ ແລະສະເໝີພາບ (Liberty, Fraternity, equality) ຖືວ່າເປັນສະໄໝໂຫດຫ້ຽມ.

ວັນທີ 20 ມິຖຸນາ 1792 ເປັນວັນຄົບຮອບປີຂອງການໜີອອກຈາກກຸງປາຣີຂອງພະເຈົ້າຫລຸຍ ຝູງຊົນໄດ້ເຂົ້າທຳລາຍພະລາຊະວັງຕຸຍເລີຣີດສ ເຊິ່ງມີຄວາມມຸ່ງໝາຍລອບປົງພະຊົນ ພະນາງມາຣີອັງໂຕເນດ ແຕ່ບໍ່ສຳເລັດ. ເມື່ອຕໍ່ມາກອງທັບປະຊາຊົນເດີນທາງມາຈາກເມືອງ ມາກໄຊ(Massaille) ເຖິງກຸງປາຣີ ພ້ອມກັບມີເພງ "ມາກສເມາໄຊ" ເຊິ່ງເພງທີ່ມີເນື້ອຮ້ອງ ແລະຈັ່ງຫວະທຳນອງອັນເຮົ້າໃຈ ຊຶ່ງເພງນີ້ຕໍ່ມາ ກາຍເປັນເພງຊາດຝຣັ່ງເຖິງທຸກວັນນີ້.

ເມື່ອຕໍ່ມາເກີດການຕໍ່ຕ້ານ ເພື່ອການຈົ່ງຮັກພັກດີຕໍ່ພະເຈົ້າໃນລາຊະວົງ ແຕ່ຖືກກອງທັບປະຊາຊົນປາບປາມ ໂດຍບຸກໂຈມຕີພາລະຊັງຕຸຍເລີຣີດສ ອີກຄັ້ງໜຶ່ງ. ເທື່ອນີ້ພະເຈົ້າຫລຸຍ, ພະມະເຫສີ, ພະໂອຣົດ, ພະທິດາ ແລະເຈົ້າຍິງອາລິສະເບດ ຖືກຈັບເປັນນັກໂທດຂອງສະພາ

ສະພາ[illegible] ແລະ[illegible] ໃນວັນທີ 20 ກັນຍາ [illegible] ແລະຕັ້ງສະພາໃໝ່ (Convention) [illegible] ສະພາໃໝ່ໄດ້ພິຈາລະນາໂທດພະເຈົ້າຫລຸຍໂດຍ[illegible] ໃນທີ່ສຸດພະເຈົ້າຫລຸຍ ແລະລາຊະວົງກໍ່ຖືກສຳເລັດໂທດລົງ.

ເມື່ອຕໍ່ມາເລີ່ມແຕ່ວັນທີ 10 ມິຖຸນາ - 27 ກໍລະກົດ 1794 ແມ່ນໄລຍະເວລາ ໂຣແບປີແອ ເຮືອງອໍານາດສູງສຸດ ມີຄວາມສົງໄສຜູ້ຄົນທີ່ຈະກະບົດ. ເປັນຕົ້ນແມ່ນຜູ້ນໍາການປະຕິວັດທີ່ວຣຸນແຮງ ມີຈໍາ ນວນ 1366 ຄົນ ຖືກສົ່ງຕົວເຂົ້າເຄື່ອງ ກິໂຍຕິນ.

## 4. ຜົນສໍາເລັດຂອງການປະຕິວັດໄລຍະສອງ

+ ຍົກເລີກຂ້າທາດໃນອານານິຄົມຕ່າງໆຂອງໂລກຫ້າມລົງໂທດຈໍາຄຸກໃນເລື່ອງໜີ້ສິນ.
+ ໃຊ້ລະບົບເມຕຣິກໃນການຊັ່ງ, ຕວງແລະວັດແທກ.
+ ຍົກເລີກທໍານຽມຍົກຊັບສິນມໍລະດົກໃຫ້ແກ່ລູກຊາຍກົກ.ປ່ຽນມາເປັນການຍົກໃຫ້ທາຍາດທຸກຄົນຕາມສ່ວນ.
+ ທີ່ດິນມະຫາສານທີ່ໄດ້ຈາກຂຸນນາງຈັດແບ່ງຂາຍໃຫ້ແກ່ຊາວນາທີ່ຍາກຈົນໃນລາຄາສົມຄວນ. ລັດຄວບຄຸມລາຄາສິນຄ້າໂດຍມາດຕະການເດັດຂາດຄື ໃຜລະເມີດໃຊ້ກິໂຍຕິນລົງໂທດຕັດສິນຄວາມຜິດຕ່າງໆ.
+ ການປະຕິວັດໄດ້ຄ່ອຍກັບມາມຸ່ງທີ່ຜົນປະໂຫຍດຄົນຊັ້ນກາງອີກຄັ້ງໜຶ່ງ
+ ນັກໂທດການເມືອງໄດ້ຮັບການປົກປ່ອຍ.
+ ປັນຍາກາດໃນສະພາເຮັດໃຫ້ພະ, ຂຸນນາງ ແລະພວກອົບພະຍົບໄປນອກປະເທດກັບເຂົ້າມາໃຊ້ສິດທິພົນສະໜັບສະໜູນການປະຕິວັດ.
+ ສະພາຄອນເວັນເຊັນ ອອກລັດຖະທໍາມະນູນສະໜັບສະໜູນຄົນຊັ້ນກາງ.

## 5. ການປະຕິວັດໄລຍະທີສາມ ( 1795 - 1799)

ຖ້າທຽບໃສ່ການປະຕິວັດ 2 ຄັ້ງຜ່ານມາ. ຄັ້ງນີ້ບໍ່ດຸເດືອດຮຸນແຮງ ພຽງແຕ່ປະຕິບັດຕາມລັດຖະທໍາມະນູນສະບັບ ຄ.ສ 1795 ໄດ້ອອກປະກາດເປັນສາທາລະນະລັດເຊັ່ນເດີມ, ແຕ່ດ້ານການປົກຄອງ ຫຼືລະບົບບໍລິຫານບ້ານເມືອງນັ້ນ ມີຄະນະກໍາມະການດໍາເນີນການປົກຄອງມີຊື່ວ່າ: (The Directory) ເປັນຜູ້ໃຊ້ອໍານາດ. ຄະນະກໍາມະການນີ້ມີໜ້າທີ່ແຕ່ງຕັ້ງລັດຖະມົນຕີຄວບຄຸມກອງທັບ. ສ່ວນທາງນິຕິບັນຍັດປະກອບດ້ວຍສະພາສອງສະພາ ຄືສະພາເກົ່າ(Council of Ancients) ແລະສະພາສະມາຊິກ 500 ຄົນ(Coulcil of FiveHundreds) ທັງສອງສະພາມີອໍານາດແຕ່ງຕັ້ງຄະນະກໍາມະການອໍານາດການປົກຄອງ. ສະມາຊິກສະພາເລືອກຕັ້ງມາຈາກລາສະດອນ.

ໃນ ຄ.ສ 1795 - 1799 ສະພາຍັງບໍ່ທັນມີຄວາມເຂັ້ມແຂງເທົ່າທີ່ຄວນ, ປະຊາຊົນພົບກັບຄວາມໜາວແລະຄວາມຫິວໂຫຍຢ່າງໜັກ. ປະຊາຊົນສ່ວນຫຼາຍຍັງຍາກຈົນ. ສະມາຊິກໃນຄະນະລັດຖະບານໃໝ່ຈຶ່ງສວຍໂອກາດຫາຜົນປະໂຫຍດໃສ່ຕົນ ຫຼາຍກວ່າອຸດົມການປະຕິຮູບສັງຄົມຂອງນັກປັດຊະຍາທັງຫຼາຍ, ແກ້ໄຂເສດຖະກິດບໍ່ໄດ້, ການສໍ້ໂກງ, ການກິນສິນບົນ (Corruption) ໃນຜູ້ນໍາການປົກຄອງຮຸນແຮງ. ຈາກສາເຫດນີ້ຈຶ່ງ ເປັນເຫດໃຫ້ຜູ້ມີຄວາມມັກໃຫຍ່ໃຝ່ສູງຮວບຮວມກໍາລັງຈາກ ຜູ້ມີຄວາມເຫລື້ອມໃສຈາກປະຊາຊົນ ໂດຍໂຄສະນາໃຫ້ເຫັນ ຄວາມຫຼົ້ມຫຼຽວຂອງລັດຖະບານ

ເປັນເຄື່ອງມືຍຶດອຳນາດຈາກລັດຖະບານ, ບຸກຄົນສຳຄັນນີ້ ຄື ນາໂປເລງ ໂບນາປາດ(Napoleon Bonapart) ຄ.ສ 1769-1821 ໂດຍອາໄສກຳລັງທະຫານ ແລລາສະດອນທຳການລັດຖະປະຫານໃນຄ.ສ 1799.

ສະນັ້ນ, ການປະຕິວັດ-ລັດຖະປະຫານສະໄໝນັ້ນ ຈຶ່ງເອີ້ນວ່າ: "ການປະຕິວັດສະໄໝນາໂປລີອົງ" ສ່ວນເນື້ອໃນລາຍລະອຽດ ແລະໝາກຜົນຕ່າງໆຂອງການປະຕິວັດຕະຫລອດເຖິງລະບົບການປ່ຽນແປງທາງດ້ານເສດຖະກິດ, ການເມືອງ-ການປົກຄອງຂອງຈັກກະພັດຝຣັ່ງ ໃຫ້ເບິ່ງວິຊາປະຫວັດສາດຝຣັ່ງໂດຍສະເພາະຕື່ມອີກ.

✱ ຂໍ້ແນະນຳເພື່ອການອ່ານເພີ່ມເຕີມ

ທ່ານສາມາດຊອກອ່ານເອກະສານ ວິຊາປະຫວັດສາດໂລກ-ອາລະຍະທຳໂລກໃນຍຸກຕ່າງໆ, ວິຊາປະຫວັດສາດຢູໂຣບ-ອາລະຍະທຳຢູໂຣບຍຸກຕ່າງໆໄດ້ ຕາມຫໍສະໝຸດມະຫາວິທະຍາໄລແຫ່ງຊາດ, ຫໍສະໝຸດຄະນະວິທະຍາສາດສັງຄົມ-ພາກວິຊາປະຫວັດສາດ ແລະຮ້ານຂາຍປຶ້ມຕຳລາທີ່ສາມາດຫາໄດ້.

24 / VII
ຫ້າມຈຳໜ່າຍ

# ພາກເພີ່ມເຕີມ I

## ປຽບທຽບອາລະຍະທຳສະໄໝກາງ ກັບອາລະຍະທຳສະໄໝໃໝ່ຂອງຢູໂຣບ

**✷ ສະໄໝກາງ:** ອາດຈະແບ່ງເປັນ 4 ຍຸກດ້ວຍກັນ ຄື :

- ຍຸກແຣກ: ເປັນຍຸກຢູ່ໃນລະຫວ່າງສະຕະວັດທີ V-VIII ເປັນໄລຍະເວລາທີ່ອາລະຍະທຳແບບເກົ່າຂອງໂຣມັນກຳລັງສະຫລາຍຕົວໄປ ແລະອາລະຍະທຳແບບໃໝ່ ເຊິ່ງຍັງປາກົດອອກບໍ່ທັນຊັດເຈນ ກຳລັງກໍ່ຕົວຂຶ້ນມາແທນທີ່.

- ຍຸກທີສອງ: ໃນລະຫວ່າງສະຕະວັດທີ IX-XI ອາລະຍະທຳແບບໃໝ່ໄດ້ປາກົດຊັດເຈນ ໂດຍມີຄຣິດຕະສາສະໜາ ແລະລັດທິຟິວດັກ(Feudalism) ເປັນພື້ນຖານສຳຄັນ.

- ຍຸກທີສາມ: ໃນລະຫວ່າງສະຕະວັດທີ XII-XIII ເຊິ່ງຈັດຢູ່ໃນຍຸກຄຳຂອງອາລະຍະທຳສະໄໝກາງ, ເປັນຍຸກຂອງການເຮືອງອຳນາດຂອງຄຣິດຕະສາສະໜາ ແລະການແຜ່ຂະຫຍາຍອິດທິພົນຂອງລັດທິຟິວດັກທັງໃນການເມືອງ, ເສດຖະກິດ, ສັງຄົມຈົນເຖິງວັດທະນະທຳດ້ານຕ່າງໆ.

- ຍຸກສຸດທ້າຍ: ໃນລະຫວ່າງສະຕະວັດທີ XIV-XV ເປັນຍຸກແຫ່ງການເສື່ອມສະຫລາຍຕົວຂອງອາລະຍະທຳສະໄໝກາງ ແລະການກຳເນີດອາລະຍະທຳຍຸກໃໝ່ ໃນຊ່ວງເວລາດັ່ງກ່າວ ເຊິ່ງຈະເຫັນວ່າສະຖາບັນສາສະໜາ ແລະການກຳເນີດຊີວິດແບບຟິວດັກຄ່ອຍໆຫລ້າສະໄໝ ເສື່ອມຖອຍຄວາມສຳຄັນໄປ. ໃນຂະນະດຽວກັນ, ຄົນໃນຍຸກນັ້ນເຫັນການຄ້າຂາຍເປັນສຳຄັນ ເຊິ່ງຄວບຄູ່ກັບການຂະຫຍາຍອິດທິພົນຂອງຄົນເມືອງ ແລະຊົນຊັ້ນພໍ່ຄ້າ, ມີການຄົ້ນພົບແຜ່ນດິນໃໝ່. ສະນັ້ນຈຶ່ງເປັນເງື່ອນໄຂອາລະຍະທຳຍຸກກາງເສື່ອມສະຫລາຍ ແລະອາລະຍະທຳຍຸກໃໝ່ກຳເນີດ-ຂະຫຍາຍຕົວຂຶ້ນມາ.

**✷ ຄວາມຮຸ່ງເຮືອງຂອງລະບົບຟິວດັກ**(Feudalism)

ມີລະບົບເສດຖະກິດແບບແມນເນອຣ(Manorial System) ເປັນຍຸກຂຸນນາງມີອຳນາດ, ກະສັດຖືກດຶງອຳນາດອອກຈາກສູນກາງ, ສາສະໜາຈັກມີບົດບາດສຳຄັນ, ປະມຸກສູງສຸດຄື ອົງສັນຕະປາປາ(Pope) ບໍ່ມີການເລື່ອນສະຖາບັນທາງສັງຄົມ(Social Mobility) ຖືວ່າຊີວິດຂອງແຕ່ລະຄົນແມ່ນພະເຈົ້າລິຂິດມາໃຫ້ແລ້ວລ່ວງໜ້າ(Doctrine of Predestination).

ລັດທິຟິວດັກ ຕາມລັກສະນະທາງການເມືອງ ໝາຍເຖິງລະບົບການປົກຄອງທີ່ມຸ່ງໃຫ້ເກີດຄວາມກະຈາຍອຳນາດຈາກລັດຖະບານກາງ ເຊິ່ງອາດເປັນກະສັດຫລືໄພ່ກໍຕາມ ໂດຍໄດ້ສ່ວນແບ່ງໃນການຍຶດຄອງແຜ່ນດິນ ແລະໄດ້ຮັບມອບອຳນາດການປົກຄອງ.

ລັກສະນະເສດຖະກິດຂອງລັດທິຟິວດັກ ເຊິ່ງເອີ້ນອີກຢ່າງໜຶ່ງວ່າ ເປັນລະບົບ(Manorial System) ລະບົບນີ້ໄດ້ພະຍາຍາມເຮັດໃຫ້ການຈັດລະບົບການຜະລິດມີປະສິດທິພາບ ແລະລ້ຽງຕົວເອງໄດ້ຫລາຍທີ່ສຸດ(Self - Sufficiency) ໂດຍບໍ່ຈຳເປັນຕິດຕໍ່ພາກສ່ວນອື່ນ.

ລັກສະນະໜຶ່ງອີກຂອງລັດທິຟິວດັກ ເປັນລັກສະນະທາງສັງຄົມ ເຊິ່ງມີແຕ່ຄວາມເຫລື່ອມລ້ຳ ແບ່ງແຍກຄົນອອກເປັນຊົນຊັ້ນ ຕະຫລອດການດຳເນີນກໍແຕກຕ່າງກັນຫລາຍ. ສັງຄົມໂດຍທົ່ວໄປໃນຍຸກກາງແບ່ງເປັນ 2 ລະດັບ ຄື ສັງຄົມຂອງຊົນຊັ້ນສູງ ແລະສັງຄົມຂອງຊົນຊັ້ນຕ່ຳ(ສາມັນຊົນ).

ຊົນຊັ້ນສູງມີໜ້າທີ່ຮັບຜິດຊອບດ້ານການປົກຄອງ ແລະປ້ອງກັນປະເທດ ບໍ່ຈຳເປັນຕ້ອງແບກພາລະໃນການຜະລິດ ຫລືລ້ຽງດູສັງຄົມ. ກິດຈະການສ່ວນຫລາຍຂອງຊົນຊັ້ນນີ້ມີແຕ່ກຽມຕົວພ້ອມທຳສົງຄາມ ສະແຫວງຫາຄວາມສຸກເຮຮາດ້ວຍເກມກິລາລ່າສັດ ຫລືເກມກິລາປ້ອງກັນຕົວ, ປ້ອງກັນກຽດ ເພື່ອຄວາມມີໜ້າຕາຂອງຊີວິດ ຄົນຊັ້ນສູງທີ່ໝູນວຽນປ່ຽນໄປປະຈຳຕາມລາຊະສຳນັກຂອງພະເຈົ້າແຜ່ນດິນ ຫລືເຈົ້ານາຍຂອງຕົນ, ເປັນຊີວິດທີ່ສະໜຸກສະໜານຕື່ນເຕັ້ນຫລູຫລາ. ແຕ່ຂະນະດຽວກັນນັ້ນກໍຢູ່ພາຍໃນຂອບເຂດຂອງລະບົບ(Chivalry) ຄຸນສົມບັດຂອງນັກຮົບຜູ້ກ້ານຫານ ເຊິ່ງເປັນລະບົບສອນຄົນໃຫ້ມີຄວາມກ້າຫານອົດທົນ, ມີລະບຽບວິໄນ, ຈົງຮັກພັກດີຜູ້ເປັນນາຍເໜືອຫົວ ແລະເສຍສະລະເພື່ອສ່ວນລວມ ຕະຫລອດເຖິງການເທີດທູນກຽດເໜືອກວ່າສິ່ງໃດ.

ສັງຄົມອີກລະດັບໜຶ່ງຂອງລັດທິຟິວດັກ ເປັນສັງຄົມທີ່ມີສູນກາງຢູ່ຕາມແມນນໍເຣຍ ເຊິ່ງເປັນສັງຄົມຄົນທຳມະດາສາມັນ ຜູ້ທຳໜ້າທີ່ຜະລິດລ້ຽງດູປະເທດ ເປັນຊີວິດຂອງຄົນເຮັດວຽກໜັກຍາກໄຮ້ ແລະບໍ່ຮູ້ຄຳວ່າ "ສິດທິຫລືອຳນາດ" ເຊິ່ງນອກຈາກຄຳວ່າໜ້າທີ່ ເປັນຊີວິດທີ່ຄຳນຶງໄດ້ແຕ່ສະເພາະປັດຈຸບັນ, ບໍ່ມີເວລາຄິດຢ້ອນຫາອະດີດຫລືອະນາຄົດໄດ້.

ດ້ວຍເຫດນີ້, ຄົນທຳມະດາສາມັນຈຶ່ງຫັນມາເພິ່ງສາສະໜາ. ສະນັ້ນ, ວັດຈຶ່ງກາຍເປັນສູນພົບປະສັງສັນລື່ນເລີງບັນເທີງໃຈ, ການຖ່າຍທອດຄວາມຮູ້ສຶກນຶກຄິດ ແລະປະການສຳຄັນ ວັດເປັນທີ່ສູນລວມຊີວິດຈິດໃຈ. ຄວາມເຊື່ອໝັ້ນສຳລັບຄົນທຳມະດາຈຶ່ງແມ່ນພະສົງ ແລະພວກພະປະຈຳຕາມວັດມີບົດບາດສຳຄັນຕໍ່ການຫລໍ່ຫລອມຄວາມເປັນຢູ່ ແລະທັດສະນະຄະຕິ. ໃນສະໄໝກາງຄົນສ່ວນຫລາຍຈຶ່ງມັກຄິດຫລືກະທຳອັນໃດກໍຕ້ອງຢູ່ໃຕ້ອຳນາດທາງສາສະໜາຕາມຄຳສັ່ງສອນຂອງພະທີ່ຢູ່ປະຈຳບ້ານຂອງຕົນ.

## ❋ ສະໄໝໃໝ່

1. ສະໄໝໃໝ່ເລີ່ມແຕ່ສະຕະວັດທີ XV-XVII ເປັນສະໄໝຂອງການຄົ້ນພົບແຜ່ນດິນໃໝ່, ການຟື້ນຟູສິລະປະວິທະຍາການ, ການປະຕິຮູບສາສະໜາ(Reformation) ຄັ້ງທີ II ຄຣິດຕະສະວັດ XVIII ແລະເປັນສະໄໝພຸດທິປັນຍາ ສົງຄາມໂລກຄັ້ງທີ I-II.

2. ກະສັດສາມາດດຶງອຳນາດກັບສູ່ສູນກາງ(Centralization) ເປັນສະໄໝອານະຍະທຳເມືອງ.

3. ກະສັດສະຖາປະນາອຳນາດແບບສົມບູນຍາສິດທິລາດ(Absolute Monarchy) ຕັ້ງແຕ່ສະຕະວັດ XV-XVII ບາງປະເທດກະສັດສາມາດຮັກສາອຳນາດເດັດຂາດເຖິງສະຕະວັດທີ XX (ຣັດເຊຍ).

4. ມີລະບົບເສດຖະກິດແບບພານິດຊາດນິຍົມ(Mercantilism)

5. ເກີດການປະຕິຮູບສາສະໜາ(Protestant Reformation) [illegible] Church of England (Anlican Church) ໂດຍ (Henry VIII) Presbyterian ມີພວກແຜ່ຂະຫຍາຍທີ່ສະ[illegible] ສະໜາຄຣິດ[illegible]ໄປແຕ່ລະແຫ່ງ [illegible] ແຕ່ລະແຫ່ງທີ່ອາຊາອັສ[illegible] ກໍມີສັດທາໃນພະຄຣິດ

ສາມາດເຂົ້າເຖິງພະເຢຊູໄດ້ໂດຍກົງ ໂດຍບໍ່ຈຳເປັນຕ້ອງມີຄົນກາງລະຫວ່າງພະເຈົ້າກັບຊາວຄຣິດຕະສາສະນິກະຊົນ ແລະບໍ່ຍອມຮັບໃນອຳນາດຂອງສັນທະປາປາທີ່ມັກຂັບໄລ່ຊາວຄຣິດອອກຈາກສາສະໜາ.

6. ນິກາຍໂຣມັນຄາທໍລິກ(Roman Catholic) ຕ້ອງປັບປຸງກົດເກນຂອງຕົນເພື່ອດຶງຄວາມສັດທາກັບຄືນມາ (Counter Reformation).

7. ກະສັດຢູໂຣບມີອຳນາດຍິ່ງໃຫຍ່ໃນວົງການຄຣິດຕະຈັກແທນອົງສັນທະປາປາ ເຊັ່ນ Henry III ຂອງອັງກິດເປັນຕົ້ນ, ແຕ່ກະສັດສະເປນ, ຝຣັ່ງຍັງຍອມຮັບອຳນາດຂອງສັນທະປາປາ ແລະຊ່ວຍປາບພວກທີ່ແຍກຕົວອອກ.

8. ຊົນຊັ້ນໄພ່ຊັ້ນຕ່ຳ-ລະດັບຮາກຫຫຍ້າ(Sert) ເລື່ອນສະຖານະພາບທາງສັງຄົມມາເປັນຊົນຊັ້ນກາງເພາະການມີອາຊີບຄ້າຂາຍ ເຊິ່ງບໍ່ຄືແຕ່ກ່ອນທີ່ສະໄໝການຜະລິດກະສິກຳ ຫລືລ້ຽງສັດ. ຕໍ່ມາພວກໄພ່ໄດ້ອົບພະຍົບໄປອາໄສຢູ່ໃນເມືອງເປັນຈຳນວນຫລາຍ ຫັນໄປຢຶດອາຊີບຜະລິດ ໂດຍອາໄສສີມື ແລະປະການຄ້າຂາຍແທນອາຊີບເດີມໃນຊົນນະບົດ, ເຊິ່ງເຮັດໃຫ້ຄົນໃນຊົນນະບົດຫລັ່ງໄຫລເຂົ້າມາໃນເມືອງຫລາຍຂຶ້ນ.

**✱ ອາລະຍະທຳສະໄໝຟື້ນຟູສິລະປະ**

ເຮົາເຫັນໄດ້ຈາກແບບຢ່າງຂອງການດຳເນີນຊີວິດງ່າຍໆຂອງຊົນຊັ້ນກາງໂດຍທົ່ວໄປ ເຖິງຢ່າງໃດກໍຕາມ, ຊົນຊັ້ນທີ່ມີການສຶກສາພະຍາຍາມຮຽນແບບການດຳເນີນຊີວິດແບບຄົນຊັ້ນສູງ ເພື່ອຮັກສາຖານະການເປັນຢູ່ໃນສັງຄົມໄວ້ໃຫ້ໄດ້ ຈຶ່ງເກີດການສ້າງອຸດົມຄະຕິ ທີ່ນຳໄປສູ່ການມີຊີວິດແບບສຸພາບບຸລຸດ (Gentleman) ແຕ່ໃນຂະນະດຽວກັນ ກໍບໍ່ຍອຍຖິ້ມອຸດົມການຂອງຊົນຊັ້ນກາງທີ່ອາໄສຢູ່ໃນສັງຄົມເມືອງ.

ແນວຄິດສຳຄັນອັນເປັນພື້ນຖານຂອງອາລະຍະທຳສະໄໝການຟື້ນຟູສິລະປະວິທະຍາການ ຄື ແນວຄິດຕາມອຸດົມການຂອງລັດທິມະນຸດນິຍົມ(Humanism) ໄດ້ຮັບການຖ່າຍທອດມາຈາກສະໄໝຄລາສິກ (Classical) ນັກມະນຸດນິຍົມພະຍາຍາມຕໍ່ສູ້ເພື່ອພັດທະນາຕົນເອງໃຫ້ເຖິງຄວາມຈະເລີນສູງສຸດ ເພື່ອສັກສີ ແລະຄວາມພູມໃຈຕໍ່ຄຸນຄ່າຂອງຄວາມເປັນມະນຸດທີ່ປະເສີດ ຕົວຢ່າງ ຄວາມຄິດຂອງມະນຸດນິຍົມທີ່ສຳຄັນ 5 ທ່ານ ຄື :

**5.1 ເປຕຣາດ(Perarch)** ຄ.ສ 1304-1374 ຊາວອີຕາລີ ເປັນບິດາແຫ່ງວັນນະຄະດີສະໄໝຟື້ນຟູສິປະວິທະຍາການ ເຊິ່ງທ່ານເຊື່ອວ່າ ບັນດາສັບພະສິ່ງທັງປວງທີ່ເປັນຜົນຜະລິດຂອງພະຜູ້ເປັນເຈົ້າໃນທຳມະຊາດນັ້ນ, ມະນຸດມີຄວາມສຳຄັນທີ່ສຸດ ເພາະມະນຸດເປັນຜົນງານຊັ້ນຍອດຂອງພະຜູ້ເປັນເຈົ້າ. ຄວາມຍິ່ງໃຫຍ່ຂອງພະເຈົ້າຈະເບິ່ງໄດ້, ເຂົ້າໃຈໄດ້ຈາກຜົນສຳເລັດ ແລະຄວາມຍິ່ງໃຫຍ່ຂອງມະນຸດນັ້ນເອງ.

ແນວຄິດຂອງເປຕຣາດ ອາດສຶກສາໄດ້ຈາກຜົນງານການຂຽນທີ່ມີຊື່ສຽງຫລາຍເຫລັ້ມເຊັ່ນ (Letters to the Ancient Death or True Wisdom) ເປັນຕົ້ນ ແລະເລື່ອງທຸກບັນຫາ ລ້ວນແຕ່ສ່ອງແສງໃຫ້ເຮົາເຫັນເຖິງອິດທິພົນຂອງການສຶກສາ, ພາສາ ແລະວັນນະຄະດີກລາສິກ ໂດຍສະເພາະຂອງໂຣມັນ ພ້ອມກັບການເຫັນຄຸນຄ່າຂອງມະນຸດນິຍົມໃນຕົວເປຕຣາດທັງໝົດ.

**5.2 ບໍຄັດຊີໂອ(Boccaccio)** ຄ.ສ 1313 ຈັດເປັນຕົວແທນຂອງຄົນຊັ້ນກາງຍຸກໃໝ່ໃນປະເທດອີຕາລີ, ແຕ່ຜົນງານການຂຽນມີຫລາຍເປັນຮ້ອຍໆ ເຊັ່ນ (Ten Day's work) ລ້ວນແຕ່ເປັນຕົວຢ່າງສະແດງໃຫ້

ເຫັນຄວາມພະຍາຍາມທີ່ຈະສ້າງຄານິຍົມ ແລະປູກຝັງທັດສະນະຄະຕິໃໝ່ໃຫ້ແກ່ຊົນຊັ້ນກາງ. ບໍລິດຊີໂອ ພະຍາຍາມວາງແຜນແບບສະບັບການປະພຶດຂອງຊົນຊັ້ນກາງທີ່ຈະກ້າວເຂົ້າມາມີໜ້າທີ່ຄຽງບ່າຄຽງໄຫລ່ກັບຄົນຊັ້ນສູງ ໃນຖານະເປັນຜູ້ນໍາຂອງບຸກຄົນໃໝ່. ຜູ້ນໍາກຸ່ມໃໝ່ຕ້ອງພະຍາຍາມປູກຝັງຄຸນນະທໍາຫຼາຍປະການໃຫ້ເກີດເປັນສິແກ່ຕົນ ເຊິ່ງນອກເໜືອໄປຈາກຄວາມມີໜ້າຕາອັນໄດ້ແກ່ການມີຊັບທີ່ມັ່ງຄັ່ງແລ້ວ, ຜູ້ນໍາຍັງຈະຕ້ອງກະຕືລືລົ້ນຊອກຫາຄວາມຮູ້ຕະຫລອດເວລາ, ມີຄວາມຂະຫຍັນໝັ່ນພຽນ, ຮັກການເຮັດວຽກ ແລະສິ່ງສໍາຄັນຜູ້ນໍາບໍ່ຈໍາເປັນຕ້ອງເຄັ່ງຄັດທາງສາສະໜາເກີນໄປ ຈົນກາຍເປັນຄົນງົມງວາຍຕໍ່ທໍາມະຊາດ ຫລືສິ່ງທີ່ອະທິບາຍຍາກດ້ວຍຫລັກຂອງເຫດຜົນ.

5.3 **ອີຣັດສະມຸດ(Erasmus)** ຄ.ສ 1466-1536 ໄດ້ຮັບສາຍານາມວ່າ ເປັນເຈົ້າແຫ່ງນັກມະນຸດນິຍົມຈາກການຂຽນຂອງທ່ານຫລາຍເລື່ອງເຊັ່ນ (In praise of Folly ກໍດີ ຫລື The hand book of the Christian king ຫລື The Complaint of piece) ຕ່າງກໍສະແດງໃຫ້ເຫັນເຖິງຊີວິດໃໝ່ ແລະການຮຽກຮ້ອງໃຫ້ຄົນມີໃຈກວ້າງ, ຮູ້ຈັກຢູ່ຮ່ວມກັນດ້ວຍເຫດແລະຜົນ ແລະຄວາມປະນີປະນອມ, ອີຣັດສະມຸດ ກ່າວວ່າ "ຄົນສະໄໝກາງມີຈິດໃຈແຄບ, ເຫັນແກ່ຕົວ, ຂາດເຫດຜົນຍ້ອນຢູ່ໃນສັງຄົມເຂັ້ມງວດ". ສະນັ້ນ, ຜົນງານການຂຽນໃນເລື່ອງຕ່າງໆ, ທ່ານຈຶ່ງຮຽກຮ້ອງທຸກຄົນຊ່ວຍກັນຄ່ອຍປ່ຽນແປງປັບປຸງສັງຄົມ ໂດຍສະເພາະໃຫ້ປະຕິຮູບສາສະໜາ.

5.4 **ເຊີໂທມັດມໍ**(Sir Thomas More) ຄ.ສ 1478-1535 ນັກມະນຸດນິຍົມທີ່ໄດ້ຮັບສາຍານາມວ່າ ເປັນເພັດນໍ້າໜຶ່ງເໜືອນັກການເມືອງ ແລະນັກຂຽນຄົນໃດໆໃນປະເທດອັງກິດຂະນະນັ້ນ. ທ່ານເປັນຜູ້ໄດ້ຮັບການສຶກສາງດີ ແລະປະສົບຄວາມສໍາເລັດຢ່າງສູງ ໃນອາຊີບການເຮັດວຽກຮັບໃຊ້ຢູ່ລາຊະສໍານັກອັງກິດ ໂດຍມີຕໍາແໜ່ງທຽບກັບນາຍົກລັດຖະມົນຕີໃນປັດຈຸບັນ ຈົນເກີດກໍລະນີຜິດພາດກັບພະເຈົ້າ Henry ທີ່ແຍກສາສະໜາອອກຈາກໂຣມ ເພື່ອຕັ້ງນິກາຍຂຶ້ນໃໝ່ຄື ນິກາຍອັງກິດ(Church of England) ເຊີໂທມັດມໍ ບໍ່ຍອມອ່ອນຍອມ, ປະຕິບັດຮັບສະໜອງພະເດຊະຄຸນ ແລະກໍລະນີອື່ນໆ. ດັ່ງນັ້ນ, ເຊີໂທມັດມໍຈຶ່ງຖືກປະຫານຊີວິດໂດຍການຕັດຄໍທີ່ Tower of London.

ຜົນງານການຂຽນທີ່ຍິ່ງໃຫຍ່ຂອງເຊີໂທມັດມໍ ຄື ເລື່ອງ Utopia ເປັນເມືອງໃນອຸດົມຄະຕິ ເຊິ່ງມີຄວາມສຸກສົມບູນ. ສ່ວນເນື້ອໃນຂອງໜັງສືເລື່ອງນີ້ໄດ້ສະເໜີລະອຽດມາແລ້ວໃນບົດທີ່ຜ່ານມາ.

# ພາກເພີ່ມເຕີມ II

## ປຽບທຽບແນວຄິດຂອງນັກຄິດ, ນັກການເມືອງຢູໂຣບໃນສະຕະວັດທີ XV ກັບນັກຄິດນັກການເມືອງໃນສະຕະວັດທີ XVIII

### 1. ນີໂຄໂລ ມາຄີອາເວລີ (Nicolo Machiavelli ຄ.ສ 1469-1527)

ນີໂຄໂລ ມາຄີອາເວລ ເຊື່ອວ່າ ມະນຸດໂດຍເນື້ອແທ້ແລ້ວເປັນສັດທີ່ຊົ່ວຮ້າຍ ເຊິ່ງສະແດງອອກຄວາມປາຖະໜາຄັ້ງທຳອິດ ກໍຄືການມີຊີວິດຢູ່ລອດ, ແຕ່ໃນຂະນະດຽວກັນນັ້ນ **ມະນຸດກໍມີຄວາມຕ້ອງການທີ່ບໍ່ຈຳກັດ ແລະມີຄວາມທະເຍີທະຍານທີ່ບໍ່ມີມື້ສິ້ນສຸດ, ມະນຸດເປັນຄົນເຫັນແກ່ຕົວ, ແຕ່ມັກຮຽນແບບຜູ້ອື່ນ ແລະມີທ່າອ່ຽງຈະເຮັດຕາມຕົວຢ່າງຂອງຜູ້ມີອຳນາດ.**

ນີໂຄໂລ ມາຄີອາເວລ ສອນຄົນວ່າ ຜູ້ປົກຄອງຈະຕ້ອງຮຽນຮູ້ການກະທຳຂອງຄົນທົ່ວໄປ, ຄວາມ ຮຸນແຮງ, ຄວາມທາລຸນໂຫດຮ້າຍ ແລະການຫລອກລວງ ເປັນສິ່ງທີ່ຜູ້ປົກຄອງທີ່ສະຫລາດຕ້ອງຮູ້ຈັກໃຊ້ໃຫ້ເໝາະສົມກັບສະຖານະການຕົວຈິງ. ໜັງສືທີ່ມີຊື່ສຽງຄືເລື່ອງຜູ້ປົກຄອງ(The Prince) ເຊິ່ງໄດ້ປະກາດເປີດເຜີຍວ່າ ເຂົາມັກລະບົບເດັດຂາດ ເຊັ່ນ :

1.1 ມະນຸດຈະຄຳນຶງເຖິງຜົນປະໂຫຍດຂອງຕົນເອງກ່ອນກວ່າສິ່ງອື່ນໃດ, ກະຫາຍອຳນາດ ແລະໂລບໃນຊັບສົມບັດ, ຄອຍແກ່ງແຍ່ງຊິງດີຜູ້ອື່ນຕະຫລອດເວລາ, ຜູ້ປົກຄອງຍຸແຍ່ໃຫ້ແຕກແຍກກັນ ແລະຕົນເອງຈະໄດ້ປອດໄພ(Davide and Rule).

1.2 ມາຄີອາເວລລີ ກ່າວວ່າ ຄົນທີ່ຈະເປັນນັກການເມືອງທີ່ດີ, ປະສົບຜົນສຳເລັດ ຕ້ອງມີຄຸນລັກສະນະ 2 ຢ່າງຄື ເປັນໝາຈິ້ງຈອກ ແລະລາຊະສີ, ຕ້ອງສະຫລາດແກມຂີ້ລັກ, ຮູ້ທາງໜີທີ່ໄລ່; ຂະນະດຽວກັນຕ້ອງມີຄວາມສະຫງ່າຜ່າເຜີຍຂອງລາຊະສີ ໃຫ້ເປັນທີ່ຫວັ່ນກົວຂອງຜູ້ຄົນ, ຕ້ອງມີບຸກຄະລິກກະພາບຂອງຜູ້ນຳ ແລະຄວນໃຊ້ອຳນາດຫລາຍກວ່າຄຸນນະທຳ ຫລືຄຸນຄວາມດີ.

1.3 ເມື່ອດ່າສັດຕູເຮົາບໍ່ໄດ້ ຈຶ່ງຊົມເຊີຍສັດຕູຂອງເຂົາແທນ.

1.4 ເມື່ອມີຄວາມຈຳເປັນທີ່ຕ້ອງປະຕິບັດໃນສິ່ງທີ່ປະຊາຊົນບໍ່ມັກ, ຜູ້ປົກຄອງຄວນມອບໝາຍໃຫ້ຜູ້ອື່ນເຮັດແທນຕົນ; ແຕ່ເຮັດໃນສິ່ງທີ່ປະຊາຊົນມັກ, ຜູ້ປົກຄອງຄວນລົງມືປະຕິບັດດ້ວຍຕົນເອງທັງໝົດ.

1.5 ເມື່ອຈຳເປັນຕ້ອງລົງໂທດຜູ້ໃດ ຄວນປະຕິບັດໃຫ້ສຳເລັດເສັດສິ້ນໄປໃນເທື່ອດຽວ ແຕ່ຈະໃຫ້ລາງວັນຫລືມອບສິ່ງຂອງທີ່ປະຊາຊົນຕ້ອງການ, ຜູ້ປົກຄອງຄວນເຮັດໄປເທື່ອລະເລັກລະໜ້ອຍ ແລະເຮັດຕໍ່ໄປໃຫ້ດົນໆ.

1.6 ເປັນຜູ້ມີນິໄສໃຈຄໍກວ້າງຂວາງກັບຊັບສົມບັດຂອງຜູ້ອື່ນໆ, ແຕ່ຕົນເອງຈະຕ້ອງເປັນຜູ້ມັດທະຍັດກັບຊັບສົມບັດຂອງຕົນເອງສະເໝີ.

## 2. ໂທມັດ ຮອບ (Thomas Hobbes, ຄ.ສ 1588-1679)

ໂທມັດ ຮອບ ສະໜັບສະໜູນໃຫ້ມີການປົກຄອງຕາມລະບອບສົມບູນຍາສິດທິລາດ ທານໄດ້ກ່າວເຖິງສັນຍາປະຊາຄົມ(Social Contract) ໃນໜັງສືເລວີອາທັນ ວ່າ(Leviathan) ມະນຸດຕາມສິດທິທຳມະຊາດຂອງແຕ່ລະຄົນຍ່ອມມີເສລີພາບທີ່ຈະສາມາດເຮັດໄດ້ ເພື່ອຄວາມຢູ່ລອດປອດໄພຂອງຄົນ, ມະນຸດຈຶ່ງຫັນໜ້າຮ່ວມກຸ່ມກັນເປັນລັດ ໂດຍແຕ່ລະຄົນຍອມສະລະສ່ວນໜຶ່ງຂອງສິດທິຕາມທຳມະຊາດຂອງຕົນມອບໃຫ້ລັດ ເພື່ອລັດຈະໄດ້ຈັດການລະບົບຄວາມເປັນຢູ່ໃຫ້ທຸກຄົນໃນສັງຄົມ ແລ້ວລັດກໍຈະຢູ່ລອດ. ພ້ອມນັ້ນ, ເມື່ອລັດມອບອຳນາດມາແລ້ວ, ລັດກໍຕ້ອງຮູ້ຈັດການປົກຄອງໃຫ້ບັນລຸຕາມຈຸດປະສົງຄາດໝາຍຂອງຜູ້ມອບອຳນາດຢ່າງດີທີ່ສຸດ.

ໂທມັດ ຮອບ ຄິດວ່າ ລະບົບການປົກຄອງລັດທີ່ຈະບັນລຸຈຸດປະສົງຫລາຍທີ່ສຸດ ຄື ລະບອບສົມບູນຍາສິດທິລາດ. ເມື່ອກະສັດໄດ້ຮັບມອບອຳນາດ ໂດຍສັນຍາປະຊາຄົມແລ້ວ, ພະຍ່ອມມີອຳນາດເດັດຂາດໃນທຸກດ້ານ. ຮອບ ເຊື່ອວ່າ ກະສັດທີ່ສະຫລາດຍ່ອມບໍ່ເຮັດໃນສິ່ງໃດ ທີ່ເປັນການບັ່ນທອນຄວາມໝັ້ນຄົງ ແລະອຳນາດຈັກກະພັດຂອງພະອົງໄດ້. ຮອບ ເນັ້ນໜັກວ່າ ການກະບົດບໍ່ວ່າດ້ວຍເຫດຜົນໃດໆ ຖືວ່າຜິດສະເໝີ ເພາະຈະເປັນເຫດໃຫ້ກະສັດບໍ່ອາດປະຕິບັດໜ້າທີ່ໄດ້ສະດວກຕາມໃຈ.

## 3. ຈອນລັອກ (John Lock ຄ.ສ 1632-1704)

ຈອນລັອກ ເມື່ອອາຍຸໄດ້ 44 ປີ ເສັ້ນທາງທາງການເມືອງຂອງລັອກ ສະແດງອອກໃນໜັງສືເລື່ອງ ຊື່ The Two Treatises of Civil Government, ຄ.ສ 1690 ເຊິ່ງລັອກໄດ້ສະເໜີແນະໃຫ້ມີການປະນີປະນອມອຳນາດລະຫວ່າງກະສັດ ກັບອຳນາດລັດຖະສະພາ ຄືໃຫ້ບໍລິຫານປະເທດ ໂດຍຄະນະລັດຖະບານ ໃຫ້ກະສັດເປັນປະມຸກຂອງປະເທດ ແລະປົກຄອງປະເທດ, ໃຊ້ອຳນາດຕາມທີ່ໄດ້ຮັບມອບໝາຍຈາກລັດຖະສະພາ, ດ້ວຍເຫດຜົນວ່າ ມະນຸດເຮົາເກີດມາມີສິດທິໃນຊີວິດຊັບສິນ ແລະເສລີພາບສ່ວນຕົວລົງແດ່. ການຍິນຍອມປະຕິບັດແບບນີ້ ຮຽກວ່າ: "ສັນຍາປະຊາຄົມ".

ຄຳສອນຂອງຈອນລັອກ ໄດ້ປຸກລະດົມຊາວອັງກິດ ໃຫ້ສຳນຶກເຖິງສິດທິເສລີພາບຂອງຕົນຢ່າງກວ້າງຂວາງ. ສັງຄົມຊຶ່ງບັນລັງ ເຊິ່ງເກີດຂຶ້ນໃນໄລຍະນັ້ນ ຄືສົງຄາມລະຫວ່າງພະເຈົ້າເຈມທີ II ກັບພະເຈົ້າວິນລຽມທີ III ມີສ່ວນຊ່ວຍຊຸກຍູ້ໃຫ້ຊາວອັງກິດຕຶກຕອງຄຳສອນຂອງລັອກຢ່າງໜັກໜ່ວງ ແລະຮຽກຮ້ອງໃຫ້ລັດຖະບານຈັດລະບຽບການເມືອງການປົກຄອງຈົນເປັນຜົນສຳເລັດ.

## 4. ມອງເຕສກິເອີ (Baron de Montesquieu, ຄ.ສ 1689-1755)

ມອງເຕ ມັກໄປທ່ຽວຫລາຍປະເທດ ເພື່ອສະແຫວງຫາປະສົບການ ແລະຄວາມຮູ້ຈາກບຸກຄົນຕ່າງໆ ມີຄວາມສົນໃຈໃນການປົກຄອງລະບົບປະຊາທິປະໄຕ ໂດຍມີກະສັດເປັນປະມຸກ. ເມື່ອທ່ານກັບປະເທດຝຣັ່ງແລ້ວ [illegible] ຂອງພະເຈົ້າຫລຸຍທີ XV ເຊິ່ງປົກຄອງປະເທດຕາມລະບົບພະລາຊາ[illegible]

ມອງແຕ່ບໍ່ຍອມຮັບວ່າ ລະບອບໃດດີທີ່ສຸດ ເພາະຄິດວ່າເຈົ້ານາຍຜູ້ປົກຄອງກໍຄືຄວາມສະຫງົບສຸກຂອງສັງຄົມ, ແຕ່ວ່າສັງຄົມມີຄຸນລັກສະນະ ແລະຄວາມຕ້ອງການຕ່າງບໍ່ຄືກັນ(ເຈຕະນາລົມແຫ່ງກົດໝາຍ L' Esprit des Lois).

ສຳລັບສັງຄົມທີ່ສະມາຊິກມີການສຶກສາ ພໍທີ່ຈະຮັບຜິດຊອບການເມືອງຢ່າງທົ່ວເຖິງ, ການປົກຄອງລະບອບປະຊາທິປະໄຕ ໂດຍມີກະສັດເປັນປະມຸກ ຈະເປັນໄປເຈຕະນາລົມຂອງກົດໝາຍໄດ້ດີທີ່ສຸດ ຄືກະສັດທີ່ງເປັນປະມຸກຂອງປະເທດ ໂດຍຮັບສັນຍາປະຊາຄົມ ໂດຍໄດ້ຮັບມອບໝາຍເປັນ 3 ທາງ ຄື : ອຳນາດນິຕິບັນຍັດທາງລັດຖະສະພາ, ອຳນາດບໍລິຫານ ແລະອຳນາດຕຸລາການທາງສານ.

ຂໍ້ສະເໜີຂອງມອງເຕ ໃຫ້ແຍກການໃຊ້ອະທິປະໄຕ 3 ຝ່າຍ ແລະໃຫ້ອຳນາດຢ່າງມີອິດສະຫລະຕໍ່ກັນ, ມີອິດທິພົນຕໍ່ລະບອບການປົກຄອງປະຊາທິປະໄຕ ໂດຍສະໄໝຕໍ່ມາ. ຕົວຢ່າງເຊັ່ນ ຫລັກການປົກຄອງແບ່ງອຳນາດໃນລະບອບຂອງສະຫາລັດອາເມຣິກາເປັນຕົ້ນ.

## 5. ຍັງ ຍາດຄ໌ ຣຸດໂຊ (Jean-Jacques Rousseau, ຄ.ສ 1712-1778)

ທ່ານກຳເນີດໃນກຸງເຈນເນວາ ເຫັນຄຳປະກາດຂອງບັນດິດສະຖານແຫ່ງດີຊົງ ຊັກຊວນໃຫ້ຂຽນເລື່ອງ(ບົດຄວາມ) ເຂົ້າປະກວດໃນຫົວຂໍ້ວ່າ "ຄວາມຈະເລີນກ້າວໜ້າຂອງສິລະປະວິທະຍາການ ໃຫ້ສິນທຳດີຂຶ້ນຫລືເສື່ອມລົງ" ເຊິ່ງທາງຄະນະກຳມະການໃຫ້ຕອບວ່າ ທຳໃຫ້ດີຂຶ້ນຕາມທັດສະນະຂອງຂະບວນການພຸດທິປັນຍາ, ແຕ່ຣຸດໂຊທຳໃຫ້ເສື່ອມລົງ. ທາງຄະນະກຳມະການຮູ້ສຶກປະທັບໃຈໃນຄວາມຄິດ ຕະຫລອດຈິນໂວຫານ ແລະຕົວຢ່າງຈາກປະສົບການຕົວຈິງ ຈຶ່ງປະກາດໃຫ້ຜູ້ໄດ້ຮັບລາງວັນ, ເຮັດໃຫ້ຣຸດໂຊມີຊື່ສຽງທັນທີ ແລະມີຜູ້ສົນໃຈຢາກຮູ້ຄວາມຄິດຂອງທ່ານຕໍ່ໄປ. ໜັງສືເລື່ອງທີ່ສຳຄັນ 2 ເຫລັ້ມ ຂຽນເມື່ອອາຍຸ 50 ປີ ຄື ເອີມີວ(Emile) ແລະສັນຍາປະຊາຄົມ(Social Contract) ເຊິ່ງໂຈມຕີອົງກອນ ແລະສະຖາບັນທຸກຮູບແບບໃນຂະນະນັ້ນວ່າ ເຮັດໃຫ້ຈິດໃຈຂອງມະນຸດເສື່ອມ ແລະຊີ້ໃຫ້ເຫັນວ່າມະນຸດຕ້ອງຢູ່ຮ່ວມກັນໃນສັງຄົມໂດຍຈຳເປັນ ເພາະບໍ່ມີທາງສ່ຽງ ແລະຈະສ່ຽງກໍບໍ່ໄດ້, ຈະພໍໃຈຫລືບໍ່ພໍໃຈກໍຕ້ອງຢູ່. ສັນຍາປະຊາຄົມ ເຊິ່ງມີແຕ່ພຽງສົມມຸດ, ບໍ່ມີຕົວຈິງ. ໃນການປົກຄອງລະບອບການປົກຄອງໃດທີ່ຄ້ຳປະກັນເຈດຈຳນົງທົ່ວໄປໄດ້ດີທີ່ສຸດ ກໍຍ່ອມເປັນຂະບວນການປົກຄອງທີ່ດີທີ່ສຸດ.

ຣຸດໂຊ ຄິດວ່າ ມະຕິສ່ວນຫລາຍຈະຕ້ອງຕົກໄປ, ປະຊາທິປະໄຕແບບຣຸດໂຊນັ້ນ ມະຕິສ່ວນຫລາຍຈະທຳລາຍຄົນກຸ່ມນ້ອຍ ໂດຍວິທີລົງມະຕິບໍ່ໄດ້ ຫລືທຳລາຍບຸກຄົນດຽວກໍບໍ່ໄດ້ ເພາະເປັນມະຕິຂັດກັບເຈດຈຳນົງທົ່ວໄປ ຕ້ອງຖືວ່າມະຕິນັ້ນໃຊ້ບັງຄັບບໍ່ໄດ້ ແລະນຳມາປະຕິບັດບໍ່ໄດ້, ແຕ່ບັນຫາຈະເກີດຂຶ້ນມາວ່າ ຫາກບໍ່ຟັງມະຕິສ່ວນຫລາຍແລ້ວ ໃຜຈະເປັນຜູ້ກຳນົດວ່າ ເຈດຈຳນົງທົ່ວໄປແມ່ນຫຍັງ, ແລະໃຜຈະເປັນຜູ້ຕັດສິນວ່າ ເມື່ອສຽງສ່ວນຫລາຍຈະຂັດກັບເຈດຈຳນົງທົ່ວໄປ ແລະໃຜຈະເປັນຜູ້ບັງຄັບໃຫ້ມະຕິສ່ວນຫລາຍອະນຸໂລມຕາມເຈດຈຳນົງທົ່ວໄປ.

ກ່ຽວກັບສັນຍາປະຊາຄົມທີ່ໂຫມັດກ່າວມານັ້ນ ຣຸດໂຊບໍ່ເຫັນດີນຳທີ່ວ່າ ມະນຸດແຕ່ລະຄົນຈະຕ້ອງມອບສັນຍາປະຊາຄົມແກ່ກະສັດ ຫລືປະມຸກຂອງສັງຄົມ ໂດຍຈຳເປັນຕາມກົດທຳມະຊາດ, ແຕ່ຣຸດໂຊຄິດວ່າ ມະນຸດທຸກຄົນອາດຈະຢູ່ໂດດດ່ຽວ, ບໍ່ເຂົ້າສັງຄົມ ແລະຣຸດໂຊຍັງໄດ້ເນັ້ນສະເໜີວ່າ ມະນຸດທຸກຄົນເກີດມາໃນສະຖານະພາບເສລີ.

## 6. ອາດຳສະມິດ(Adam Smith, ຄ.ສ 1723-1790)

ອາດຳ ເມື່ອອາຍຸ 41 ປີ ກໍໄດ້ຕິດຕາມເຈົ້ານາຍໄປທ່ອງທ່ຽວຢູໂຣບ ໄດ້ພົບ ແລະໄດ້ແລກປ່ຽນຄວາມຄິດເຫັນກັບນັກບັນດິດເສດຖະສາດທີ່ສຳຄັນຂອງຝຣັ່ງ. ເມື່ອກັບບ້ານເກີດແລ້ວຈຶ່ງກັບພັກຕົວວຽກງານທຸກຢ່າງ ເພື່ອຄົ້ນຄວ້າ ແລະຂຽນເລື່ອງຕ່າງໆເປັນເວລາ 10 ປີຈຶ່ງໄດ້ບົດວິໄຈທີ່ຊື່ວ່າ "ຄວາມມັ່ງຄັ່ງຂອງປະເທດຊາດ" (Wealth of Nation) ໃນຄ.ສ 1787.

ອາດຳສະມິດ ເຫັນດີນຳໄທມັດຣອບວ່າ ມະນຸດເຮັດໜ້າທີ່ການເໝືອນກົນຈັກ ແລະມະນຸດກໍແມ່ນເຄື່ອງກົນຈັກ, ແຕ່ເນື່ອງຈາກຄວາມສົນໃຈຂອງຄົນໜຶ່ງໆ ອາດຈະກ້າວກ່າຍຄວາມສົນໃຈຂອງບຸກຄົນອື່ນໄດ້. ດັ່ງນັ້ນ, ເຮົາຈຶ່ງມີຄວາມຮູ້ສຶກຮ່ວມກັນວ່າ ບໍ່ຄວນກ້າວກ່າຍສິດທິຂອງກັນແລະກັນ. ໃນເມື່ອທຳມະຊາດຂອງມະນຸດເປັນເຊັ່ນນີ້ ລະບອບການປົກຄອງທີ່ດີຈຶ່ງໄດ້ແກ່ລະບອບທີ່ສາມາດຕອບສະໜອງຄວາມ ຕ້ອງການດັ່ງກ່າວຂອງມະນຸດໄດ້ດີທີ່ສຸດ ໂດຍສະມິດເຫັນວ່າ ບໍ່ມີລະບອບໃດດີເທົ່າກັບລະບອບເສລີນິຍົມທາງເສດຖະກິດນັ້ນຄື:

6.1 ລັດຖະບານບໍ່ກ້າວກ່າຍຜົນປະໂຫຍດຂອງບຸກຄົນໃດໆ, ປ່ອຍໃຫ້ແຕ່ລະຄົນສະແຫວງຫາຜົນປະໂຫຍດຕາມຄວາມສົນໃຈ(ຄວາມຕ້ອງການ ແລະຄວາມຖະໜັດໃຈ) ເຊິ່ງຮຽກໜ້າທີ່ຂອງລັດຖະບານວ່າ: (Laissez-Fair).

6.2 ລັດຖະບານຈະຕ້ອງອອກກົດໝາຍປ້ອງກັນການກ້າວກ່າຍຜົນປະໂຫຍດເຊິ່ງກັນແລະກັນ ແລະຄວບຄຸມດູແລໃຫ້ເປັນໄປຕາມກົດໝາຍຢ່າງມີປະສິດທິພາບຄື ໃຫ້ມີຜູ້ສອດສ່ອງຮັກສາກົດໝາຍໃຫ້ພຽງພໍ, ຖ້າມີການລ່ວງລະເມີດຕ້ອງຈັດການລົງໂທດ ໂດຍບໍ່ມີການນະໂຍບາຍຢ່າງໃດໆເລີຍ.

6.3 ລັດຖະບານຕ້ອງດຳເນີນງານທຸລະກິດທີ່ບໍ່ເປັນການແຂ່ງຂັນກັບເອກະຊົນ, ແຕ່ຕ້ອງດຳເນີນທຸລະກິດທຸກຢ່າງທີ່ເອື້ອອຳນວຍຄວາມສະດວກ ແລະສະໜັບສະໜູນທຸລະກິດຂອງເອກະຊົນຢ່າງດີທີ່ສຸດ.

6.4 ລັດຖະບານຕ້ອງສຶກສາ ແລະສອດສ່ອງຫາວິທີຈຳແນກແຮງງານ, ເຮັດໃຫ້ພົນລະເມືອງທຸກຄົນໄດ້ທຳໜ້າທີ່ວຽກງານຕາມທີ່ຕົນມັກ ແລະຖະໜັດໃຈທີ່ສຸດ.

ອາດຳສະມິດ ເຊື່ອວ່າ ຖ້າມີການຮ່ວມມືກັນຢ່າງດີລະຫວ່າງລັດຖະບານກັບປະຊາຊົນ ດ້ວຍວິທີການຄ້າເສລີໃນທຳນອງນີ້ແລ້ວ, ປະຊາຊົນຈະມັ່ງມີສຸກຂີ, ລັດຖະບານຈະເກັບພາສີໄດ້ຫລາຍ, ມີງົບປະມານສຳລັບກິດຈະການຂອງລັດ ປະເທດຊາດກໍຈະລ່ຳລວຍເປັນເງົາຕາມຕົວ, ລັດຖະບານບໍລິການສະໜັບສະໜູນທຸລະກິດເອກະຊົນໄດ້ດີຍິ່ງຂຶ້ນ (ເອກະຊົນສາມາດຂະຫຍາຍກິດຈະການໃຫຍ່ໂຕ ແລະສະໜອງຕໍ່ກັນເຊັ່ນນີ້, ຊັບພະຍາກອນຂອງຊາດກໍນັບວັນຈະເພີ່ມພູນຍິ່ງຂຶ້ນ.

## 7. ວອນແຕ(Voltair ຄ.ສ 1694-1778)

ວອນແຕ ກຳເນີດໃນຕະກຸນຊົນຊັ້ນກາງຝຣັ່ງທີ່ກຸງປາລີ ເປັນຄົນມີຄາລົມຄົມກ້າ ແລະບໍ່ຢ້ານຫົວຜູ້ໃດ [illegible] ທີ່ເຂົາບໍ່ເຫັນພ້ອມຢູ່ສະເໝີ ດ້ວຍເຫດນີ້ເຮັດໃຫ້ວອນແຕຖືກຈອງຈຳຢູ່ຄຸກ [illegible] ໃນປີ [illegible] ແລະປີ 1725 ເມື່ອພົ້ນຈາກຄຸກບາສຕີວດອີດ [illegible] ຮັບໃຫ້ກັບຄືນສູ່ວົງການຊັ້ນສູງດັ່ງເດີມ

ລະຫວ່າງ ຄ.ສ 1726-1729 ວອນແຕ ໄປພຳນັກຢູ່ອັງກິດ ແລະກ່າວຊົມເຊີຍຊີວິດການເປັນຢູ່ຂອງຄົນອັງກິດ ແລະໃນຂະນະດຽວກັນນັ້ນ, ວອນແຕໄດ້ຂຽນເລື່ອງທີ່ເປັນການປະນາມຊີວິດທີ່ຂາດອິດສະຫລະພາບໃນຝຣັ່ງ. ດ້ວຍເຫດນີ້, ໜັງສືເຫລັ້ມດັ່ງກ່າວຈຶ່ງເປັນໜັງສືຕ້ອງຫ້າມໃນຝຣັ່ງ, ເຮັດໃຫ້ວອນແຕກຽດຊັງລັດຖະບານຝຣັ່ງຢ່າງຍິ່ງ. ດັ່ງນັ້ນ, ເຂົາຈຶ່ງເດີນທາງອອກຈາກຝຣັ່ງເພື່ອໄປຍັງປະເທດຕ່າງໆ ແລະຂຽນບົດໂຈມຕີລັດຖະບານຝຣັ່ງຢູ່ລຽນຕິດ. ເຖິງຢ່າງໃດກໍຕາມ, ໃນເວລາຕໍ່ມາວອນແຕ ໄດ້ເດີນທາງກັບຝຣັ່ງ ແລະໄດ້ຮັບນັກຂຽນປະຫວັດສາດປະຈຳລາຊະສຳນັກ. ເນື່ອງຈາກວ່າທ່ານເປັນຜູ້ໃກ້ຊິດສະໜິດສະໜົມກັບມາດາມປອມປາດູ ຜູ້ເປັນພະສະໜົມ ຄົນທີ່ຖືກໃຈກັບພະເຈົ້າຫລຸຍທີ 15 ກະສັດຝຣັ່ງໃນເວລານັ້ນ; ແຕ່ແລ້ວເນື່ອງຈາກວ່າວອນແຕເປັນຜູ້ມີສີປາກກ້າ ຕ້ອງເຮັດໃຫ້ເຂົາເຕັມໄປດ້ວຍສັດຕູ. ໃນທີ່ສຸດທ່ານກໍຕ້ອງອອກຈາກລາຊະສຳນັກ ແລະເດີນທາງໄປພຳນັກຢູ່ຕ່າງປະເທດ.

ລະຫວ່າງວອນແຕພຳນັກຢູ່ຕ່າງປະເທດ, ທ່ານໄດ້ເດີນທາງໄປແຄວັນປຣັດເຊຍໃນ ຄ.ສ 1750 ຕາມຄຳເຊີນຂອງພະເຈົ້າເຟດເດີລິກ ທີ II ເຊິ່ງພະອົງພໍໃຈໃນຜົນງານຂອງວອນແຕທີ່ສຸດ. ເມື່ອວອນແຕກັບໄປຍັງກຸງປາລີແລ້ວ ກໍມີຖານະຄວາມເປັນຢູ່ທີ່ລ້ຳລວຍ ເນື່ອງຈາກມີລາຍໄດ້ຈາກການອະນຸຍາດພິມບົດລະຄອນ ແລະບົດປະພັນຂອງເຂົາທັງໃນຝຣັ່ງ ແລະຕ່າງປະເທດ.

ຜົນງານການຂຽນວອນແຕທີ່ໃຊ້ເວລາເຖິງ 64 ປີນັ້ນ. ເມື່ອພິມເປັນຮູບເຫລັ້ມແລ້ວໄດ້ເຖິງ 70 ເຫຼັ້ມໃຫຍ່ໆ. ຜົນງານການຂຽນລວມມີ ບົດລະຄອນ, ບດໂຄງກອນ, ນິທານ, ປັດຊະຍາ, ປະຫວັດສາດ, ຄະນິດສາດ ແລະວິທະຍາສາດ. ບົດຂຽນສຳຄັນຄືເລື່ອງ “ແຄນດິດ” (Candide) 1755. ເລື່ອງນີ້ໃຊ້ສັບພາສາສຽດສີເປີດໜ້າກາກ ແລະໂຕ້ຖຽງລະບອບການປົກຄອງຂອງລະບອບສົມບູນຍາສິດທິລາດຂອງຝຣັ່ງ.

ດ້ານປັດຊະຍາ ເຊິ່ງເປັນທີ່ຮູ້ຈັກຂອງຄົນທັງໂລກຄື (ຈົດໝາຍປັດຊະຍາ) ເຊິ່ງໄດ້ສະແດງຄວາມຊື່ນຊົມການມີເສລີພາບທາງຄວາມຄິດຂອງຊາວອັງກິດ, ທ່ານໄດ້ຊີ້ໃຫ້ເຫັນຄວາມມີເສລີພາບທາງສາສະໜາ ແລະທາງສັງຄົມຂອງອັງກິດ. ເຖິງວ່າຈະມີຂໍ້ຂັດແຍ່ງແດ່, ແຕ່ກໍສາມາດຫາລືກັນໄດ້ຢ່າງມີອິດສະຫລະ ລວມທັງສິດທິເສລີພາບໃນການວິພາກວິຈານລັດຖະບານ ໂດຍບໍ່ຖືກຈັບກຸມ ຫລືເນລະເທດ.

ເຖິງວ່າວອນແຕບໍ່ມີຊີວິດຢູ່ໄດ້ຈົນຮອດສະໄໝການປະຕິວັດຝຣັ່ງກໍຕາມ, ແຕ່ກໍເຊື່ອວ່າ ທ່ານເປັນນັກຄິດນັກຂຽນທີ່ສຳຄັນຄົນໜຶ່ງໃນຍຸກນັ້ນ, ມີອິດທິພົນຕໍ່ການປະຕິວັດປ່ຽນແປງການປົກຄອງຝຣັ່ງ ເຊິ່ງທ່ານເອງປະຕິເສດການໃຊ້ອຳນາດຢ່າງໄຮ້ເຫດຜົນ ບໍ່ວ່າອຳນາດທາງສາສະໜາຈັກ ຫລືຂອງກະສັດ. ທ່ານຕ້ອງການໃຫ້ມະນຸດໃນສັງຄົມໄດ້ຮັບການສຶກສາກວ້າງຂວາງ, ສາມາດຕັດສິນໃຈໄດ້ດ້ວຍຕົນເອງເມື່ອຜະເຊີນກັບບັນຫາຕ່າງໆ ແລະສິ່ງສຳຄັນທີ່ສຸດຂອງວອນແຕ ຄື ຕ້ອງການໃຫ້ສັງຄົມມີການສະແດງຄວາມຄິດເຫັນໄດ້ຢ່າງເສລີ, ມີການວິພາກວິຈານຄວາມຄິດເຫັນທີ່ແຕກຕ່າງກັນໃນໝູ່ຄົນ ຫລືສັງຄົມດຽວກັນ.